# ປະຫວັດ ແລະ ມູນເຊື້ອ

## ການສຶກສາ ໃນຂົງເຂດຍອດງື່ມ - ຄັງວຽງ




ເພື່ອອະນາຄົດທີ່ສົດໃສ ແລະ ກ້າວໄກຂອງລູກຫຼານ

ຄຳເມີງ ວໍລະຈິດ 12. 10. 2010



# ປະຫວັດ ແລະມູນເຊື້ອ ການສຶກສາ ໃນເຂດຍອດງື່ມ-ຄັງວຽງ

ຈັດພິມໂດຍ: ຄຳເມິງ ວໍລະຈິດ

12/10/2010

ຄະນະຜູ້ຈັດພິມ

...............................

ຮວບຮວມຂໍ້ມູນ ຂຽນບົດ ແລະບັນນາທິການ:

ຄຳແກ້ວ ພິມມະສອນ

ຄຳອອນ ເພັດດາວເຮືອງ

ກົງເດືອນ ເນດຕະວົງ

ທົງເຫີນ ຊຸນພິທັກ

ຕີພິມ

ດວງມາລາ ຣາຊະວົງໄຊ

ສົມສະໜຸກ ຣັດຕະນະຣາສີ

ອອກແບບ-ຈັດໜ້າ

ນຸກ ນິວັດ

ຈັດພິມໂດຍ:

ຄຳເມີງ ວໍລະຈິດ ພ້ອມດ້ວຍຄອບຄົວ ແລະຍາດພີ່ນ້ອງ

ເພື່ອແຈກຢາຍໃນໂອກາດມອບ-ຮັບອາຄານຮຽນ

ໂຮງຮຽນມັດທະຍົມສຶກສາສົມບູນອິນແປງ

ເຂດຄັງວຽງ ເມືອງແປກ ແຂວງຊຽງຂວາງ

ພິມທີ່:

ໂຮງພິມ ມັນທາຕຸລາດ ນະຄອນຫຼວງວຽງຈັນ

## ສາລະບັນ ໜ້າ


- ຄຳເຫັນຂອງປ້າຄຳເມີງ ວໍລະຈິດ.......................................7
- ຄວາມເປັນມາຂອງຜູ້ສ້າງລວມ ປັບປຸງ ກວດແກ້.....................10
- ຄຳຊົມເຊີຍຂອງຄະນະບັນນາທິການ.................................12
- ຄຳເຫັນຂອງ ອາຈານຄຳແກ້ວ ພິມມະສອນ........................15
- ຄຳເຫັນຂອງ ອາຈານ ຄຳສາຍ ສຸລິເດດ..............................17
- ຄຳເຫັນຂອງທ່ານຄູ ຄຳພອງ ດາລາແສນ...........................18

- ທວນຄືນການສຶກສາ ໃນຂົງເຂດຕາແສງຄັງ ...................... 19
- ສະພາບການສຶກສາ ໃນລະຫວ່າງປີ 1997-2002............... 34
- 8 ປີແຫ່ງການພັດທະນາ................................................ 36

- ຄຳຊົມເຊີຍຂອງຄະນະເຂດຍອດງື່ມ................................. 48
- ສາວຄູ..................................................................... 52
- ຄວາມຫຼັງຝັງໃຈ ...........................................................54
- ນັກຮຽນເກົ່າ ເລົ່າຄວາມຫຼັງ........................................ .....56
- ເຂົ້າ-ຂອບໃຈ................................................ ...............61
- ລູກໃນບ້ານ ຫຼານເຂດຄັງ-ຄາຍ......................................... 62

- ຍອດງື່ມແດນງາມ.........................................................64
- ການນຳໃຊ້ຫ້ອງສະໝຸດ....................................................65
- ມາດຕາວັດແທກບູຮານ....................................................66
- ປ່າແປກ ພູພຽງ ດອກຄາຍ ແລະສາຍນ້ຳ...........................66







# ຄຳເຫັນຂອງປະທານການເຕົ້າໂຮມ ທຶນພັດທະນາໂຮງຮຽນ "ອິນແປງ" ເຂດຄັງວຽງ

.....................................

ດ້ວຍຄວາມກະຕັນຍູຕໍ່ແຜ່ນດິນຖິ່ນກຳເນີດ.
ດ້ວຍຄວາມເຄົາລົບນັບຖື ຄູບາອາຈານທີ່ໄດ້ມອບ
ຄວາມຮູ້ ໃຫ້ເປັນພື້ນຖານແກ່ຊີວິດ.
ດ້ວຍຄວາມຫ່ວງໃຍນຳອະນາຄົດຂອງລູກຫຼານ
ຜູ້ສືບທອດພາລະກິດສ້າງສາພັດທະນາປະເທດຊາດ.

ຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ກຳເນີດບົນຜືນແຜ່ນດິນທີ່ອຸດົມສົມບູນທາງທຳມະຊາດ ມີປະຫວັດສາດ ແລະວັດທະນະທຳອັນຮັ່ງມີ ສະຫງ່າງາມ ແລະເຕັມໄປດ້ວຍມູນເຊື້ອແຫ່ງອະລິຍະທຳອັນຫຼາກຫຼາຍ, ເຕັມໄປດ້ວຍການທົດສອບ ແລະທ້າທາຍຫຼາຍປະການຈາກເສິກສົງຄາມ ບໍ່ວ່າແຕ່ຍຸກສະໄໝໃດ, ແຕ່ໃນເມື່ອມີພັກນຳພາແລ້ວ ການຕໍ່ສູ້ຂອງປະຊາຊົນລາວ ກໍໄດ້ຮັບໄຊຊະນະເປັນລຳດັບມາຈົນສາມາດໄດ້ຮັບໄຊຊະນະຢ່າງສົມບູນ ແລະສະຖາປານາປະເທດ ເປັນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນປີ 1975.

ສຳລັບປະຊາຊົນຊາວຊຽງຂວາງເຮົາ ກໍໄດ້ຜະເຊີນກັບສົງຄາມທຳລາຍຢ່າງຮ້າຍກາດ ໃນບັ້ນຮົບຕ່າງໆ ທີ່ພວກຈັກກະພັດຜູ້ຮຸກຮານກໍ່ຂຶ້ນ. ຂ້າພະເຈົ້າກໍແມ່ນໜຶ່ງໃນຈຳນວນນັກຮົບປະຕິວັດ ທີ່ໄດ້ຕໍ່ສູ້ປົກປ້ອງຜືນແຜ່ນດິນ (ໃນເຄື່ອງແບບຂອງນັກຮົບເສື້ອຂາວນັ້ນຄືແພດປະຕິວັດ), ໄດ້ເຂົ້າຮ່ວມ ແລະຮັບໃຊ້ບັ້ນຮົບຕ່າງເຊັ່ນ: ບັ້ນຮົບໄອເດແອນ, ບັ້ນຮົບກູ້ກຽດ, ບັ້ນຮົບທະນົງກຽດ ແລະບັ້ນຮົບບໍ່ຕ່າວຄືນ ທີ່ພວກສັດຕູຜູ້ຮຸກຮານໄດ້ເຜົາຜານຊຽງຂວາງເຮົາໃຫ້ກາຍເປັນເຖົ່າຖ່ານ. ພໍ່ແມ່ພີ່ນ້ອງໄດ້ລົ້ມຫາຍຕາຍຈາກ, ໄດ້ພັດພາກກັນໄປຄົນລະແຫ່ງລະຫົນ, ແຕ່ຍ້ອນການຕໍ່ສູ້ປົກປ້ອງປິຕຸພູມຂອງພວກເຮົາ ແມ່ນການຕໍ່ສູ້ທີ່ເປັນທຳ ຈຶ່ງເອົາຊະນະພວກສັດຕູທຸກບັ້ນຮົບ, ໃນທີ່ສຸດກໍໄດ້ຮັບໄຊຊະນະລວມ ກັບປະຊາຊົນລາວທົ່ວປະເທດ. *(ການເປັນແພດຮັບໃຊ້ບັ້ນຮົບທີ່ດຸເດືອດນັ້ນ ຈະມີບົດເລົ່າເລື່ອງໂດຍຫຍໍ້ ໃຫ້ຜູ້ອ່ານໄດ້ຮັບຊາບໃນຫົວຂໍ້ທີ່ມີຊື່ວ່າ "ຄວາມຫຼັງຍັງຝັງໃຈ" ໃນໜ້າ 54-55)*

ພາຍໃຕ້ການນຳພາ ຂອງພັກປະຊາຊົນລາວ, ປະຕິບັດຕາມແຜນພັດທະນາເສດຖະກິດ ສັງຄົມ ຂອງລັດຖະບານວາງອອກ, ຄຽງຄູ່ກັບປະຊາຊົນລາວ ໃນທົ່ວປະເທດ ຊາວຊຽງຂວາງພວກເຮົາຜູ້ລອດລົ້ນເຫຼືອຕາຍ ຈຶ່ງໄດ້ຫຼົບລ່າວຕ່າວກັບມາຈາກທຸກສາລະທິດ ເພື່ອຟື້ນຟູເສດຖະກິດ ຊີວິດ-ສັງຄົມໃນທຸກດ້ານ, ເຮືອນຊານບ້ານຊ່ອງ, ວັດວາອາຮາມ, ໂຮງຮຽນ ໂຮງໝໍ ໄດ້ຈໍ່ຈູມ ແລະເບັ່ງບານທົ່ວຜືນແຜ່ນດິນພວນ. ສະໜໍລະພູມຮົບ ຂຸມລະເບີດ, ຂຸມຫຼົບໄພກໍຄ່ອຍໆ ລຶບຖົມໄປດ້ວຍທຳມະຊາດ, ດ້ວຍເລືອດເນື້ອເຫື່ອແຮງຂອງຊາວຊຽງຂວາງພວກເຮົາ ໃນການພັດທະນາສາທາລະນະຕ່າງໆ ເພື່ອຄວາມຍືນຍົງຄົງຕົວ, ການຢູ່ລອດ ແລະການຂະຫຍາຍຕົວຂອງການພັດທະນາ.

ເພື່ອປະກອບສ່ວນໃນການຮຳບາດແຜສົງຄາມ ແລະການສ້າງສາພັດທະນາເສດຖະກິດສັງຄົມໃນຊຽງຂວາງເວົ້າລວມ,ເວົ້າສະເພາະໃນທ້ອງຖິ່ນດິນກຳເນີດຂອງຕົນ, ຂ້າພະເຈົ້າພ້ອມດ້ວຍຄອບຄົວລູກເຕົ້າ ແລະຍາດຕິພີ່ນ້ອງຈຶ່ງໄດ້ເຕົ້າໂຮມທຶນ ຈຳນວນໜຶ່ງມາພັດທະນາໂຮງຮຽນ "ອິນແປງ"ເຂດຄັງວຽງ ຍົກລະດັບຂຶ້ນໃຫ້ມີມາດຕະຖານດີພໍສົມຄວນ ເພື່ອໃຫ້ລູກຫຼານໃນເຂດຄັງວຽງໄດ້ມີຄວາມອຸ່ນອຽນໃຈ ແລະສະດວກໃນການຮຽນ ນັບແຕ່ອະນຸບານ ເຖິງມັດທະຍົມສົມບູນ

ໃນໂອກາດນີ້ ຂ້າພະເຈົ້າ ພ້ອມດ້ວຍຄອບຄົວ ຈຶ່ງໄດ້ສ້າງປຶ້ມອະນຸສອນໄວ້ໃຫ້ໂຮງຮຽນເຂດຄັງວຽງ (ອິນແປງ) ແລະໂຮງຮຽນເຂດຍອດງື່ມ (ບ້ານຄາຍ) ຊຶ່ງເມື່ອກ່ອນນີ້ ບ້ານເມືອງຮຽກກັນວ່າ ຕາແສງຄັງ ແລະຕາແສງຄາຍ. ປຶ້ມອະນຸສອນເພື່ອການສຶກສາທັງສອງເຫຼັ້ມນີ້ ມີເນື້ອໃນສ່ອງແສງເຖິງມູນເຊື້ອ ແລະການເຕີບໃຫຍ່ຂະຫຍາຍຕົວຂອງວຽກງານການສຶກສາ ໃນທັງສອງເຂດ (ບົນດິນແດນເມືອງຄັງ).

ດັ່ງນັ້ນ ຂ້າພະເຈົ້າ ຈຶ່ງຂໍມອບປຶ້ມອະນຸສອນເພື່ອການສຶກສາ ຂອງທັງສອງເຂດໃຫ້ເປັນຂອງຂວັນແກ່ຄູອາຈານ ແລະລູກຫຼານຊາວບ້ານ ພິເສດ: ແມ່ນ ທ່ານຄູ ຄຳພວງ ດາລາແສນ ຊຶ່ງແມ່ນຄູຜູ້ທີ 4 ໃນຊີວິດການຮຽນໜັງສືຂອງຂ້າພະເຈົ້າ (ຫ້ອງ ປ. 4 ໃນປີ 1963) ເພື່ອເປັນການເທີດທູນ ຕອບແທນພະຄຸນຄູ ໃນໂອກາດສ້າງຕັ້ງໂຮງຮຽນມັດທະຍົມສຶກສາສົມບູນ ຍອດງື່ມຄົບຮອບ 17 ປີ ດ້ວຍຄວາມພາກພູມໃຈ.

ຂໍອວຍພອນໃຫ້ຄະນະຜູ້ອຳນວຍການ, ຄູອາຈານ, ທັງຜູ້ອາວຸໂສ ແລະໜຸ່ມນ້ອຍທຸກຖ້ວນໜ້າ ພ້ອມດ້ວຍລູກຫຼານນັກຮຽນ ຈົ່ງມີສຸຂະພາບເຂັ້ມແຂງ, ເປັນຄູສອນທີ່ດີ, ເປັນນັກຮຽນທີ່ຮຽນເກັ່ງ (ທັງເກັ່ງ + ທັງດີ ມີຄຸນນະທຳ) ເພື່ອຮັກສາມູນເຊື້ອຂອງໂຮງຮຽນບ້ານຄາຍ. ບ້ານຄາຍນີ້ ແມ່ນບ້ານເກີດເມືອງນອນ ຂອງລຸງ ພູມີ ວົງວິຈິດ ຜູ້ນຳທີ່ແສນເຄົາຣົບຮັກຂອງປະຊາຊົນລາວ ແລະຂອງຊາວພວນຂອງພວກເຮົາ, ເຖິງວ່າເພິ່ນໄດ້ຈາກພວກເຮົາໄປແລ້ວ, ແຕ່ເພິ່ນຍັງຝາກກຽດຕິຍົດ ຊື່ສຽງ ຄຸນງາມຄວາມດີໄວ້ໃຫ້ອະນຸຊົນຮຸ່ນຫຼັງ ພວກເຮົາຈົ່ງພ້ອມກັນຮ່ຳຮຽນເອົາແບບຢ່າງ ແລະມູນເຊື້ອອັນດີງາມຂອງເພິ່ນ ກໍຄືຂອງຊາວຊຽງຂວາງວິຣະຊົນ ແລະຂອງບັນພະບຸລຸດແຫ່ງຊາດ ເພື່ອພ້ອມກັນປົກປັກຮັກສາ ແລະພັດທະນາທ້ອງຖິ່ນຂອງຕົນໃຫ້ຈະເລີນຮຸ່ງເຮືອງ.

ຂໍອວຍພອນໃຫ້ພໍ່ແມ່ພີ່ນ້ອງທົ່ວເຂດຍອດງື່ມ ຈົ່ງມີຄວາມສຸກກາຍ ສະບາຍໃຈພ້ອມກັບລູກຫຼານ, ອະນຸລັກຮັກສາຮີດຄອງປະເພນີອັນດີງາມ ຂອງພວກເຮົາໄວ້ໃຫ້ຍືນຍົງຄົງຢູ່ຄູ່ຟ້າເມືອງພວນຕະຫຼອດໄປ. ມູນເຊື້ອຂອງໂຮງຮຽນບ້ານຄາຍ ຈົ່ງເຕີບໃຫຍ່ຂະຫຍາຍຕົວບໍ່ຢຸດຢັ້ງ

ຄຳເມີງ ວໍລະຈິດ

24 / VII



ຫ້າມຈຳໜ່າຍ



## ຄຳເຫັນຂອງຄຳອອນ ເພັດດາວເຮືອງ ຜູ້ສັງລວມ ປັບປຸງ ແລະ ກວດແກ້

ຂ້າພະເຈົ້າໄດ້ຮັບມອບໝາຍຈາກປະທານຜູ້ເຕົ້າໂຮມທຶນ ເພື່ອພັດທະນາໂຮງຮຽນອິນແປງ ເຂດຄັງວຽງໃຫ້ສ້າງປຶ້ມອະນຸສອນເພື່ອການສຶກສາ ສຳລັບແຈກຢາຍໃນໂອກາດ ມອບ-ຮັບ ກິດຈະການການພັດທະນາໂຮງຮຽນອິນແປງ ເຈົ້າພາບໄດ້ແນະນຳໃຫ້ຂ້າພະເຈົ້າຮູ້ກ່ຽວກັບປະຫວັດຫຍໍ້ຄູອາຈານຂອງເພິ່ນແຕ່ລະຄົນ, ລວມໄປເຖິງຄວາມຫຍຸ້ງຍາກ ລຳບາກໃນການຮຽນເວລາຍັງນ້ອຍ ພ້ອມທັງກຳ ລັງໃຈ ແລະສິ່ງກະຕຸກຊຸກຍູ້ໃນການ ຮຽນໃຫ້ໄດ້ຮັບຜົນສຳເລັດຂັ້ນພື້ນຖານ ແລະອື່ນໆ...ໃນນັ້ນແມ່ນໄດ້ກ່າວເຖິງທ່ານຄູ ຄຳພອງ ດາລາແສນ, ກ່າວເຖິງໂຮງຮຽນບ້ານຄາຍ ...

ດັ່ງນັ້ນວຽກຂອງຂ້າພະເຈົ້າ ຈຶ່ງເລີ່ມຕົ້ນຂຶ້ນໂດຍຕິດຕໍ່ ກັບທ່ານ ຄູ ຄຳພອງ ເພື່ອຂໍຂໍ້ມູນກ່ຽວກັບໂຮງຮຽນອິນແປງ, ໂຮງຮຽນບ້ານຄາຍ ແລະຄຳຄິດຄຳເຫັນຂອງເພິ່ນບາງດ້ານ ກ່ຽວກັບນັກຮຽນຜູ້ຂະຫຍັນພາກພຽນຄົນນີ້ (ຄຳເມິງ ວໍລະຈິດ) ທ່ານຄູ ຄຳພອງ ໄດ້ໃຫ້ຮູ້ວ່າ ເລື່ອງລາວຕ່າງໆ ກ່ຽວກັບການສຶກສາໃນເຂດນີ້ນັ້ນ ໄດ້ໃຫ້ສຳພາດ ແລະເລົ່າມາໂດຍຕະຫຼອດ ແລະຖືກບັນທຶກໄວ້ໃນ **ປຶ້ມທວນຄືນມູນເຊື້ອການສຶກສາເຂດຍອດງື່ມ-ຄັງວຽງ** ໂດຍອາຈານ ຄຳແກ້ວ ພິມມະສອນແລ້ວ.

ເມື່ອໄດ້ຍິນດັ່ງນັ້ນ ຂ້າພະເຈົ້າຈຶ່ງ ຮ້ອງຂໍໃຫ້ເພິ່ນຄົ້ນຄວ້າຫາປຶ້ມດັ່ງກ່າວ ຝາກໃຫ້ດ່ວນ. ເພິ່ນກໍຕອບສະໜອງຢ່າງມີສັດຈະ ເມື່ອປຶ້ມດັ່ງກ່າວ ໄດ້ເຄື່ອນຕົວໄປພ້ອມກັບລົດເມສາຍໜອງແຮດ-ນະຄອນຫຼວງວຽງຈັນ ຂ້າພະເຈົ້າກໍໄປຮັບເອົາຕາມການແນະນຳຂອງທ່ານຄູທາງໂທລະສັບ, ໄດ້ຮັບແລ້ວ ກໍຈົກຊອງເຫຼືອງດ້ວຍຄວາມດີໃຈ ແລະຮ້ອນໃຈ. ມັນເປັນປຶ້ມທີ່ມີປົກຂຽວ(ເຈ້ຍ A4 ພິມແບບໂຟໂຕກອບປີ) ເມື່ອເປີດອ່ານກໍໄດ້ເຫັນຊື່ຂອງອາຈານ ຄຳແກ້ວ ພິມມະສອນ ຜູ້ບັນທຶກການເລົ່າຂອງທ່ານຄູ ຄຳພອງ ດາລາແສນ ໃນໂອກາດສະເຫຼີມສະຫຼອງວັນຄູແຫ່ງຊາດຄົບຮອບ 15 ປີ ໃນວັນທີ14 ຕຸລາ ປີ 2009 ຢູ່ໂຮງຮຽນ ມັດທະຍົມສຶກສາສົມບູນໜອງເປັດ (ເຂດຍອດງື່ມ)

ຂ້າພະເຈົ້າ ຮີບກັບເມືອບ້ານ ແລ້ວກໍຕັ້ງໃຈອ່ານແຕ່ລະບົດ ແຕ່ລະຕອນທີ່ມີທັງຮູບຂາວ-ດຳປະກອບຊຶ່ງບົ່ງບອກເນື້ອໃນຂອງແຕ່ລະກິດຈະກຳຂອງໂຮງຮຽນ

ນີ້ແລ້ວຄວາມບັງເອີນ ກາຍເປັນຄວາມຄ້ອມພໍດີ....

ແຕ່ເມື່ອອ່ານໄປສຸດທ້າຍກໍ່ເຫັນໝາຍເຫດ ***ສະຫງວນລິຂະສິດ.***

ອ້າວ ! ມັນບໍ່ງ່າຍສາແລ້ວ ຈຳເປັນຕ້ອງຂໍອະນຸຍາດໄດ້ນີ້ນາ !

ຂ້າພະເຈົ້າຈຶ່ງໂທລະສັບກັບໄປຊຽງຂວາງລົບກວນຂໍເບີໂທລະສັບຂອງອາຈານ ຄຳແກ້ວ, ຈາກທ່ານຄູໃຫຍ່ ຄຳພວງ ອີກເທື່ອໜຶ່ງ. ພາຍຫຼັງການໂອ້ລົມທາງໂທລະສັບ ອາຈານ ຄຳແກ້ວ ກໍອະນຸຍາດໂດຍບອກວ່າ: ປ້າຈະເອົາຂໍ້ມູນບົດໃດ ຕອນໃດກໍໄດ້.

ຂ້າພະເຈົ້າໄດ້ນຳໃຊ້ບາງຂໍ້ມູນໃນປຶ້ມນັ້ນ ໃນການສ້າງປຶ້ມ**ອະນຸສອນເພື່ອການສຶກສາ ໂຮງຮຽນມັດທະຍົມສຶກສາສົມບູນອິນແປງ** ພ້ອມດຽວກັນກໍສຳນຶກໃນບຸນຄຸນຂອງທ່ານຄູ ຄຳພວງ ກໍຄື ອາຈານຄຳແກ້ວ ທີ່ໄດ້ຊ່ວຍໃຫ້ຕົນໄດ້ສຳເລັດໜ້າທີ່ ພ້ອມທັງພິຈາລະນາເຫັນວ່າ **ປຶ້ມທວນຄືນມູນເຊື້ອ ການສຶກສາເຂດຍອດງື່ມ-ຄັງວຽງ** ນັ້ນເປັນສິ່ງສຳຄັນ ແລະມີປະໂຫຍດຫຼາຍ. ດັ່ງນັ້ນຂ້າພະເຈົ້າຈຶ່ງ ນຳປຶ້ມດັ່ງກ່າວນັ້ນ ໄປຫາປະທານຜູ້ເຖົ້າໂຮມທຶນພັດທະນາໂຮງຮຽນອິນແປງ ຊຶ່ງເປັນຜູ້ຊີ້ນຳ ແລະສະເໜີຂໍຄຳເຫັນນຳເພີ່ມວ່າ ຢາກປັບປຸງເນື້ອໃນ ຮູບພາບ ຮູບແບບ ແລະຈັດພິມປຶ້ມນີ້ໃໝ່ໃຫ້ເປັນເຫຼັ້ມ ແລະມີສີສັນຈົບງາມກວ່າເກົ່າ ເພື່ອໃຫ້ຄຽງຄູ່ກັບປຶ້ມອະນຸສອນເພື່ອການສຶກສາ ໂຮງຮຽນອິນແປງ. ຜູ້ຊີ້ນຳກໍຕອບເຫັນດີ ທັນທີດ້ວຍຄວາມພູມໃຈ.

ດ້ວຍຄວາມດີໃຈ ຂ້າພະເຈົ້າໄດ້ຟ້າວໂທລະສັບແຈ້ງກັບໄປຫາທ່ານຄູ ຄຳພວງ ແລະອາຈານຄຳແກ້ວໃຫ້ຊາບວ່າ: ນັກຮຽນເກົ່າ ຂອງໂຮງຮຽນບ້ານຄາຍມີຄວາມປະສົງຈະປັບປຸງຈັດພິມປຶ້ມນັ້ນຄືນໃໝ່ ທາງຄູອາຈານ ມ.ສ ໜອງເປັດຈະເຫັນດີບໍ່ ? ທ່ານຄູເກົ່າກໍໃຫ້ຄຳຕອບ ພ້ອມອຸທານ ແລະຂອບໃຈຕໍ່ນັກຮຽນເກົ່າດ້ວຍຄວາມປາບປື້ມຕື່ມກຳລັງໃຈ ເພາະບໍ່ເຄີຍຄິດ ບໍ່ເຄີຍຝັນມາກ່ອນວ່າຈະເກີດເປັນຄືແນວນີ້.

ຍ້ອນເຫດຜົນຂ້າງເທິງນີ້ ຂ້າພະເຈົ້າຈຶ່ງໄດ້ ພ້ອມກັບຄະນະບັນນາທິການປຶ້ມອະນຸສອນເພື່ອການສຶກສາ ຈຶ່ງຄົ້ນຄວ້າປັບປຸງ ຂໍ້ມູນຄືນໃໝ່ ໂດຍຍຶດຖືຂໍ້ມູນເກົ່າໃຫ້ສອດຄ່ອງກັບຂໍ້ມູນການ ຂະຫຍາຍຕົວຂອງທາງໂຮງຮຽນອິນແປງ ເພາະທັງສອງໂຮງຮຽນແມ່ນມີຄວາມສະ ໜິດຕິດພັນກັນ ນັກຮຽນຂອງໂຮງຮຽນອິນແປງ ກໍໄດ້ມາຮຽນຢູ່ໂຮງຮຽນບ້ານຄາຍ. ໂຮງຮຽນບ້ານຄາຍໃນເມື່ອກ່ອນ ກໍກາຍມາເປັນໂຮງຮຽນໜອງເປັດໃນປັດຈຸບັນ ນັກຮຽນ ຈຳນວນໜຶ່ງກໍໄດ້ຮັບການສຶກສາຈາກທັງສອງໂຮງຮຽນ ເນື້ອໃນຂອງປຶ້ມທັງສອງກໍຈຶ່ງສອດຄ່ອງ ແລະຕິດພັນກັນ

ແຕ່ເນື່ອງຈາກ ຄະນະພວກເຮົາມີເວລາຈຳກັດ ໃນການເກັບກຳຂໍ້ມູນ ແລະຮູບພາບ ສະນັ້ນຈຶ່ງບໍ່ທັນໄດ້ຄຳເຫັນທີ່ອຸດົມສົມບູນ ແລະຄົບຖ້ວນໃສ່ໃນປຶ້ມອະນຸສອນແຕ່ລະເຫຼັ້ມ. ດັ່ງນັ້ນຫາກຂໍ້ມູນ ແລະເນື້ອໃນຂອງປຶ້ມທັງສອງຫົວຍັງບໍ່ທັນກົງກັນ ຫຼືຄາດເຄື່ອນປະການໃດ ຄະນະຜູ້ຮຽບຮຽງ ຈັດພິມກໍຂໍອະໄພມາ ນະທີ່ນີ້, ແລະຂໍໃຫ້ທ່ານຜູ້ອ່ານ ທ່ານຜູ້ຮູ້ຈົ່ງໄດ້ຊ່ວຍປັບປຸງໃຫ້ສົມບູນຂຶ້ນໄປເທື່ອລະກ້າວເພື່ອໃຫ້ລູກຫຼານຮຸ່ນຕໍ່ໆ ໄປໄດ້ເຂົ້າໃຈເຖິງຄວາມເປັນຈິງ ຂອງໂຮງຮຽນທັງສອງແຫ່ງ. ຂໍໃຫ້ຖືວ່ານີ້ເປັນບາດກ້າວໜຶ່ງຂອງການເກັບກຳຂໍ້ມູນ ເພື່ອລໍຖ້າຮັບການປັບປຸງໃນຂັ້ນຕໍ່ໄປໃຫ້ສົມບູນກວ່າເກົ່າ.



# ຄຳຊົມເຊີຍ ຈາກຄະນະບັນນາທິການ ປື້ມອະນຸສອນເພື່ອການສຶກສາເຂດຍອດງື່ມ

**ໂດຍ: ອາຈານ ກົງເດືອນ ເນດຕະວົງ**

.....................................

ໜັງສືອະນຸສອນ"ປະຫວັດ ແລະມູນເຊື້ອການສຶກສາ ຂອງເຂດຍອດງື່ມ-ຄັງວຽງ ເມືອງແປກແຂວງຊຽງຂວາງຫົວນີ້ ເປັນຜົນງານທີ່ຮັບໂຮມເອົາຄວາມຜູກພັນ ແລະຄວາມຮັບຜິດຊອບໃນຖານະທີ່ເປັນຄູອາຈານໃນເມື່ອກ່ອນ ແລະປັດຈຸບັນ, ທັງເປັນປະຫວັດຫຍໍ້ຕົ້ນກຳເນີດ ຂອງໂຮງຮຽນມັດທະຍົມແຫ່ງນີ້.

ດ້ວຍຄວາມເອົາໃຈໃສ່ ຄົ້ນຄວ້າສືບຫາວຫາຂໍ້ມູນ ຈາກອະດີດມາປະສົມປະສານກັບຄວາມກະຕືລືລົ້ນ ແລະຫຼາກຫຼາຍແນວຄິດ ອັນສ້າງສັນຂອງຄູອາຈານຜູ້ສືບທອດ, ຈຶ່ງໄດ້ສ້າງເປັນເຫຼັ້ມປື້ມທີ່ອຸດົມສົມບູນຂຶ້ນມາສູ່ສາຍຕາຂອງຍາດຕິພີ່ນ້ອງ, ພໍ່ ແມ່, ຄູອາຈານ ແລະບັນດານ້ອງນັກຮຽນ. ຂ້າພະເຈົ້າເຊື່ອໝັ້ນວ່າປື້ມນີ້ ເປັນຫົວທຳອິດທີ່ມີການຈັດພິມຢ່າງສົມບູນແບບໃນ ສປປ. ລາວ ເມື່ອເວົ້າເຖິງ"ການຂຽນປະຫວັດຫຍໍ້ຂອງໂຮງຮຽນ"

ຕະຫຼອດສາມທົດສະວັດທີ່ຜ່ານມາ ທີ່ຂ້າພະເຈົ້າ ໄດ້ຮັບພາລະວຽກງານສົ່ງເສີມການອ່ານແຫ່ງຊາດ ໂດຍລິເລີ່ມຈາກກະຊວງສຶກສາທິການ ທີ່ເຄີຍສັງກັດມາກ່ອນ ແລະຫໍສະໝຸດແຫ່ງຊາດໃນເວລາຕໍ່ມາ. ສຳລັບການປຸກລະດົມ ເພື່ອຂຽນປື້ມປະຫວັດໂຮງຮຽນ ແມ່ນມີແນວຄິດລິເລີ່ມມານານພໍສົມຄວນແລ້ວ ໃນສະໄໝຊຸມປີ 1980 ທ່ານຫົວໜ້າກົມສາມັນສຶກສາ"ບຸນທອງວິໄຊສັກ" ໄດ້ໃຫ້ຂ້າພະເຈົ້າແລະຄະນະນັກວິຊາການຫໍສະໝຸດແຫ່ງຊາດລົງໄປເຖິງໂຮງຮຽນສາມັນສຶກສາ ໃນຂອບເຂດທົ່ວປະເທດ(ເຂດນີ້ກໍໄດ້ມາເຖິງແລ້ວ)ປຸກລະດົມບັນດາຄູອາຈານ ໂດຍສະເພາະຜູ້ອຳນວຍການໂຮງຮຽນໃຫ້ເອົາໃຈໃສ່ສຳຫຼວດ ເກັບກຳຂໍ້ມູນ ແລະຂຽນປະຫວັດຫຍໍ້ໂຮງຮຽນຂອງຕົນໄວ້ເປັນລາຍລັກອັກສອນ ເພື່ອເປັນແຫຼ່ງຂໍ້ມູນ ໄດ້ນຳໃຊ້ໃຫ້ເກີດປະໂຫຍດໃນດ້ານຕ່າງໆ ລວມທັງປົກປ້ອງຂອບເຂດດິນແດນໂຮງຮຽນ ສະກັດກັ້ນການບຸກລຸກຂອງຄົນຜູ້ບໍ່ຫວັງດີ.(ທັງນີ້ຍ້ອນວ່າ ໃນເມື່ອກ່ອນຫຼາຍແຫ່ງ ກໍເຄີຍມີບັນຫາບຸກລຸກເຂດແດນໂຮງຮຽນ,ຈົນໂຮງຮຽນບໍ່ເຫຼືອຮອດເດີ່ນໃຫ້ນັກຮຽນຝຶກແອບຫຼິ້ນກິລາ,ມີແຕ່ອາຄານຮຽນເທົ່ານັ້ນ). ຂ້າພະເຈົ້າຄິດວ່າ ມາເຖິງມື້ນີ້ ພວກເພິ່ນກໍຄົງເຮັດແດ່ແລ້ວ ສະເພາະໃຜລາວ...ແຕ່ຄົງຈະບໍ່ມີໂອກາດໄດ້ຈັດພິມເປັນເຫຼັ້ມສົມບູນແບບນີ້.

ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ແລະຂໍສັນລະເສີນປ້າ ຄຳເມີງ ວໍລະຈິດ ຜູ້ເພິ່ນໄດ້ອຸທິດຊັບສິນສ່ວນຕົວເພື່ອຈັດພິມ ປື້ມອະນຸສອນປະຫວັດຫຍໍ້ໂຮງຮຽນເຫຼັ້ມນີ້ ຊຶ່ງນັບວ່າເປັນໂອກາດທີ່ເໝາະສົມ ເພື່ອໂຮງຮຽນແຫ່ງອື່ນໆໃນທົ່ວປະເທດ ຈະຖືເອົາເປັນຕົ້ນແບບ ໃນການສ້າງປະຫວັດໂຮງຮຽນຂອງຕົນຕໍ່ໆ ໄປ.

ອີກເທື່ອໜຶ່ງຂ້າພະເຈົ້າຂໍສະແດງຄວາມ ຂອບໃຈ ປ້າຄຳເມີງ ວໍລະຈິດ ທີ່ໄດ້ໃຫ້ໂອກາດແກ່ຂ້າພະເຈົ້າໄດ້ຫວນຄືນກັບມາຢ້ຽມຢາມໂຮງຮຽນຍອດງື່ມແຫ່ງນີ້ ແລະໄດ້ພົບປະກັບບັນດາຄູອາຈານ ໂດຍສະເພາະຄູຜູ້ທີ່ຮັບຜິດຊອບ "ຫ້ອງຮັກອ່ານ" ຂອງສະມາຄົມຮ່ວມນ້ຳໃຈເດັກນ້ອຍລາວ (ALC). ຊຶ່ງໂຮງຮຽນຫຼັງນີ້ກໍເປັນສະມາຊິກຂອງໂຄງການສົ່ງເສີມການອ່ານແຫ່ງຊາດ ອີກດ້ວຍ.

ໂຮງຮຽນມັດທະຍົມສຶກສາຍອດງື່ມ ບ້ານໜອງເປັດນີ້ ຍັງມີຈຸດພິເສດອັນເດັ່ນເພາະເປັນໂຮງຮຽນມູນລະປະຖົມໃນເມື່ອກ່ອນຕັ້ງຢູ່ບ້ານຄາຍ ແລະຄັ້ງໜຶ່ງສະໄໝສົກຮຽນ 1962-63 ປ້າຄຳເມີງ ວໍລະຈິດ ໃຊ້ຊີວິດໃນເຍົາໄວ "ເດັກນັກຮຽນປະຖົມ ປ.4" ຫຼືວ່າຫ້ອງທີສອງນ້ອຍ ມາເຂົ້າຮຽນຢູ່ໂຮງຮຽນບ້ານຄາຍແຫ່ງນີ້ດ້ວຍ.

ສະໄໝທີ່ປ້າເພິ່ນຮຽນຮອດຫ້ອງທີສອງນ້ອຍ...ຈາກນັ້ນວີ່ແວວຂອງສົງຄາມກໍເລີ່ມຄຸກຄາມ ເຮັດໃຫ້ປ້າຕ້ອງຍ້າຍອອກຈາກໂຮງຮຽນຫຼັງນີ້ ແລ້ວກ້າວເຂົ້າສູ່ການປະຕິວັດ ດ້ວຍການຮຽນແພດທະຫານ. ໂຮງຮຽນແຫ່ງນີ້ເປັນບ່ອນທີ່ໃຫ້ທັງຄວາມຮູ້ ແລະຄວາມບຸກບືນດ້ວຍຄວາມທໍລະຫົດ ອົດທົນ ດ້ວຍການທົນຍ່າງຈາກບ້ານສີຄູນເຂດຄັງວຽງມາເຂົ້າໂຮງຮຽນຢູ່ບ້ານຄາຍ.ຫວນຄືນຄວາມຫຼັງຂອງປ້າທີ່ເຄີຍຮ່ວມຮຽນຮ່ວມຄິດຮ່ວມເຄື່ອນໄຫວກັບບັນດາ ໝູ່ຄູ່ທັງ ຍິງ-ຊາຍ ໃນໂຮງຮຽນຫຼັງນີ້. ມັນຍັງຈາລຶກໄວ້ໃນຄວາມຊົງຈຳຂອງປ້າຄຳເມີງ ວໍລະຈິດ ຕະຫຼອດມາ ແລະມາໃນວັນນີ້ເພິ່ນໄດ້ມີໂອກາດມາປັບປຸງໂຮງຮຽນມັດທະຍົມສຶກສາສົມບູນອິນແປງ,ປ້າກໍ່ບໍ່ໄດ້ລືມໂຮງຮຽນຍອດງື່ມ, ປ້າຈຶ່ງໄດ້ຈັດພິມປື້ມອະນຸສອນ ປະຫວັດໂຮງຮຽນມັດທະຍົມສຶກສາໜອງເປັດນີ້ໃຫ້ສືບທອດເຈດຕະນາລົມຂອງບັນດາຄູຜູ້ເພິ່ນພົ້ນກະສຽນອາຍຸລັດຖະກອນ ແລະບັນດາຄູທີ່ຍັງສືບທອດຕໍ່ພາລະກິດໄວ້ເປັນອະນຸສອນ ແຫ່ງພູມປັນຍາ ໃຫ້ລູກຫຼານອ່ານຕໍ່ໄປ

ຂໍສະແດງຄວາມຊົມເຊີຍນ້ຳໃຈຂອງປ້າ ແລະບັນດາຄູອາຈານທັງໝົດທີ່ຄິດຄົ້ນຄວ້າເກັບກຳຂໍ້ມູນ ແລະຂຽນປະຫວັດໂຮງຮຽນຈົນໄດ້ກາຍເປັນປື້ມຫົວນີ້ຂຶ້ນມາສູ່ສາຍຕາຂອງມວນມະຫາຊົນ.

# ຫວນຄືນການສຶກສາ

## ໃນຂົງເຂດຍອດງື່ມ-ຄັງວຽງ




ຂຽນແລະຮຽບຮຽງ: ຄຳແກ້ວ ພິມມະສອນ

ຄຳພອງ ດາລາແສນ

ແຕ້ມຮູບປະກອບ: ດວງລິຍາ ຢ່າງ

ຖ່າຍຮູບ: ຢ່າວີ້

ອອກແບບຄອມພິວເຕີ:ຄຳແກ້ວ ພິມມະສອນ (ສະຫງວນລິຄະສິດ)

2010



## ຄຳເຫັນອາຈານ ຄຳແກ້ວ ພົມມະສອນ ຜູ້ເກັບກຳ ຮວບຮວມຂໍ້ມູນ ພື້ນຖານ

.............................................

ຂ້າພະເຈົ້າ ຢູ່ບ້ານຄັງວຽງ ເມືອງແປກ ແຂວງຊຽງຂວາງ ຮຽນຈົບຈາກວິທະຍາໄລຄູຊັ້ນສູງຄັງໄຂສາຍທຳມະຊາດ ປັດຈຸບັນສອນວິຊາຄະນິດສາດ ມ.4 ແລະເປັນຮອງຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາສົມບູນ ໜອງເປັດ ເມືອງແປກ ແຂວງຊຽງຂວາງ

ເມື່ອໄດ້ຟັງທ່ານຄູ ຄຳພວງ ດາລາແສນ ກ່າວປາຖະກະຖາ ຫວນຄືນເລື່ອງ "ປະຫວັດຄວາມເປັນມາ ແລະມູນເຊື້ອການສຶກສາໃນຂົງເຂດຍອດງື່ມ ຄັງວຽງ" ໃນວັນທີ 14 ຕຸລາ 2009 ເນື່ອງໃນໂອກາດສະເຫຼີມສະຫຼອງວັນຄູແຫ່ງຊາດ (7 ຕຸລາ) ຄົບຮອບ 15 ປີ ທີ່ໂຮງຮຽນມັດທະຍົມສຶກສາ ໜອງເປັດແລ້ວ ຂ້າພະເຈົ້າເຫັນວ່າ ຄວາມເປັນມາ ແລະມູນເຊື້ອດັ່ງກ່າວ ນັ້ນມີຄວາມໝາຍອັນເລິກເຊິ່ງ ແລະເປັນບົດຮຽນອັນລ້ຳເລີດທີ່ຄູອາຈານ ແລະນັກຮຽນໃນຮຸ່ນປັດຈຸບັນ ແລະອະນາຄົດສົມຄວນທີ່ຈະຮຽນຮູ້ປົກປັກຮັກສາ ແລະສືບທອດໄວ້ຕະຫຼອດໄປ ທັງນີ້ຍ້ອນວ່າ ປະຫວັດສາດ ແມ່ນປະກົດການທີ່ສຳຄັນໃນອະດີດຜ່ານມາ ຈະແມ່ນການຕໍ່ສູ້ກູ້ຊາດ ການພັດທະນາເສດຖະກິດ ສັງຄົມ ຫຼື ການພັດທະນາຊັບພະຍາກອນມະນຸດກໍລ້ວນແຕ່ຄວນບັນທຶກໄວ້.

ຍ້ອນແນວນັ້ນ ໃນຖານະຂອງຄູສອນຜູ້ໜຶ່ງ ແລະໃນຖານະຜູ້ບໍລິຫານການສຶກສາ ທີ່ມີໜ້າທີ່ຕ້ອງຮັບຜິດຊອບ ຂ້າພະເຈົ້າຈຶ່ງໄດ້ສັງລວມເອກະສານຂໍ້ມູນປະຫວັດສາດການສຶກສາຂອງເຂດຍອດງື່ມ-ຄັງວຽງ ເທົ່າທີ່ສາມາດຊອກຫາໄດ້ ແລ້ວຈັດພິມໂດຍໃຫ້ຊື່ວ່າ **ຫວນຄືນການສຶກສາ ໃນຂົງເຂດຍອດງື່ມ-ຄັງວຽງ** ເພື່ອເກັບມ້ຽນໄວ້ເປັນຖານຂໍ້ມູນຂອງໂຮງຮຽນເທົ່ານັ້ນ ແຕ່ແລ້ວ...ຂ້າພະເຈົ້າກໍຮູ້ສຶກຕື້ນຕັນໃຈ ແລະກະຕືລືລົ້ນທີ່ສຸດ ເມື່ອ**ປ້າຄຳເມິງ ວໍລະຈິດ** ແລະ**ປ້າຄຳອອນ ເພັດດາວເຮືອງ** ໄດ້ມາພົບເຫັນເອກະສານນັ້ນແລ້ວ ພວກເພິ່ນທັງສອງເຫັນວ່າ ມັນເປັນປະຫວັດມູນເຊື້ອອັນດີງາມ ຊຶ່ງບໍ່ພຽງແຕ່ມີຄຸນຄ່າ ຄວາມໝາຍຕໍ່ໂຮງຮຽນໜອງເປັດທໍ່ນັ້ນ ແຕ່ຍັງມີຄວາມໝາຍຕໍ່ການສຶກສາ ແລະສັງຄົມໂດຍລວມອີກດ້ວຍ ຈຶ່ງສົມຄວນເຜີຍແຜ່ອອກສູ່ສາຍຕາມະຫາຊົນ ເພື່ອໃຫ້ສັງຄົມຮັບຮູ້ນຳ ພວກເພິ່ນຈຶ່ງໄດ້ໃຫ້ການອຸປະຖຳ ແລະດຳເນີນການຈັດພິມອອກມາເປັນປຶ້ມນ້ອຍທີ່ຢູ່ໃນມືຂອງທ່ານ.

ເນື້ອໃນສ່ວນໜຶ່ງຂອງປຶ້ມນັ້ນ ສັງລວມມາຈາກບົດ ປາຖະກະຖາຂອງທ່ານ ຄູ ຄຳພວງ ດາລາແສນ ພະນັກງານຄູບຳນານ ປະຈຳເຂດຍອດງື່ມ ແລະອີກສ່ວນແມ່ນ ປະສົບການໃນຊີວິດຈິງ ຂອງຂ້າພະເຈົ້າເອງ ທີ່ໄດ້ເຂົ້າມາມີສ່ວນຮ່ວມສິດສອນ ແລະບໍລິຫານການສຶກສາຢູ່ໂຮງຮຽນແຫ່ງນີ້ ໃນຊຸມປີ 2002-2010. (ສ່ວນໃນປຶ້ມຫົວນີ້ເນື້ອໃນສ່ວນໜຶ່ງແມ່ນໄດ້ມາຈາກ ອາຈານ ບຸນທັນ ພັນທະວົງໄຊ ອະດີດຜູ້ອຳນວຍການໂຮງຮຽນສົກປີ 1997-2003)

ແນ່ນອນວ່າເນື້ອໃນ ຍັງບໍ່ຄົບຖ້ວນ ເພາະບາງສ່ວນທີ່ບໍ່ໄດ້ບັນທຶກໃນ ບົດຜົນງານ ຂອງໂຮງຮຽນເປັນຕົ້ນແມ່ນໄລຍະຊຸມ ປີ1991-2001ເຊິ່ງແມ່ນໄລຍະການສ້າງຕັ້ງເປັນໂຮງຮຽນມັດທະຍົມສຶກສາໜອງເປັດ ທີ່ແຍກອອກຈາກໂຮງຮຽນເລກ 2 ບ້ານຄາຍ, ຈຶ່ງເຮັດໃຫ້ຂາດບັ້ນຂາດຕອນ ( ບໍ່ທັນເປັນລະບົບຕໍ່ເນື່ອງ ) ນອກຈາກນັ້ນກໍບໍ່ປາສະຈາກຂໍ້ຂາດຕົກບົກພ່ອງບາງຢ່າງເຊັ່ນ: ການໃຊ້ສັບສຳນວນ, ການໃຊ້ພາສາ, ການຂຽນ, ປາກົດການຕົວຈິງໃນປະຫວັດສາດ ຈຶ່ງຂໍອະໄພໃນສ່ວນທີ່ຂາດຕົກບົກຜ່ອງມານະທີ່ນີ້ດ້ວຍ ແລະຂໍນ້ອມຮັບເອົາຄຳຕຳນິກໍ່ສ້າງ ດ້ວຍຄວາມຈິງໃຈ. ຫາກທ່ານມີຂໍ້ຄິດເຫັນ ຫຼືຕ້ອງການໃຫ້ຂໍ້ມູນເພີ່ມເຕີມປະການໃດ ກະລຸນາສົ່ງຂ່າວໄປຍັງຂ້າພະເຈົ້າດ້ວຍ.

ບົດປາຖະກະຖາຂອງ ທ່ານຄູ ຄຳພວງ ດາລາແສນ ແມ່ນບົດຮຽນທີ່ມີຄຸນຄ່າຫຼາຍ ສຳລັບຄົນຮຸ່ນໃໝ່ ໂດຍສະເພາະແມ່ນຄູ, ນັກຮຽນໃນປັດຈຸບັນ ເພາະມັນຍົກໃຫ້ເຫັນທັງຄວາມບຸກບືນ ຄວາມທໍລະຫົດອົດທົນ ຜ່ານຜ່າຄວາມທຸກຍາກ ລຳບາກ ຫົວຄິດປະດິດສ້າງ ໃນການຮຽນ-ການສອນ ຂອງຄູ ແລະນັກຮຽນ ລວມທັງຄວາມເອົາໃຈໃສ່ຂອງປະຊາຊົນ ບັນດາເຜົ່າ ຕໍ່ການສຶກສາຂອງລູກຫຼານ ໃນໄລຍະເລີ່ມຕົ້ນ. ເຖິງວ່າມັນຈະເປັນປະຫວັດການສຶກສາໃນຂົງເຂດຈຳກັດ ແຕ່ກໍຄົງສາມາດເປັນບົດຮຽນບໍ່ໜ້ອຍ ສຳລັບສັງຄົມທົ່ວ ໄປ.

ຂ້າພະເຈົ້າຄິດວ່າ ເມື່ອທ່ານໄດ້ອ່ານປຶ້ມຫົວນີ້ແລ້ວ ຄົງຮູ້ເຫັນ ແລະເຂົ້າໃຈບໍ່ຫຼາຍກໍໜ້ອຍວ່າ ການສຶກສາໃນປັດຈຸບັນນີ້ ມີເງື່ອນໄຂດີກວ່າສະໄໝກ່ອນຫຼາຍ. ສະນັ້ນ ຈຶ່ງຂໍຮຽກຮ້ອງມາຍັງຄູ ນັກຮຽນ ໃນຂົງເຂດຍອດງື່ມຄັງວຽງ ຈົ່ງ ຮັກສາມູນເຊື້ອຂອງ ຄູອາຈານ ນັກຮຽນ ແລະປະຊາຊົນໃນສະໄໝປະຫວັດສາດ ຖືເອົາບົດຮຽນຕົວຈິງອັນໃຫຍ່ຫຼວງໃນອະດີດ ນຳມາປັບປຸງແນວຄິດ ຄຸນສົມບັດ ນັບທັງວິທີການຮຽນ-ການສອນຂອງຄູອາຈານ ໃນປັດຈຸບັນໃຫ້ກ້າວໜ້າ ແລະໝູນໃຊ້ໃນຊີວິດຕົນເອງໃຫ້ມີປະໂຫຍດ ພັດທະນາຕົນເອງໃຫ້ກາຍເປັນແມ່ພິມຂອງຊາດ ທີ່ແທ້ຈິງ ນັກຮຽນ ນັກສຶກສາຄວນຈະຈົດຈຳບົດຮຽນອັນດີເລີດ ມູນເຊື້ອອັນດີງາມນັ້ນໄວ້ໃນຈິດໃຈຂອງຕົນຢູ່ສະເໝີ ໃຫ້ສົມເປັນລູກສິດທີ່ດີຂອງຄູ ລູກທີ່ດີຂອງພໍ່ແມ່ ແລະພົນລະເມືອງດີຂອງຊາດ

ປຶ້ມປະຫວັດຄວາມເປັນມາ ຂອງການສຶກສາໃນຂົງເຂດຍອດງື່ມ-ເຂດຄັງວຽງ ຫົວນີ້ພິມໄວ້ເພື່ອເປັນບ່ອນລວມຂໍ້ມູນ ທີ່ສ່ອງແສງໃຫ້ເຫັນເຖິງຄວາມເປັນມາ ແລະການຂະຫຍາຍຕົວທາງດ້ານວຽກງານການສຶກສາ ຂອງເຂດຍອດງື່ມ-ຄັງວຽງ ໃນແຕ່ລະໄລຍະຕັ້ງແຕ່ເລີ່ມຕົ້ນ ຈົນເຖິງປັດຈຸບັນ, ຈຸດປະສົງກໍແມ່ນເພື່ອເຮັດໃຫ້ຄົນຮຸ່ນຫຼັງໄດ້ຮູ້ເຖິງຄວາມເປັນມາ ການຜ່ານຜ່າຄວາມຫຍຸ້ງຍາກລຳບາກ ລະອິດລະອຽວ ຄວາມທໍລະຫົດອົດທົນຂອງນັກຮຽນແລະຄູອາຈານທີ່ເອົາໃຈໃສ່ຕໍ່ການສຶກສາ ແລະການປະກອບສ່ວນຂອງສັງຄົມພາຍໃຕ້ສະພາບແວດລ້ອມທາງການເມືອງ ເສດຖະກິດສັງຄົມ ໃນແຕ່ລະໄລຍະ ໂດຍສະເພາະແມ່ນໃນປາງສົງຄາມ ທີ່ມີຄວາມໂຫດຮ້າຍທາລຸນເວົ້າລວມ,ເວົ້າສະເພາະແມ່ນໃນເຂດຍອດງື່ມ ແລະຄັງວຽງ (ຕາແສງຄັງ-ຕາແສງຄາຍ)ເລື່ອງລາວ ຫຼືຂໍ້ມູນປະຫວັດສາດ ທີ່ມີໃນປຶ້ມຫົວນີ້ ຈະກາຍມາເປັນບົດຮຽນອັນລ້ຳຄ່າໃຫ້ແກ່ຄົນຮຸ່ນຫຼັງຜູ້ສືບທອດຈະໄດ້ຮັບຮູ້ຕາມຄວາມເປັນຈິງ ແລະນຳໃຊ້ໃຫ້ເກີດປະໂຫຍດ.

ຂໍສະແດງຄວາມຮູ້ບຸນຄຸນ ແລະຂອບໃຈຕໍ່ ປ້າຄຳເມິງ ວໍລະຈິດ ແລະ ປ້າຄຳອອນ ເພັດດາວເຮືອງພ້ອມດ້ວຍທຸກໆທ່ານ ທີ່ມີສ່ວນໃນການຈັດພິມປຶ້ມຫົວນີ້ໃຫ້ສຳເລັດຂຶ້ນມາດ້ວຍດີ

ຂໍນ້ອມຮັບລ່ວງໜ້າ ເອົາຄວາມຕຳນິຕິຊົມທຸກປະການ

ພິເສດ ຂໍສະແດງຄວາມຮູ້ບຸນຄຸນຕໍ່ບັນດາຄູອາຈານ ແລະນັກຮຽນຮຸ່ນກ່ອນ ລວມທັງປະຊາຊົນບັນດາເຜົ່າ ທີ່ໄດ້ພ້ອມກັນສ້າງປະຫວັດສາດການສຶກສາ ໃນເຂດຍອດງື່ມ-ຄັງວຽງໄວ້ຢ່າງຈົບງາມ ເຮັດໃຫ້ພວກເຮົາຜູ້ເປັນລູກຫຼານ ໄດ້ມີຄວາມເອກອ້າງ ແລະທະນົງໃຈ ແລະຂໍໃຫ້ຄຳໝັ້ນສັນຍາວ່າຈະອຸທິດສະຕິປັນຍາ ເຫື່ອແຮງ ມານະຈິດ ສືບທອດພາລະກິດການສຶກສາຕະຫຼອດໄປຊົ່ວກາລະນານ.





## ຄຳເຫັນຂອງ ອາຈານ ຄຳສາຍ ສຸລິເດດ ຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາໜອງເປັດ

..........................................

ຂ້າພະເຈົ້າ ເກີດວັນທີ 13 ພຶດສະພາ 1962 ຢູ່ບ້ານນ້ຳຫຍ້າ ເມືອງແປກ ແຂວງຊຽງຂວາງ ປັດຈຸບັນຢູ່ບ້ານຄັ້ງໂດນ ເມືອງແປກ ແຂວງຊຽງຂວາງ ຈົບການສຶກສາຊັ້ນສູງສາຍວິທະຍາສາດສັງຄົມ ແລະພວມຮຽນຕໍ່ປະລິນຍາຕີ ວິຊາການເມືອງ ປີ 2 ທີ່ວິທະຍາໄລສ້າງຄູຄັງໄຂ

ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງສູງ ທີ່ໄດ້ຮັບການແຕ່ງຕັ້ງຈາກຂັ້ນເທິງໃຫ້ເປັນຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາໜອງເປັດ ນັບແຕ່ສົກຮຽນ 2003 ຈົນມາເຖິງປັດຈຸບັນ ຍ້ອນວ່າໂຮງຮຽນນີ້ ມີປະຫວັດຍາວນານ ໂດຍສືບທອດມາຈາກໂຮງຮຽນມັດທະຍົມສຶກສາຍອດງື່ມ ຊຶ່ງເປັນໂຮງຮຽນມັດທະຍົມສຶກສາແຫ່ງທຳອິດ ຂອງເມືອງແປກ. ໂຮງຮຽນນີ້ສ້າງຂຶ້ນໃນສະໄໝການຕໍ່ສູ້ກູ້ຊາດ ແລະມີມູນເຊື້ອອັນອົງອາດກ້າຫານ ໄດ້ຮັບໄຊຊະນະເລື້ອຍມາ ນັກຮຽນຫຼາຍຄົນ ຫຼາຍຮຸ່ນ ທີ່ຈົບຈາກໂຮງຮຽນນີ້ອອກໄປ ໄດ້ເປັນພະນັກງານຂັ້ນນຳ ທີ່ສະຫຼາດສ່ອງໃສ ແລະມີວິໄສທັດທີ່ກວ້າງໄກ

ຂ້າພະເຈົ້າຮັບຮູ້ ແລະສຳນຶກສະເໝີມາວ່າ ໜ້າທີ່ອັນສຳຄັນຂອງຜູ້ອຳນວຍການແມ່ນເອົາໃຈໃສ່ປົກປັກຮັກສາ ແລະສືບທອດມູນເຊື້ອອັນດີງາມຂອງໂຮງຮຽນ ແລະສ້າງສາພັດທະນາໃຫ້ນັບມື້ນັບດີຂຶ້ນໃນອະນາຄົດ ໂດຍສະເພາະແມ່ນໃຫ້ເປັນໄປຕາມ 5 ຫຼັກມູນການສຶກສາແຫ່ງຊາດຢ່າງບໍ່ຢຸດຢັ້ງ ສ້າງຄົນຮຸ່ນໃໝ່ ໃຫ້ເປັນຄົນທີ່ມີຄວາມຮູ້ເຕັກນິກວິທະຍາສາດ ມີຄວາມສາມາດ ມີວິຊາອາຊີບທີ່ແນ່ນອນ ແລະສາມາດຮັບໃຊ້ວຽກງານຂອງປະເທດຊາດ.

ຂ້າພະເຈົ້າຍັງຈະໄດ້ເອົາໃຈໃສ່ເປັນພິເສດ: ແມ່ນວຽກງານສົມທົບກັບພໍ່ແມ່ ປະຊາຊົນບັນດາເຜົ່າ ແລະອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ມີຄວາມກະຕືລືລົ້ນຮ່ວມແຮງຮ່ວມໃຈປະກອບສ່ວນພັດທະນາໂຮງຮຽນ ເພື່ອໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການໃນການຮຽນ-ການສອນເພີ່ມທະວີຄວາມສາມັກຄີພາຍໃນ ພາຍນອກເພື່ອຍາດແຍ່ງການຊ່ວຍເຫຼືອພ້ອມກັບສ້າງລູກຫຼານຮຸ່ນໃໝ່ໃຫ້ເປັນຄົນທີ່ດີຂອງຊາດສ້າງຈິດສຳນຶກວ່າ :ສ້າງຄົນດີມີສີແກ່ຊາດ ສ້າງຄົນສະຫຼາດພາຊາດຈະເລີນ.

ຂ້າພະເຈົ້າ ສຳນຶກໃນບຸນຄຸນ ແລະຂໍຂອບໃຈເປັນຢ່າງສູງຕໍ່ປ້າ ຄຳເມິງ ວໍລະຈິດ ທີ່ເປັນຫ່ວງເປັນໃຍຕໍ່ການສຶກສາຂອງລູກຫຼານແລະໄດ້ໃຫ້ການອຸປະຖຳການພິມປຶ້ມຫົວນີ້ແລະຂໍຂອບໃຈທຸກທ່ານທີ່ໄດ້ໃຫ້ຂໍ້ມູນ ແລະມີສ່ວນຮ່ວມໃນການຈັດພິມ ຂໍອວຍໄຊໃຫ້ພອນແກ່ທ່ານຈົ່ງມີອາຍຸໝັ້ນຂວັນຍືນນີ ສຸຂະພາບ ພາລານະໄມອັນສົມບູນ ມີຄວາມຜາສຸກໃນຄອບຄົວສຳເລັດໜ້າທີ່ການງານ.



## ຄຳເຫັນຂອງ ທ່ານຄູ ຄຳພວງດາລາແສນ ຜູ້ປູເສັ້ນທາງການສຶກສາໃນເຂດຄັງວຽງ-ຍອດງື່ມ

....................................................

ການຫວນຄືນຄວາມເປັນມາຂອງວຽກງານການສຶກສາ ໃນຂົງເຂດສອງຕາແສງຄື: ຕາແສງຄັງ ແລະຕາແສງຄາຍ (ຄັງວຽງ ແລະຍອດງື່ມ) ແມ່ນເພື່ອໃຫ້ຄົນຮຸ່ນໜຸ່ມນ້ອຍ ຮູ້ຄວາມລຳບາກຍາກແຄ້ນ ແສນລະອິດລະອ້ຽວ ຂອງວຽກງານການສຶກສາໃນສະໄໝຕໍ່ສູ້ກູ້ຊາດ ຈົນເຖິງມື້ປະເທດຊາດ ໄດ້ຮັບການປົດປ່ອຍ ແລະມາ ເຖິງປັດຈຸບັນ ມັນໄດ້ກາຍເປັນເຫດການອັນໃຫຍ່ຫຼວງໃນໜ້າປະຫວັດສາດ ຂອງວຽກງານການສຶກສາໃນຂົງເຂດນີ້ ມັນໄດ້ຄ່ອຍໆເຕີບໃຫຍ່ຂະຫຍາຍຕົວຂຶ້ນ ຕາມການຫຼໍ່ຫຼອມບົນແປວໄຟແຫ່ງການປະຕິວັດອັນແທ້ຈິງ ມັນເປັນບ່ອນຊຸບຫຼໍ່ມັນສະໝອງຂອງຄົນແຕ່ລະຮຸ່ນໃຫ້ມີຄວາມຮູ້ ຄວາມສາມາດ ຄ່ອງແຄ້ວ ມີໄຫວພິບ ມີສະຕິປັນຍາອັນ ແຫຼມຄົມ ມີຄຸນສົມບັດ ສິນທຳປະຕິວັດ ທ່ຽງທຳ ແລະປົກປັກຮັກສາວັດທະນະທຳອັນດີງາມຂອງຊາດໄວ້ໃຫ້ຄົນຮຸ່ນສືບທອດຈົນເຖິງປັດຈຸບັນ.

ດັ່ງນັ້ນ ຈິ່ງຂໍຮຽກຮ້ອງພວກລູກຫຼານ ຜູ້ເປັນຄູອາຈານ ອົດທົນຜ່ານຜ່າຂໍ້ຫຍຸ້ງຍາກນານາປະການ ເພື່ອສິດສອນລູກຫຼານນັກຮຽນໃຫ້ເປັນຄົນດີ, ເປັນຄົນເກັ່ງ ນັກຮຽນກໍເຊັ່ນດຽວກັນ ຈົ່ງຕັ້ງໃຈຮັບເອົາບົດຮຽນ ການຖ່າຍທອດ ຄວາມຮູ້ ຈາກຄູອາຈານມາຄົ້ນຄວ້າຮໍ່າຮຽນ ເພື່ອເຝິກຝົນຕົນເອງໃຫ້ເປັນຜູ້ສືບທອດ ພາລະກິດສ້າງສາພັດທະນາປະເທດຊາດ. ຂໍສະແດງຄວາມຮູ້ບຸນຄຸນນຳ ພັກ-ລັດ ແລະການຈັດຕັ້ງທຸກຂັ້ນທີ່ໄດ້ສົ່ງເສີມການສຶກສາໃນໄລຍະຜ່ານມາ,ພ້ອມນີ້ກໍຂໍຝາກຄວາມເຊື່ອໝັ້ນນຳຂັ້ນເທິງໄວ້ວ່າການສຶກສາຈະໄດ້ຮັບການພັດທະນາກ້າວຂຶ້ນສູ່ລະດັບໃໝ່ ດ້ວຍຄຸນນະພາບ ແລະປະລິມານທີ່ສູງກວ່າເກົ່າເວົ້າລວມ, ເວົ້າສະເພາະແມ່ນໃນຂົງເຂດໜອງເປັດຍອດງື່ມ-ຄັງວຽງໃຫ້ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

# ຫວນຄືນການສຶກສາ ໃນຂົງເຂດຕາແສງຄາຍ - ຕາແສງຄັງ

## ເລົ່າໂດຍ: ທ່ານຄູ ຄຳພວງ ດາລາແສນ
## ຂຽນໂດຍ: ສໍ ແສງສະຫວ່າງ

........................................

ການສຶກສາໃນສະໄໝກ່ອນ ບໍ່ທັນເປັນຮູບເປັນຮ່າງຢ່າງແນ່ນອນ ມີບາງຈຳນວນທີ່ມີໂອກາດ ເປັນນັກບວດ ອາໄສຮຽນຢູ່ນຳວັດວາອາຣາມ ໂດຍພາຍໃຕ້ການສັ່ງສອນ ຂອງຄູບາອາຈານ ຫຼືເຈົ້າອະທິການວັດຕ່າງໆ ເທົ່ານັ້ນ ແລະຕົວອັກສອນກໍແມ່ນຕົວອັກສອນທຳ ການຮຽນສ່ວນໃຫຍ່ແມ່ນເອົາແນວທາງການສັ່ງສອນ ຂອງພະພຸດທະເຈົ້າ ເປັນຕົ້ນແມ່ນ: ສິນຫ້າ. ດັ່ງນັ້ນ ຜູ້ທີ່ດ້ອຍໂອກາດຄື ແມ່ຍິງ, ເດັກນ້ອຍ ຜູ້ທຸກຈົນຈຶ່ງບໍ່ມີໂອກາດໄດ້ຮ່ຳຮຽນ,

ຕໍ່ມາໃນປີ 1949 ຍ້ອນຫຼິງເຫັນຄວາມສຳຂອງການສຶກສາ ລັດຖະບານຈຶ່ງໄດ້ຂະຫຍາຍຕາໜ່າງການສຶກສາລົງສູ່ທ້ອງຖິ່ນ ໂດຍໄດ້ສົ່ງ ນາຍຄູ ມຸ່ງ ຊຶ່ງເປັນຄົນເມືອງເກົ່າ (ປາກຊັນ ແຂວບໍລິຄຳໄຊ ໃນປັດຈຸບັນ) ມາເພື່ອສອນໜັງສື ໃນສອງຕາແສງຄື: ຕາແສງຄັງ ແລະຕາແສງຄາຍ (ເຂດຄັງວຽງ ແລະເຂດຍອດງື່ມໃນປັດຈຸບັນ) ດັ່ງນັ້ນການຮຽນ-ການສອນ ສົກທຳອິດຈຶ່ງເປີດຂຶ້ນຢູ່ **ໂຮງຮຽນບ້ານເຫີນ** ຕາແສງຄາຍ, ມີເດັກນ້ອຍເຂົ້າຮຽນໜັງສື 40 ກວ່າຄົນ ໂດຍແມ່ນຄູມຸ່ງ ເປັນຜູ້ສອນ ແລະມີພຽງຫ້ອງທີ 5 (ຊັ້ນປະຖົມສຶກສາປີທີໜຶ່ງ ຫຼືປ.1) ທີ່ນັ້ນ ຕໍ່ມາຍ້ອນພໍ່ແມ່ປະຊາຊົນ ເຫັນໄດ້ຜົນດີ ແລະຄວາມສຳຄັນຂອງການຮຽນ, ຮຽນແລ້ວຮູ້, ຮຽນແລ້ວມີຄວາມສະຫຼາດ, ຈຶ່ງຊຸກຍູ້ສົ່ງເສີມໃຫ້ລູກຫຼານມາຮຽນໜັງສື ເຮັດໃຫ້ຈຳນວນນັກຮຽນເພີ່ມຂຶ້ນ.



ຈາກນັ້ນ ນາຍຄູມຸ່ງ ຈຶ່ງລົງໄປຊຸກຍູ້ ການຮຽນຢູ່ຕາແສງຄັງ, ເມື່ອມີ ຄູບຸນມີ ມາປ່ຽນແທນ, ຢູ່ຕາແສງຄັງ ຈຶ່ງມີໂຮງຮຽນເປີດຂຶ້ນໃໝ່ ແລະໃສ່ຊື່ວ່າ **ໂຮງຮຽນມູລະປະຖົມສຶກສາອິນແປງ** ໂດຍແມ່ນ ຄູຄຳຈັນ ເປັນຄູສອນໃນປີແຮກ ມີນັກຮຽນປະມານ 30 ກວ່າຄົນ.

ຕໍ່ມາໂຮງຮຽນບ້ານເທີນ ໄດ້ຍ້າຍລົງໄປຕັ້ງຢູ່ຫາງເທີນ ແລະຂະຫຍາຍໃຫ້ມີ 3 ຫ້ອງຄື: ຫ້ອງທີ 5, ຫ້ອງທີ 4 ແລະຫ້ອງທີ 3 (ຊັ້ນປະຖົມສຶກສາປີທີໜຶ່ງ ຫຼື ປ. 1 ຊັ້ນປະຖົມສຶກສາປີທີສອງ ຫຼື ປ. 2, ແລະຊັ້ນປະຖົມສຶກສາປີທີສາມ ຫຼື ປ. 3) ມີນັກຮຽນ 50 ກວ່າຄົນ ການຮຽນ-ການສອນ ໄດ້ດຳເນີນປົກກະຕິ ເຮັດໃຫ້ພໍ່ແມ່ປະຊາຊົນຕື່ນຕົວຊຸກຍູ້ລູກຫຼານເຂົ້າຮຽນໜັງສື ຢ່າງຕໍ່ເນື່ອງ,

ໃນເວລານັ້ນ ອຸປະກອນການສອນມີພຽງ ປື້ມອ່ານທີ່ເປັນຄູ່ມືຂອງຄູເທົ່ານັ້ນ , ນັກຮຽນແມ່ນບໍ່ໄດ້ເຫັນອຸປະກອນ ນັກຮຽນມີພຽງກະດານດຳ ທີ່ເຮັດ ດ້ວຍໄມ້ດອງແປ້ນທາສີດຳ ທີ່ໄດ້ ມາຈາກຄວັນໄມ້ແປກ ປະສົມນ້ຳໝາກກ້ວຍລິງ, ສ່ວນສໍຂາວທີ່ນຳມາຂຽນ ແມ່ນໃຊ້ ຫີນບຸກມາຟ້າຍ (ແຫຼມ) ໃຫ້ພໍຂຽນໄດ້, ນັກຮຽນຫ້ອງ ປ. 1 ໃຊ້ໄມ້ແປ້ນຂະໜາດ 20x30 Cm ຫີນບຸກເປັນສໍຂຽນ, ຫ້ອງທີ່ສູງກວ່ານັ້ນກໍໃຫ້ໃຊ້ເຈ້ຍສາ ແລະເຈ້ຍທີ່ປະ ຊາຊົນເຮັດເອງມາຕັດໃຫ້ເປັນປື້ມຂຽນ, ສໍດຳ ຫຼືໃຊ້ໄມ້ໄຜ່ມາຝານ ແລະປັ້ນໝາກຂີ້ແບ້ ເອົານ້ຳຂອງມັນເປັນມຶກຂຽນ.



ທ່ານຄູ ຄໍາພວງ ເລົ່າວ່າ: ປີ1955 ຂ້າພະເຈົ້າໄດ້ຮຽນຈົບຫ້ອງທີສອງໃຫຍ່ (ປ.5) ຈຶ່ງສະໝັກມາເປັນຄູສອນ, ແລະໄດ້ຖືກສັບຊ້ອນມາສອນຢູ່ໂຮງຮຽນມູລະປະຖົມສຶກສາບ້ານເທີນ ປ່ຽນແທນ ນາຍຄູ ບຸນມີ. ຂ້າພະເຈົ້າເປັນຄົນທໍາອິດ ທີ່ໄດ້ຕາງໜ້າລູກຫຼານຂອງປະຊາຊົນໃນສອງຕາແສງ ທີ່ເປັນຄູສອນ. ປະຊາຊົນເຫັນວ່າຂ້າພະເຈົ້າເປັນຄົນທ້ອງຖິ່ນດິນນາແຫ່ງນີ້ ແລະກໍແມ່ນລູກຫຼານຂອງເຂົາເຈົ້າເອງ ກໍຍິ່ງພ້ອມກັນມາຝາກລູກຫຼານເຂົ້າຮຽນໜັງສືເຮັດໃຫ້ນັກຮຽນ ໃນສົກຮຽນນີ້ລົ້ນຫ້ອງ ຄືມີ 60-70 ກວ່າຄົນຕໍ່ຫ້ອງ ເພາະຂາດເຂີນຄູ, ຫ້ອງບໍ່ພຽງພໍ, ເຮັດໃຫ້ການຮຽນ ການສອນຕ້ອງຜັດປ່ຽນກັນ ໂດຍແບ່ງເປັນ 3 ຫ້ອງຄື: ຫ້ອງທີ 5,ຫ້ອງທີ 4 ແລະຫ້ອງທີ 3, ນອກຈາກການສິດສອນແລ້ວ ຂ້າພະເຈົ້າ ຍັງໄດ້ຖືກແຕ່ງຕັ້ງ ເປັນຫົວໜ້າໝວດໂຮງຮຽນ (ຫົວໜ້າກຸ່ມໂຮງຮຽນ) ໂດຍມີໂຮງຮຽນ 5 ແຫ່ງຂຶ້ນກັບຄື: ໂຮງຮຽນບ້ານເທີນ, ໂຮງຮຽນອິນແປງ, ໂຮງຮຽນບ້ານລາວ ແລະ ໂຮງຮຽນບ້ານຮ້າງ.

ເຖິງສົກປີ 1957-1958 ຫ້ອງທີສອງນ້ອຍ (ຊັ້ນປະຖົມສຶກສາປີທີສີ່ ຫຼື ປ.4) ໄດ້ເປີດຂຶ້ນຢູ່ໂຮງຮຽນບ້ານຄາຍ ແລະກໍແມ່ນຂ້າພະເຈົ້າເອງເປັນຄູໄປສອນ, ສົກຮຽນຕໍ່ມາກໍໄດ້ເປີດສອນຫ້ອງທີສອງໃຫຍ່ (ຊັ້ນປະຖົມສຶກສາປີທີຫ້າ ຫຼື ປ. 5) ໂດຍແມ່ນຄູຊົງເຢ ເປັນຜູ້ສອນ, ໃນນັ້ນຄູແກ້ວ ມາລິຍະ ສອນຫ້ອງທີ 5, ຫ້ອງທີ 4 ແລະ ຫ້ອງທີ 3, ໂດຍມີນັກຮຽນ 150 ກວ່າຄົນ.ຄູໃນເວລານັ້ນ ມີໜ້າທີ່ສິດສອນນັກຮຽນໃຫ້ຮູ້ຫຼາຍດ້ານ ແລະສາມາດສາທິດ, ທົດລອງໃຫ້ນັກຮຽນຮັບຮູ້ ເຂົ້າໃຈ ແລະສາມາດນໍາໄປໃຊ້ໄດ້ຢ່າງຖືກຕ້ອງເຊັ່ນ: ວິຊາການແພດ, ວິຊາຫັດຖະກໍາຈັກສານ, ວິຊາປູກຝັງ-ລ້ຽງສັດ ສາມວິຊາດັ່ງກ່າວນັ້ນ ເປັນມາດຖານຂອງຄູລັດທຸກຄົນໃນສະໄໝນັ້ນ



ຫຼັກສູດການຮຽນ-ການສອນ ແມ່ນນຳໃຊ້ຂອງພວກລ່າເມືອງຂຶ້ນຝຣັ່ງໂດຍໃຊ້ພາສາຝຣັ່ງເປັນສ່ວນໃຫຍ່ ເນື້ອໃນການຮຽນ-ການສອນ ກໍສ່ອງແສງເຖິງລັກສະນະລ່າເມືອງຂຶ້ນ, ມີບາງຕຳລາສອນກໍບໍ່ໄດ້ສ່ອງແສງເຖິງລັກສະນະຂອງຊາດລາວຈັກໜ້ອຍເລີຍເຊັ່ນ: ລະດັບຫ້ອງທີສອງນ້ອຍຂຶ້ນໄປຈະໃຊ້ພາສາຝຣັ່ງ 100% ອັນມີລັກສະນະນິຍົມລັດທິລ່າເມືອງຂຶ້ນຢ່າງຈະແຈ້ງ ລະບຽບກໍໄດ້ນຳໃຊ້ລະບຽບຂອງພວກລ່າເມືອງຂຶ້ນຄື: ລະບຽບຢືນຕໍ່ໜ້າເສົາທຸງ ຖືໄມ້ແສ້ ເຖິງຢ່າງໃດກໍຕາມ ຍ້ອນວ່າຄູທີ່ສອນແມ່ນຄົນລາວ ຈິດໃຈກໍຍ່ອມມີຄວາມເປັນລາວຢູ່ຕະຫຼອດເວລາ, ເຖິງເນື້ອໃນຫຼັກສູດການຮຽນ - ການສອນ ບໍ່ໄດ້ສ່ອງແສງເຖິງຄວາມຮັກຊາດ ແຕ່ຄູຜູ້ສອນຕ້ອງໄດ້ສັ່ງສອນໃຫ້ລູກສິດຂອງຕົນເອງຮູ້ຮັກຊາດ, ຮັກຄວາມເປັນລາວ, ນັບຖືຮີດຄອງປະເພນີ ແລະວັດທະນະທຳອັນດີງາມຂອງຕົນຢູ່ສະເໝີ. ຍ້ອນແນວນັ້ນ ນັກຮຽນຈິ່ງມີນ້ຳໃຈຮັກຊາດ, ຮັກບ້ານເກີດ ເມືອງນອນ, ເຄົາລົບຮັກແພງຄູ, ຮັກແພງໝູ່ຄູ່, ມີມາລະຍາດຄຸນສົມບັດ, ມີລະບຽບແບບແຜນທີ່ດີ, ມັກແລະຊອກຮູ້ຮ່ຳຮຽນ, ມີຫົວຄິດປະດິດສ້າງທີ່ດີ ຮຽນເກັ່ງສອບເສັງຍາດກັນເອົາຄະແນນດີ, ມີເປີເຊັນສູງ ມາເຖິງປັດຈຸບັນນັກຮຽນເຫຼົ່ານັ້ນ ຫຼາຍຄົນໄດ້ກາຍ ເປັນຜູ້ສຳຄັນໃນໜ້າທີ່ຕຳແໜ່ງຕ່າງໆ ເຊັ່ນ:

ພູມີ ທິບພະວອນ ລັດຖະມົນຕີປະຈຳສຳນັກງານນາຍົກ, ນາງອ່ອນຈັນ ທຳມະວົງ ລັດຖະມົນຕີ ກະຊວງແຮງງານສະຫວັດດີການສັງຄົມ, ສົມວັນດີ ນາຖາວົງ ຮອງເຈົ້າ ນະຄອນວຽງຈັນ, ຫຼ້າ ສີງດາລາ ລັດຖະມົນຕີຊ່ວຍກະຊວງຍຸຕິທຳ, ຄຳມີ ໄຊຍະວົງ ປະທານສານສູງສຸດ, ນິນສະຫວັດ ຫົວໜ້າກົມຈັດຕັ້ງ ກະຊວງຍຸຕິທຳ, ນາງຄຳເມິງ ວໍລະຈິດ ພັນລະຍາທ່ານຮອງປະທານປະເທດ, ພັນເອກ ວັນຄຳ ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດ, ພັນເອກ ສົມລິດ ຫົວໜ້າກອງບັນຊາການ ປກສ. ນະຄອນຫຼວງວຽງຈັນ. ຮ້ອຍເອກ ສີສົມພູ ນັນທະພອນ ເມື່ອກ່ອນເປັນຕຳຫຼວດ, ທະຫານ



ປ້ອງກັນອາກາດ, ປັດຈຸບັນເປັນນັກທຸລະກິດແລະຫວນມາພັດທະນາດິນແດນບ້ານເກີດເມືອງນອນ. ບັນທັນ (ສີທົນ) ຢູ່ວິທະຍຸກະຈາຍສຽງຄັງໄຂ ນາງບົວໄຂ, ນາງສີດາ, ນາງອຳພາ, ນາງຄຳອອນ, ນາງທີ, ນາງຄຳພາ, ນາງພາສີ, ບຸນໂຮມ... ບົວສີ, ຄຳແກ້ວ, ຄຳພັດ, ທ່ານ ຄຳບານ, ບຸນມາ ດາລາແສນ, ສີໄວ ອຸດທະຈັກ, ຫຼ້າ (ຫຼ້ານີ້ມີຫຼາຍໆຫຼ້າ ຈຶ່ງໃສ່ເພີ່ມຫຼ້າ...)

ຂໍໂທດນຳນັກຮຽນທີ່ບໍ່ສາມາດໄລ່ລຽງຊື່ສຽງໃຫ້ຄົບຖ້ວນໄດ້, ຂໍໃຫ້ນັກຮຽນສົ່ງຂ່າວເພີ່ມເຕີມມາໃຫ້ອາຈານ ຄຳແກ້ວ ພິມມະສອນ ຕາມເບີໂທຂອງເພິ່ນໃນຄຳນຳ, ແລະຄົນອື່ນໆທີ່ໄດ້ກາຍເປັນນັກທຸລະກິດ, ຫົວໜ້າບໍລິສັດ, ບັນດານັກຮຽນຮຸ່ນເກົ່ານັ້ນ ຍັງນັບຖືຮັກແພງຄູອາຈານ ແລະພໍ່ແມ່ປະຊາຊົນ ແລະພວກເພິ່ນເຫຼົ່ານັ້ນກໍ ໄດ້ໄປມາແວ່ຢາມຖາມຂ່າວບ້ານເມືອງອັນເປັນບ່ອນຫຼໍ່ຫຼອມແນວຄິດແກ່ເຂົາເຈົ້າໃນໄວເດັກ.

ໃນປີ 1960-1961 ແຂວງຊຽງຂວາງ ໄດ້ຮັບການປົດປ່ອຍ ໂດຍແນວລາວຮັກຊາດແຕ່ວ່າໂຮງຮຽນບ້ານຄາຍ, ລາດເຫີນ, ອີນແປງ, ບ້ານລາວ, ຍັງດຳເນີນ ການຮຽນ-ການສອນຢ່າງເປັນປົກກະຕິຕາມຫຼັກສູດຂອງລັດຖະບານວຽງຈັນ, ໃນປີ 1962 ລັດຖະບານປະສົມສາມຝ່າຍໄດ້ຈັດຕັ້ງຂຶ້ນທີ່ຄັງໄຂ ໂດຍແມ່ນສະເດັດເຈົ້າສຸວັນນະພູມາ ເປັນນາຍົກລັດຖະມົນຕີ, ທ່ານ ອຸດຕະມະ ຈຸນລະມະນີ ເປັນລັດຖະມົນຕີກະຊວງສຶກສາ ແລະເພິ່ນໄດ້ປະກາດເອົາໂຮງຮຽນໝວດບ້ານຄາຍ ເປັນໝວດໂຮງຮຽນປະຕິວັດຂອງແນວລາວຮັກຊາດ ຂຶ້ນກັບກະຊວງສຶກສາໂດຍກົງ ໃນນັ້ນມີໂຮງຮຽນບ້ານເຫີນ, ອີນແປງ,



ບ້ານລາວ ໂດຍແມ່ນຂ້າພະເຈົ້າເປັນຫົວໜ້າໝວດ ທັງສອນຫ້ອງທີສອງນ້ອຍ ນາຍຄູ ຊົງເຢ ສອນຫ້ອງທີສອງໃຫຍ່, ຄູແກ້ວ ມາລິຍະ ສອນຫ້ອງມູລະປະຖົມ, ຄູ ຈັນເທບ ສອນຢູ່ໂຮງຮຽນບ້ານເທີນ, ຄູ ຄຳຈັນ ສອນຢູ່ໂຮງຮຽນອິນແປງ, ຄູຄຳໃບ ສອນຢູ່ໂຮງຮຽນບ້ານລາວເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍການສຶກສາຄູສອນໃນເວລານີ້ ຕ້ອງໄດ້ເຮັດສອງໜ້າທີ່ຄື: ກາງເວັນສອນໃນລະບົບສາມັນ,ສ່ວນຕອນກາງຄືນກໍສອນລະບົບປະຊາສຶກສາແລະກຽມພ້ອມລຳລຽງສະບຽງອາຫານ, ອາວຸດຍຸດໂທປະກອນໃຫ້ແນວໜ້າ.

ເພື່ອປະຕິບັດຄຳສັ່ງຂອງກະຊວງ ສຶກສາທິການທີ່ກຳນົດອອກຄື: *ອອກແຮງຂົນຂວາຍປະຊາຊົນ ລ້ຽງຄູເອົາເອງ, ລະດົມຊອກຄູປະຊາສຶກສາ*ປະຕິບັດຄຳຂວັນທີ່ວ່າ: *ເອົາຄົນທີ່ຮູ້ສອນຄົນທີ່ບໍ່ທັນຮູ້*, ດັ່ງນັ້ນໃນໄລຍະນີ້ ຄູພ້ອມດ້ວຍ ອຳນາດການປົກຄອງ ແລະພໍ່ແມ່ປະຊາຊົນທ້ອງຖິ່ນ ຈຶ່ງພ້ອມກັນປຸກລະດົມ, ນັກບວດ, ຜູ້ທີ່ມີຄວາມສາມາດສອນປະຊາສຶກສາ. ປະຊາຊົນເຫັນໄດ້ຄວາມກ້າວຫນ້າຈຶ່ງອາສາລ້ຽງຄູທີ່ສອນຢູ່ບ້ານຕົນເອງ,ລະດົມປະຊາຊົນເຂົ້າຮຽນປະຊາສຶກສາຢ່າງພົດພື້ນ, ຮຽນຢູ່ທຸກບ່ອນ, ຮຽນເວລາອອກແຮງງານ, ເວລາໄປລຳລຽງ, (ວ່າແຕ່ມີເວລາຫວ່າງຫຼື ພັກເຊົາເອົາແຮງກໍຈົກ ເອົາປຶ້ມເອົາສໍມາຂຽນ ມາອ່ານ).



ເບື້ອງຕົ້ນ ໄດ້ນາງວັນສີ ມາເປັນຄູສອນປະຖົມ, ຈານເຮືອງ (ກ)ສອນປະຊາສຶກສາຢູ່ບ້ານຮ້າງ, ນາງມີ, ຈານເຮືອງ (ຂ), ວັນສິເຕີຍ ສອນປະຖົມຢູ່ບ້ານຄາຍ, ຊຽງຄຳສີ... ນັບຕັ້ງແຕ່ນັ້ນມາ ຂະບວນການສຶກສາ ໄດ້ນັບມື້ນັບຂະຫຍາຍຕົວຢູ່ທຸກໆບ້ານ. ໃນຂົງເຂດສອງຕາແສງ ຂະບວນການຮ່ຳຮຽນພັດພື້ນ ພາຍໃຕ້ສົງຄາມຫຼອນຕີຢູ່ທຸກຫົນທຸກແຫ່ງ ຄຳຂວັນຂອງນັກຮຽນມີຄື: *ສັດຕູມາເຮົາຕີ ສັດຕູໜີເຮົາຮຽນ*" ໝາຍຄວາມວ່າໃນເວລາ ມີສົງຄາມສະໝັກເປັນທະຫານ ເພື່ອອອກແນວໜ້າສູ້ຮົບ, ໃນເວລາບໍ່ມີສົງຄາມພ້ອມກັນຮຽນໜັງສື.

ປີ 1964 ຍ້ອນຄວາມຂັດແຍ່ງລະຫວ່າງກອງກຳລັງເປັນກາງທີ່ຮັກຊາດ ແລະກອງກຳລັງເປັນກາງທີ່ໄວ້ເນື້ອເຊື່ອໃຈຈັກກະພັດ ມີຄວາມຂັດແຍ່ງເຊິ່ງກັນ ແລະກັນ ຈຶ່ງເກີດສົງຄາມພາຍໃນ (ເສິກແບ້)ຢູ່ຄັງໄຂ ແຂວງຊຽງຂວາງ ກຳລັງເປັນກາງຈຶ່ງຖືກຜັນແຍກເປັນສອງຝ່າຍ ຄື: ຝ່າຍເປັນກາງຮັກຊາດ ໄປນຳແນວລາວຮັກຊາດ ແລະຝ່າຍເປັນກາງທີ່ໄປນຳຝ່າຍວຽງຈັນ, ໂຮງຮຽນ ແລະຄູກໍຖືກຜັນແຍກ ເມືອງຊຽງຂວາງ (ເມືອງຄູນ), ລາດຮ່ວງ, ລາດບວກ, ເມືອງຄຳ ຂຶ້ນກັບຝ່າຍເປັນກາງ.

ສົງຄາມເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ ຍ້ອນສະຖານະການເປັນເຊັ່ນນັ້ນ ຈຶ່ງເຮັດໃຫ້ມີບາງຄົນອອກຈາກຄູ, ບາງຄົນກໍໜີລົງໄປຢູ່ວຽງຈັນ... ຍັງເຫຼືອພຽງໂຮງຮຽນໝວດບ້ານຄາຍ ທ້ອນໂຮມຄູມີແຕ່ 11 ຄົນ ແລະກໍໃນປີນີ້ເອງການຮຽນ-ການສອນ ກໍພົບຄວາມຫຍຸ້ງຍາກຫຼາຍ, ຄູແລະນັກຮຽນ ຕ້ອງອົບພະຍົບຍ້າຍໂຮງຮຽນຕິດໂຮງຮຽນບໍ່ມີທີ່ຕັ້ງອັນແນ່ນອນ, ບໍ່ມີຫ້ອງຮຽນ, ບໍ່ມີໂຕະຕັ່ງ, ບໍ່ມີກະດານ ອາໄສຮົ່ມໄມ້, ຖ້ຳ ເປັນຫ້ອງຮຽນ ຖືເອົາຂາ ຫຼື ຖົງເປ້ ເປັນໂຕະຮອງຂຽນຫນັງສື ເອົາຕົ້ນໄມ້ໃຫຍ່ ຫຼື



ໃບຕອງເປັນກະດານດຳ,ສໍຂາວແມ່ນເອົາຫີນບຸກ.ດິນດາກມາແທນ,ການຮຽນບໍ່ມີທີ່ຈັ້ງ ຈາກບ່ອນນີ້ໜີໄປບ່ອນໃໝ່, ຈາກຫ້ວຍນີ້ໜີໄປຫ້ວຍໃໝ່, ໃນມືມີປື້ມ, ສໍ, ໃນບ່າມີປືນ ແລະເຄື່ອງນອນ. ເຄື່ອງນຸ່ງຫົ່ມ, ອາຫານ.

ຍ້ອນວ່າໂຮງຮຽນ ຫ້ອງຮຽນເຄື່ອນຍ້າຍຢູ່ຕະຫຼອດ ເພື່ອກຽມພ້ອມ ສະເໝີໃນການຮໍ່າຮຽນດ້ານປະຊາສຶກສາ ກໍຍັງໄດ້ດຳເນີນຢ່າງຕໍ່ເນື່ອງເຖິງສົງຄາມຈະທຳລາຍປານໃດກໍຕາມປະຊາຊົນທີ່ຮຽນປະຊາສຶກສາ ກໍຍັງໄດ້ເອົາໃຈໃສ່ໃນການຮໍ່າຮຽນ ເຖິງຈະເດີນທາງໄປລຳລຽງ,ໄປໄຮ່ໄປສວນຕ້ອງມີຄູໄປນຳ ແລະໄປຫຼາຍຄົນໃນເວລາເດີນທາງຄົນໄປກ່ອນໝູ່ຕ້ອງຂຽນໜັງສືໂຕໃຫຍ່ຕິດໃສ່ຖົງເປ້ ຄົນທີ່ເດີນຕາມຫຼັງພ້ອມກັນອ່ານ ພ້ອມກັນທ່ອງຈົນກວ່າຈະຈື່, ຈາກຄຳເວົ້ານີ້ປະໂຫຍກນີ້ ເມື່ອທຸກຄົນຈຳໄດ້ແລ້ວປ່ຽນປະໂຫຍກໃໝ່, ຄຳເວົ້າໃໝ່ ເຮັດແນວນັ້ນທຸກວັນຈົນກວ່າກາຍເປັນຄວາມຊິນເຄີຍຂອງປະຊາຊົນໂດຍອາໄສຄົນຮູ້ ສອນຄົນບໍ່ຮູ້ ຄົນເຂົ້າໃຈໄວ ສອນໃຫ້ຄົນເຂົ້າໃຈຊ້າ (ແບບເພື່ອນສອນເພື່ອນ) ການຮຽນບໍ່ເລືອກເວລາ, ບໍ່ເລືອກສະຖານທີ່.

ປີ 1965 ຂ້າພະເຈົ້າຖືກສັບຊ້ອນໄປຮຽນເອົາແນວທາງການສຶກສາ ຂອງແນວລາວຮັກຊາດ ຢູ່ແຂວງຫົວພັນ ເປັນເວລາປີຫົກເດືອນ ການເດີນທາງ ແຕ່ຊຽງຂວາງໄປຫາຫົວພັນໃຊ້ເວລາຫຼາຍວັນດ້ວຍການຍ່າງພາຍໃຕ້ຫ່າລະເບີດຈາກການບຸກໂຈມຕີຂອງພວກຈັກກະພັດອາເມລິກາ ແລະລູກແຫຼ້ງຕີນມືທີ່ຂາຍຊາດ ຂ້າພະເຈົ້າພະຍາຍາມຮໍ່າຮຽນເອົາແນວທາງດັ່ງກ່າວ ເພື່ອຜົນປະໂຫຍດຂອງຊາດ, ເພື່ອພັດທະນາຄວາມຮູ້ໃຫ້ແກ່ປະຊາຊົນ, ເດັກນ້ອຍບັນດາເຜົ່າ.



ຍ້ອນການກະຫາຍສົງຄາມ ຂອງພວກຈັກກະພັດ ແລະລູກແຫຼ້ງຕີນມືຂອງພວກມັນໂດຍບໍ່ປານີສິ່ງໃດໃນພິພົບ ແມ່ນແຕ່ສັດສາວາສິ່ງ ຈົນຈະບໍ່ໃຫ້ເຫຼືອໃນແຜ່ນດິນ, ຊຽງຂວາງກາຍເປັນເຂດປະຕິວັດ, ພວກສັດຕູໄດ້ໃຊ້ຄໍາຂວັນປະຕິບັດ 3 ກ້ຽງ ຂ້າກ້ຽງ,ເຜົາກ້ຽງ,ທໍາລາຍກ້ຽງ.ໂດຍໃຊ້ເຮືອບິນບຸກໂຈມຕີຢ່າງປ່ວງບ້າບໍ່ມີຈຸດໝາຍປາຍທາງ ເຮັດໃຫ້ອ້າຍນ້ອງ 7 ຄົນຮ່ວມ ທາງເມືອຮຽນຢູ່ຫົວພັນດ້ວຍກັນເສຍຊີວິດ 3 ສະຫາຍເຫຼືອພຽງ 4 ສະຫາຍທີ່ລອດຕາຍ ມີຊີວິດກັບຄືນສູ້ດິນແດນບ້ານເກີດ.

ເມື່ອຂ້າພະເຈົ້າ ກັບຄືນມາເຖິງຊຽງຂວາງ ບ້ານເກີດເມືອງນອນຂອງຕົນ ເວົ້າລວມທົ່ວແຂວງຊຽງຂວາງ ໄດ້ເກີດປ່ຽນແປງໄປຫຼາຍ ເບິ່ງບ່ອນໃດກໍເຫັນແຕ່ສິ່ງສະຫຼັກຫັກພັງ, ຂຸມລະເບີດແດງກະຈາຍທົ່ວໂນນພູ. ເລີຍມາຕັ້ງຄໍາຖາມໃຫ້ແກ່ຕົນເອງວ່າຈະໄປທາງໃດ? ທີ່ຕັ້ງຂອງສໍານັກງານນາຍົກ, ເຮືອນສະເດັດເຈົ້າສຸວັນນະພູມາ, ເຮືອນສະເດັດເຈົ້າ ສຸພານຸວົງ ແລະບັນດາເຮືອນ ຂອງຄະນະລັດຖະບານປະສົມສາມຝ່າຍຊຶ່ງເປັນອາຄານ2-3ຊັ້ນກໍຖືກທໍາລາຍຢ່າງຮາບກ້ຽງ,ລັດຖະບານປະສົມສາມຝ່າຍກໍຖືກຍົກຍ້າຍເຂົ້າສູ່ວຽງຈັນ ຍັງແຕ່ສຶກສາແຂວງທີ່ໄດ້ອົບພະຍົບໄປຊຸດຣູ ຢູ່ແຄມໜອງ ນາເມືອງໂດຍແມ່ນທ່ານ ສົມທອງ ມັງໜໍ່ເມກ ເປັນຫົວໜ້າພະແນກສຶກສາປະຈໍາແຂວງ, ຂ້າພະເຈົ້າໄດ້ເຂົ້າເຮັດວຽກຢູ່ທີ່ນັ້ນ ໂດຍຮັບໜ້າທີ່ເປັນຫົວໜ້າສຶກສາຂະແໜງສາມັນ, ນາງ ບຸນເພັງ ມູນໂພໄຊ ເປັນຮອງ, ຂ້າພະເຈົ້າໄດ້ສົມທົບກັບຜູ້ຊ່ຽວຊານຫວຽດນາມ (ທ່ານແບກ) ດັດແປງຫຼັກສູດການການສຶກສາຂອງ ພວກລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່ມາເປັນຫຼັກສູດການສຶກສາແນວລາວຮັກຊາດ ຕາມແນວທາງທີ່ໄດ້ຮຽນມາແຕ່ຊໍາເໜືອ ນັບແຕ່ປີນັ້ນເປັນຕົ້ນມາ.



ປີ 1966 ຍ້ອນຄວາມເອົາໃຈໃສ່ການຮ່ຳຮຽນ ຂອງປະຊາຊົນບັນດາເຜົ່າກະຊວງສຶກສາ ຈຶ່ງລົງມາເປີດງານມະໂຫລານລົບລ້າງຄວາມກືກໜັງສືຂັ້ນພື້ນຖານໃນທົ່ວສອງຕາແສງຢູ່ແກ່ວຮ້າງ ໂດຍປະກອບມີ ບ້ານຄາຍ, ບ້ານແກ່ວ, ບ້ານຄັງມອນ.

ປີ 1967 ໂຮງຮຽນມັດທະຍົມສຶກສາບ້ານຄາຍ ໄດ້ອົບພະຍົບໄປຢູ່ຍອດຫ້ວຍນ້ຳດອກແຫວ (ບ້ານແກ່ວ) ເປັນເວລາສອງສົກຮຽນ ໂດຍແມ່ນ ທ່ານ ຄຳປານ ພິລາວົງ ເປັນຜູ້ອຳນວຍການໂຮງຮຽນ ຫ້ອງຮຽນເປັນແບບຂຸມຫຼົບໄພ ສ່ວນໜຶ່ງເປັນເຮືອນບັງດິນມຸງໃບຄໍ້ ການຮຽນການສອນຕາມແນວທາງ ຂອງແນວທາງແນວລາວຮັກຊາດ ຄູສອນ ນອກຈາກສອນສາມັນແລ້ວ ຍັງໄດ້ລະດົມກັນທັງຄູ ແລະນັກຮຽນ ໃຫ້ສະໝັກໃຈໄປສອນປະຊາສຶກສາເວົ້າໄດ້ວ່າ ທັງຮຽນ ທັງສອນປະຊາສຶກສາ. ບັນຫາດັ່ງກ່າວໄດ້ເຮັດໃຫ້ສາກົນຮັບຮູ້ການພັດທະນາການສຶກສາຂອງລາວ ແລະເຫັນຄວາມບຸກໜ້າບືນຕົວຂອງປະຊາຊົນ. ໃນປີນີ້ເອງ ຕາແສງຄາຍຈຶ່ງໄດ້ຮັບລາງວັນ ໂນມາຈາກສາກົນ ຊຶ່ງພິທີມອບມີຂຶ້ນຢູ່ທີ່ສຳນັກຕາແສງຄາຍ.

ປີ1969 ສົງຄາມຢູ່ດິນແດນຊຽງຂວາງທະວີຄວາມຮຸນແຮງ ປ່າເຖື່ອນຂຶ້ນ ສັດຕູໄດ້ໃຊ້ເຮືອບິນທຸກຊະນິດ ຫວ່ານລະເບີດທຳລາຍຕະຫຼອດ 24 ຊົ່ວໂມງ ເຮັດໃຫ້ປະຊາຊົນຕ້ອງອົບພະຍົບ ອອກຈາກຖິ່ນຖານບ້ານເກີດ ລະສ່ຳລະສາຍໄປຢູ່ແຫ່ງອື່ນ. ເຮັດໃຫ້ຜົວເມຍພັດພາກຈາກກັນ, ພໍ່ພັດລູກ ບາງຜ່ອງໜີໄປວຽງຈັນ ບາງຜ່ອງໜີໄປຫວຽດນາມຍັງເຫຼືອຈຳນວນໜ້ອຍໜຶ່ງ ທີ່ສະກັນຫັນແຮງຮ່ວມກັບກຳລັງປະກອບອາວຸດກໍລີ້ຊ່ອນຕົວຢູ່ຕາມຫ້ວຍຮ່ອງພູຜາແຖວນີ້, ຍ້ອນສະຖານະການເປັນເຊັ່ນນັ້ນ ໂຮງຮຽນບ້ານຄາຍ ຈຶ່ງໄດ້ອົບພະຍົບ ໄປຢູ່ປະເທດຫວຽດນາມເປັນໄລຍະສອງປີ. ພ້ອມໆກັບໂຮງຮຽນອິນແປງ ແລະທຸກໂຮງຮຽນໃນທົ່ວເມືອງແປກ.



ປີ1971ໂຮງຮຽນ ຈຶ່ງເຄື່ອນຍ້າຍ ກັບຄືນມາຕັ້ງຢູ່ພູເພິງ ຕາແສງປຣງ ແຕ່ຕອນນີ້ບໍ່ໄດ້ໃສ່ຊື່ ເປັນໂຮງຮຽນອີກ ໃສ່ຊື່ເປັນກອງລຳລຽງ ຮັບໃຊ້ອ້າຍນ້ອງທະຫານແນວໜ້າ, ທັງລຳລຽງ ທັງຮຽນໜັງສື ທັງຕີສັດຕູ ທັງຊ່ວຍເຫຼືອ ພໍ່ແມ່ປະຊາຊົນທີ່ກັບຄືນມາບ້ານເກີດເມືອງນອນ ມີນັກຮຽນບາງຄົນໄດ້ເສຍຊີວິດຢູ່ພູວ້າງ(ບ້ານຄັງວຽງ)ຍ້ອນຖືກເຮືອບິນຂອງສັດຕູຫຼອນຖິ້ມລະເບີດໃສ່ ຂະນະອອກແຮງງານ ຊ່ວຍເຫຼືອປະຊາຊົນຂະບວນການຮຽນ-ການສອນ ບໍ່ປົກກະຕິອາໄສ ໃນເວລາສັດຕູບໍ່ອອກເຄື່ອນໄຫວຈຶ່ງພ້ອມກັນຮຽນຢູ່ຕາມສະຖານທີ່ຮ່ອມຫ້ວຍເອົາແຕ່ຄວາມເໝາະສົມ.



ພາຍຫຼັງສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ປະຊາຊົນຊາວຊຽງຂວາງ ທີ່ອົບພະຍົບໄປຢູ່ແຫ່ງອື່ນ ໃນປາງສົງຄາມໄດ້ຫວນກັບຄືນສູ່ບ້ານເກີດເມືອງນອນອັນແສນຮັກຂອງຕົນ. ດັ່ງນັ້ນໃນປີ 1976 ໂຮງຮຽນພູເພີງ ຈຶ່ງກັບມາຕັ້ງຢູ່ບ້ານຄາຍເໝືອນເດີມ ໂດຍມີອາຈານວ່າງເລ່ຍ ເປັນຜູ້ອຳນວຍການ ໃນເວລານີ້ ຄູ ແລະນັກຮຽນຍັງປະຕິບັດສອງໜ້າທີ່ຄື: ຄູທັງສອນສາມັນ, ທັງສອນປະຊາສຶກສາ ນັກຮຽນກໍທັງຮຽນໜັງສື ທັງລົງພື້ນຖານສອນປະຊາສຶກສາໂດຍພາຍໃຕ້ການຊີ້ນຳຂອງຄູອາຈານໃນທຸກແຫ່ງຫົນທີ່ສາມາດເປີດ ໂຮງຮຽນຕາມຄວາມເໝາະສົມແຕ່ລະທ້ອງຖິ່ນ ທັງນີ້ກໍເພື່ອປະຕິບັດຕາມແນວທາງຍຸດທະສາດການສຶກສາຂອງລັດຖະບານທີ່ວ່າ "ເອົາການສຶກສາໄປກ່ອນວຽກງານອື່ນບາດກ້າວໜຶ່ງ"

ປີ 1993 ໂຮງຮຽນມັດທະຍົມສຶກສາບ້ານຄາຍ ຈຶ່ງໄດ້ແຍກອອກເປັນສອງໂຮງຮຽນຄື: ໂຮງຮຽນມັດທະຍົມ ສຶກສາອິນແປງ ໂດຍມີອາຈານ ພິມພາ ທຳມະວົງ ເປັນຜູ້ອຳນວຍການ, ແລະໂຮງຮຽນມັດທະຍົມສຶກສາໜອງເປັດ. ສຳລັບໂຮງຮຽນມັດທະຍົມສຶກສາໜອງເປັດ ແມ່ນທ້ອນໂຮມເອົາສອງໂຮງຮຽນຄື ໂຮງຮຽນມັດທະຍົມສຶກສາພູສັນ ທີ່ມີອາຈານ ຄຳໃບ ເປັນຜູ້ອຳນວຍການ ແລະ ໂຮງຮຽນມັດທະຍົມສຶກສາບ້ານຄາຍ. ໃນເວລານີ້ ອາຈານ ບຸນທັນ ຄຳມະນີຈັນ ເປັນຜູ້ອຳນວຍການ ພາຍຫຼັງອາຈານ ບຸນທັນ ຄຳມະນີຈັນ ເສຍຊີວິດ ອາຈານ ບຸນທັນ ພັນທະວົງໄຊ ໄດ້ວ່າການແທນ ແລະກໍໄດ້ຮັບການແຕ່ງຕັ້ງເປັນຜູ້ອຳນວຍການໂຮງຮຽນໃນເວລາຕໍ່ມາແລະການສຶກສາກໍໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ



ປີ 2000 ໂຮງຮຽນມັດທະຍົມສຶກສາໜອງເປັດ ຫຼື ມສ. ຕົ້ນໜອງເປັດ ຈຶ່ງໄດ້ຈັດຕັ້ງມີຫ້ອງມັດທະຍົມສຶກສາປີທີສີ່ (ມ.4) ເພື່ອກຽມເປີດເປັນໂຮງຮຽນມັດທະຍົມສຶກສາສົມບູນ ມາເຖິງປັດຈຸບັນນີ້

ບັນດາເຫດການ ອັນເປັນປະຫວັດສາດດ້ານການສຶກສາ ໃນຂົງເຂດນີ້ ຂ້າພະເຈົ້າ ຂໍຮຽກຮ້ອງເຖິງບັນດາຄູ ອາຈານ ຈົ່ງພັດທະນາຕົນເອງໃຫ້ຮອບດ້ານ: ຄວາມຮູ້, ຄວາມສາມາດ, ດ້ານຄຸນສົມບັດ, ຮັກອາຊີບ ແພງເດັກ, ສັດຊື່ ບໍລິສຸດຕໍ່ຊາດ ຕໍ່ປະຊາຊົນ, ຫຼໍ່ຫຼອມຈິດໃຈຮັກຊາດ, ສືບຕໍ່ພາລະກິດທີ່ພັກ -ລັດມອບໝາຍໃຫ້, ຮຽກຮ້ອງນັກຮຽນ ນັກສຶກສາແຕ່ລະຊັ້ນ ແຕ່ລະຫ້ອງ ແລະທຸກຄົນໃຫ້ພ້ອມກັນພັດທະນາຕົນເອງໃຫ້ ມີຄຸນສົມບັດຮໍ່າຮຽນເກັ່ງ ຮັກແພງນັບຖືຄູອາຈານ, ເຖົ້າແກ່ອາວຸໂສ ຮັກແພງໝູ່ເພື່ອນ ສາມັກຄີບັນດາເຜົ່າ ແລະຂໍສະເໜີໃຫ້ທາງຂັ້ນເທິງທີ່ກ່ຽວຂ້ອງ ຄົ້ນຄວ້າຂະໜານນາມໃຫ້ໂຮງຮຽນ ມ.ສ ໜອງເປັດ ແຫ່ງນີ້ຄວນຕັ້ງຊື່ແນວໃດຈຶ່ງຈະເໝາະສົມ.



ຮູບພາບຈຳນວນໜຶ່ງ ຈາກພົບປະໃນເວລາເກັບກຳຂໍ້ມູນຂອງຄະນະປັບປຸງປຶ້ມ













## ສະພາບການສຶກສາໃນລະຫວ່າງປີ 1993-2002

ໂດຍ: ອາຈານ ບຸນທັນ ພັນທະວົງໄຊ
ອະດີດ ຜູ້ອຳນວຍການໂຮງຮຽນມັດທະຍົມສຶກສາໜອງເປັດ

.........................................

ໂຮງຮຽນມັດທະຍົມສຶກສາໜອງເປັດ ແມ່ນໂຮງຮຽນທີ່ສ້າງຂຶ້ນໃນສົກ 1993-94 ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກອົງການແຄວັກເກີ ກໍ່ສ້າງອາຄານຮຽນ 1 ຫຼັງ ປະກອບ ມີ 4 ຫ້ອງຮຽນ ມູນຄ່າ 9.787.000 ກີບ ບວກໃສ່ທຶນສົບທົບຂອງປະຊາຊົນສອງເຂດຄືເຂດຍອດງື່ມ ແລະເຂດພູສັນຈຳນວນ 2.180.000 ກີບ ອາຄານຫຼັງດັ່ງກ່າວສ້າງສຳເລັດໃນວັນທີ 10 ສິງຫາ 1993.

ສົກຮຽນທຳອິດໄດ້ໄຂຂຶ້ນໃນວັນທີ 5 ກັນຍາ 1993 ໂດຍເຕົ້າໂຮມເອົານັກຮຽນສອງເຂດມາໂຮມເຂົ້າກັນຄື ຈາກໂຮງຮຽນມັດທະຍົມສຶກສາພູສັນ ແລະໂຮງຮຽນມັດທະຍົມຍອດງື່ມ (ບ້ານຄາຍ) ແລ້ວໃສ່ຊື່ໃໝ່ວ່າ ໂຮງຮຽນມັດທະຍົມສຶກສາໜອງເປັດ.

ໃນສົກຮຽນປະຫວັດສາດ 1993-94 ປະກອບມີຄູສອນ ຈຳນວນ 16 ຄົນ ຍິງ 7 ຄົນ ມີນັກຮຽນທັງໝົດ 236 ຄົນ ຍິງ 94 ຄົນ ເຜົ່າລາວສູງ 78 ເຜົ່າລາວກາງ 4 ຄົນ. ໂດຍມີທ່ານ ອາຈານ ບຸນທັນ ຄຳມະນີຈັນ ເປັນຜູ້ອຳນວຍການ. ໃນສົກຮຽນນີ້ນັກຮຽນເສັງຂຶ້ນຫ້ອງ ແລະຈົບຊັ້ນໄດ້ 82,84% ພິເສດ ມີນັກຮຽນເກັ່ງຄະນິດສາດ 1 ຄົນຄື ທ້າວເກີມົວເສັງໄດ້ທີ 1 ຂອງເມືອງແປກ.

ສົກຮຽນ 1994-95 ປະກອບມີຄູ 13 ຄົນ ຍິງ 6 ຄົນມີນັກຮຽນທັງໝົດ 257 ຄົນຍິງ101 ຄົນ ແບ່ງເປັນ 7 ຫ້ອງຮຽນ. ການຮຽນການສອນເປັນປົກກະຕິ ສ້າງນັກຮຽນເກັ່ງຄະນິດສາດໄດ້ 1 ຄົນຄືທ້າວ ຈີມົວ ໄປເສັງໃນລະດັບເມືອງ. ນຳພາຄູອາຈານ ແລະນັກຮຽນຂຸດສ້າງເດີ່ນບານ 1 ເດີ່ນ ເຮັດສວນສາລີ 1 ຕອນ ເຂົ້າຮ່ວມພິທີບຸນອອກພັນສານຳຊາວບ້ານ.

ສົກຮຽນ 1995-96 ມີນັກຮຽນທັງໝົດ 306 ຄົນຍິງ108 ຄົນສ້າງນັກຮຽນເກັ່ງຄະນິດສາດເຂົ້າຮ່ວມເສັງລະດັບເມືອງ 1 ຄົນຄືທ້າວກູ້ເລົ່າ.

ຜ່ານສາມສົກຮຽນເຫັນວ່າ ດ້ານປະລິມານນັກຮຽນໄດ້ເພີ່ມຂຶ້ນທຸກປີ ການກໍ່ສ້າງອາຄານຮຽນກໍມີການຂະຫຍາຍຕົວ ຈາກໂຮງຮຽນນ້ອຍກາຍເປັນໂຮງຮຽນໃຫຍ່ ພິເສດໃນສົກຮຽນ 1996-97 ສາມາດສ້າງນັກຮຽນເກັ່ງຄະນິດສາດ ເສັງນັກຮຽນເກັ່ງຊັ້ນມັດທະຍົມສຶກສາປີທີສາມ ໄດ້ທີ 1 ໃນລະດັບແຂວງຊຽງຂວາງ.

ເຖິງສົກຮຽນ 2000-2001 ມີນັກຮຽນທັງໝົດ 798 ຄົນ ຍິງ 306 ຄົນ ແລະ ໄດ້ໄຂການຮຽນການສອນ ຂັ້ນມັດທະຍົມຕອນປາຍ ຄືຊັ້ນມັດທະຍົມສຶກສາປີທີສີ່ ຫຼື ມ.4 ສົກຮຽນ 2001-02 ມີນັກຮຽນທັງໝົດ1020ຄົນ ຍິງ391 ຄົນ ແລະໄດ້ເປີດສອນຊັ້ນມັດທະຍົມສຶກສາ ປີທີຫ້າ ຫຼື ມ.5

ສົກຮຽນ 2002-03 ມີນັກຮຽນທັງໝົດ 1252 ຄົນຍິງ 508 ຄົນ ແລະມີການຮຽນ-ການສອນຊັ້ນມັດທະຍົມສຶກສາປີທີຫົກ ຫຼື ມ.6 ພ້ອມນີ້ກໍມີການປ່ຽນຊື່ຈາກໂຮງຮຽນມັດທະຍົມສຶກສາໜອງເປັດ ເປັນໂຮງຮຽນມັດທະຍົມສຶກສາສົມບູນໜອງເປັດມາຈົນເຖິງປັດຈຸບັນ.

ຜູ້ບໍລິຫານການສຶກສາ (ຄະນະອຳນວຍການໂຮງຮຽນ) ໃນແຕ່ລະໄລຍະມີຄື:

ແຕ່ປີ 1993-1997 ມີ ອາຈານ ບຸນທັນ ຄຳມະນີຈັນ,<br>
ອາຈານ ບຸນທັນ ພັນທະວົງໄຊ

ແຕ່ປີ 1997- 2003 ມີ ອາຈານ ບຸນທັນ ພັນທະວົງໄຊ<br>
ອາຈານ ຄຳພອນ ວົງແສງທອງ<br>
ອາຈານ ນາງຄຳກ້ອນ ບຸດທະວົງ



# 8 ປີ ແຫ່ງການພັດທະນາ

ໂດຍ: ສ. ແສງສະຫວ່າງ

........................................

ຂ້າພະເຈົ້າໄດ້ກ້າວເຂົ້າມາເຄື່ອນໄຫວເຮັດວຽກ ຢູ່ໂຮງຮຽນແຫ່ງນີ້ໃນປີ 2002 ພ້ອມດ້ວຍເພື່ອນຄູອີກ 6 ສະຫາຍ ມີຍິງ 1 ສະຫາຍ ເຊິ່ງແມ່ນນັກສຶກສາຄູ ຊັ້ນສູງຮຸ່ນທີ 2 ທີ່ຈົບມາຈາກວິທະຍາໄລຄູຄັງໄຂ ໂດຍແບ່ງເປັນສາຍທຳມະຊາດ 3 ສະຫາຍ, ສາຍສັງຄົມ 3 ສະຫາຍ ແລະສາຍພາສາອັງກິດອີກ 1 ສະຫາຍ. ທຳອິດຄະນະອຳນວຍການໂຮງຮຽນ ໂດຍແມ່ນອາຈານ ບຸນທັນ ເປັນຜູ້ອຳນວຍການ, ໄດ້ມອບໝາຍໃຫ້ສອນວິຊາເຄມີສາດ ແລະພຶດຊະຄະນິດໃນຊັ້ນມັດທະຍົມສຶກສາປີທີ 5 ແລະ ມັດທະຍົມສຶກສາປີທີ 4. ສົກຮຽນນີ້ໃນໂຮງຮຽນມີຄູ 36 ສະຫາຍ ໃນນັ້ນມີລະດັບປະລິນຍາຕີ 1 ສະຫາຍ, ລະດັບຊັ້ນສູງ 12 ສະຫາຍ ແລະຊັ້ນຕົ້ນ 1 ສະຫາຍ, ນອກຈາກນັ້ນແມ່ນຄູຊັ້ນກາງ. ໂຮງຮຽນແຫ່ງນີ້ເປັນໂຮງຮຽນ ທີ່ມີທຳມະຊາດສວຍງາມສິ່ງໂດດເດັ່ນຄືຕົ້ນໄຮທີ່ມີອາຍຸປະມານສະຕະວັດ ຢືນລຽນແຖວລຽບອາຄານຮຽນ ຖາວອນທີ່ປະຊາຊົນຍີ່ປຸ່ນຊ່ວຍເຫຼືອ ປະກອບກັບໂຂດຫີນຕັ້ງໂດດເດັ່ນເປັນກຸ່ມທີ່ປົກຫຸ້ມໄປດ້ວຍຕົ້ນໄມ້ນ້ອຍໃຫຍ່ທີ່ເກີດຂຶ້ນຕາມທຳມະຊາດ.

ຂ້າພະເຈົ້າ ນອນຫໍພັກ ທີ່ໂຮງຮຽນຈັດໄວ້ໃຫ້ ສຳລັບຄູອາຈານ ແລະນັກຮຽນທີ່ມາແຕ່ທາງໄກ ແຕ່ກໍຍັງຍາກສຳລັບຂ້ອຍຈະນອນຢູ່ຫໍພັກ ຫຼືບໍ່ ຍ້ອນຄອບຄົວຢູ່ຫ່າງຈາກໂຮງຮຽນກໍບໍ່ໄກພໍເທົ່າໃດປະມານສິບກວ່າກິໂລແມັດຖ້າໃຊ້ລົດຖີບກໍພໍໄປມາຮອດ ແຕ່ຫຍຸ້ງຍາກລະດູຝົນ ດັ່ງນັ້ນຈຶ່ງເປັນອັນວ່າເຄິ່ງນອນເຄິ່ງທຽວກໍເວົ້າໄດ້ ແມ່ນໃຜຈະຮູ້ໄດ້ວ່າມື້ທຽວ ຈະມີຝົນຕົກ ຫຼືແດດອອກບາງວັນມື້ທຽວການພັດຖືກຝົນຕົກແຮງ ກໍໄດ້ແບກລົດຖີບອີ່ຮ້າງມາຫໍພັກ ຫຼືກັບບ້ານ. ເຖິງມີອຸປະສັກເທົ່າໃດກໍຄິດວ່າແມ່ນໜ້າທີ່ແມ່ນເພື່ອເດັກຂອງພໍ່ແມ່ປະຊາຊົນ ເພື່ອປະເທດຊາດໃນຂ້າງໜ້າ.



ຂ້າພະເຈົ້າໄດ້ພະຍາຍາມໃນການຊອກຮູ້ຮໍ່າຮຽນ ໃນຫຼາຍບັນຫານໍາຄະນະອໍານວຍການໂຮງຮຽນ ແລະຄູອາຈານທີ່ເຄີຍຢູ່ນີ້ມາກ່ອນ ຈຶ່ງສາມາດຮູ້ໄດ້ຫຼາຍບັນຫາທີ່ຍັງຈະຕ້ອງປັບປຸງໃໝ່ຄື: ການເປີດປະຕູສ້າງຕົນເອງ, ການພັດທະນາຫ້ອງອ່ານ, ຫ້ອງສິການຮຽນ ແລະເຄື່ອງຫ້ອງການ ທີ່ຈໍາເປັນໃນການນໍາໃຊ້ໃນການຮຽນ-ການສອນ, ນອກນັ້ນຍັງ ສາມາດຮູ້ເຖິງຈິດໃຈ ຄູອາຈານຈໍານວນນ້ອຍໜຶ່ງ ຍັງມີແນວຄິດທີ່ຍັງບໍ່ທັນສອດຄ່ອງ ກັບແນວທາງການພັດທະນາໂຮງຮຽນເທົ່າທີ່ຄວນຄືເຫັນແກ່ແນວຄິດສ່ວນຕົວ, ສ້າງຂໍ້ຂັດແຍ່ງພາຍໃນໝູ່ຄະນະ. ຂາດຫົວຄິດປະດິດສ້າງ ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ຖືກມອບໝາຍ ແຕ່ພັດຢາກໄດ້ຜົນງານ.

ຂ້າພະເຈົ້າຖືກເລືອກຕັ້ງ ເປັນຄະນະອໍານວຍໂຮງຮຽນ ໃນສົກ 2003-2004 ແລະກໍໄດ້ຮັບການມອບໝາຍ ຈາກຄະນະໂຮງຮຽນເກົ່າຄື: ປື້ມຫຼັກສູດການສອນໃນຊັ້ນມັດທະຍົມຕອນຕົ້ນ (ມ.ຕົ້ນ) ແລະ ມັດທະຍົມປາຍ ( ມ.ປາຍ) ຊະນິດລະຫົວ, ສ່ວນບົດສະຫຼຸບ ແລະແຜນການ ຫຼື ຂໍ້ມູນອື່ນໆ ນັ້ນບໍ່ມີ ດັ່ງນັ້ນທຸກສິ່ງຢ່າງຕ້ອງແມ່ນພາລະຂອງຕົນເອງ ຫຼືເຂົາເຈົ້າຢາກທົດລອງຫົວຄິດປະດິດສ້າງຂອງຕົນເອງ ບັນຫານີ້ຄືຂໍ້ທໍາອິດລິເລີ່ມອອກມາປາກົດໃນສະໝອງ, ແຕ່ນັ້ນພາລະໜ້າທີ່ຂອງຂ້າພະເຈົ້າຄື: ສ້າງແຜນການ, ເກັບກໍາຂໍ້ມູນ, ຂຽນໂຄງການພັດທະນາຮອບດ້ານ ທຸກສິ່ງຢ່າງນັ້ນເປັນ ບັນຫາໃໝ່ໆ ຍ້ອນບໍ່ມີຂໍ້ມູນເກົ່າ ແລະບໍ່ທັນມີປະສົບການ. ຂ້າພະເຈົ້າເລີ່ມຕົ້ນຈາກການຂຽນ 3 ໂຄງການຄື: ໂຄງການພັດທະນາຫ້ອງອ່ານ, ໂຄງການພັດທະນາຊຸມຊົນ ແລະໂຄງການພັດທະນາວຽກງານວິຊາການ ເພາະຄິດວ່າສາມວຽກນີ້ເປັນວຽກງານທີ່ຈໍາເປັນນໍາໃຊ້ ເຂົ້າໃນການຮຽນ-ການສອນ.



## ວຽກພັດທະນາດ້ານວິຊາການ:

ຂ້າພະເຈົ້າ ໄດ້ເລີ່ມຕົ້ນຈາກການຮ່ວມໂມງສອນ ເພື່ອຊອກຮູ້ບັນຫາທີ່ເກີດຂຶ້ນພາຍໃນໂຮງຮຽນທີ່ຈະຕ້ອງແກ້ໄຂ.ຊອກສາເຫດແລ້ວມາຕັ້ງເປັນຂໍ້ຄິດເພື່ອຊອກຫາວິທີການ ແລະແຫຼ່ງທຶນເພື່ອມາພັດທະນາ, ຈາກການປຶກສາຫາລືກັບຄະນະພັກ ຄະນະອຳນວຍການໂຮງຮຽນ ແລະສະພາຄູ ຈຶ່ງເຫັນດີໃຫ້ປະຕິບັດ ໂດຍອອກທຶນຈາກໂຮງຮຽນອື່ນ ແລະຈັດການນິເທດພາຍໃນໂດຍໄດ້ເຊີນອາຈານສອນມາ ແຕ່ວິທະຍາໄລຄູຄັງໄຊມາເປັນວິທະຍາກອນ. ນອກຈາກນັ້ນໄດ້ມີການຈັດການສົ່ງເສີມການຮຽນການສອນໃຫ້ແກ່ຄູ ແລະນັກຮຽນ ຄື: ຈັດການຍ້ອງຍໍຄູຜູ້ທີ່ດີເດັ່ນປະຈຳພາກຮຽນ, ປີຮຽນ, ຈັດການຍ້ອງຍໍນັກຮຽນດີເດັ່ນ ປະຈຳເດືອນ-ພາກຮຽນ ແລະປະຈຳປີຮຽນ.

## ວຽກງານການພັດທະນາຫ້ອງອ່ານ :

ຂ້າພະເຈົ້າ ໄດ້ຂຽນໂຄງການ ອອກຜ່ານ ທຸກຂະແໜງການຂອງໂຮງຮຽນ, ດັ່ງນັ້ນທາງໂຮງຮຽນຈຶ່ງອະນຸມັດເງິນກ້ອນໜຶ່ງຊື້ ປຶ້ມວາລະສານມາຈັດຕັ້ງຫ້ອງອ່ານ ພໍເປັນຮູບເປັນຮ່າງ ເພາະວ່າຕູ້ສະໝຸດເຄື່ອນທີ່ຂອງອົງການຢູນິເຊັບ ມອບໃຫ້ໃນເມື່ອກ່ອນນັ້ນ ຍັງເຫຼືອແຕ່ຕູ້ເທົ່ານັ້ນ ຈາກນັ້ນໄດ້ພົວພັນກັບຫໍສະໝຸດແຂວງຊຽງຂວາງ ກໍໄດ້ປຶ້ມມາອີກຈຳນວນໜຶ່ງເຮັດໃຫ້ນັກຮຽນ ຄູອາຈານ ມີຄວາມສົນໃຈນັບມື້ນັບມີຫຼາຍຂຶ້ນ. ຂ້າພະເຈົ້າຍັງໄດ້ພະຍາຍາມຊອກຫາແຫຼ່ງທຶນໃນຫຼາຍຮູບການເຊັ່ນ: ຈັດງານຫາລາຍ





ໄດ້ເພື່ອສ້າງຫ້ອງອ່ານ ໃນປີ 2004 ເຊິ່ງບໍ່ເຄີຍມີໃນປະຫວັດສາດໃນຮຽນແຫ່ງນີ້ ໂດຍການ ເຊື້ອເຊີນ ບຸກຄົນໃນເປົ້າໝາຍເຂົ້າຮ່ວມຈຳນວນໜຶ່ງ ມີ ຫຼາຍທາງສຽງເວົ້າວ່າ ບັດເຊີນຢູ່ໃນບ້ານນອກແບບນີ້ ສ່ວນຫຼາຍຜູ້ຮັບຈະອ່ານແຕ່ບ່ອນເວລາຮັບປະທານອາຫານເທົ່ານັ້ນ ຖ້າບໍ່ມີການຮັບປະທານອາຫານ ກໍຈະບໍ່ເຫັນໜ້າ. ແຕ່ຍ້ອນຄວາມຕັດສິນໃຈຢາກພິສູດ ສິ່ງທີ່ຫຼາຍຄົນຄິດຫຍໍ້ທໍ້ນັ້ນວ່າ ມັນມີຈິງຫຼືບໍ່ ໃນເມື່ອດຳເນີນງານໄປຜົນສຳເລັດກໍເກີດຕາມມາຄື ພໍ່ແມ່ປະຊາຊົນໂດຍສະເພາະຜູ້ເຂົ້າງານ ມີຄວາຮັບຮູ້ເຂົ້າໃຈເຖິງຈຸດປະສົງ ແລະໄດ້ໃຫ້ຄວາມຮ່ວມມື ອຸປະຖຳພໍສົມຄວນ ຄືໄດ້ກ້ອນເງິນຈຳນວນໜຶ່ງມາຊື້ ປຶ້ມອ່ານ ວາລະສານ ສ້າງບ່ອນໄວ້ປຶ້ມ ຊັ້ນວາງປຶ້ມ...ແຕ່ນັ້ນເປັນບາດກ້າວໜຶ່ງສຳຄັນໃນການພັດທະນາຫ້ອງອ່ານໃຫ້ຂະຫຍາຍຕົວເທື່ອລະກ້າວ.

ໃນປີ 2004 ຂ້າພະເຈົ້າໄດ້ຂຽນຄຳຮ້ອງຍື່ນໄປຫາສະມາຄົມສົ່ງເສີມປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ (A.S.P.B) ຊຶ່ງປັດຈຸບັນມີຊື່ວ່າ ສະມາຄົມຮ່ວມ ນ້ຳໃຈເດັກນ້ອຍລາວ (A.L.C) ອົງການຣູມທູຣິດ (Room to Read) ໃນນີ້ຂ້າພະເຈົ້າກໍໄດ້ຂຽນເລື່ອງເຂົ້າປະກວດ ໄດ້ຮັບລາງວັນທີ 2 ຫ້ອງການຊາວໜຸ່ມ ປະຈຳ ສຳນັກງານນາຍົກ. ລັດຖະມົນຕີ ບັນດາໜ່ວຍງານທີ່ກ່າວມາຂ້າງເທິງນັ້ນ ໄດ້ໃຫ້ຄວາມຊ່ວຍເຫຼືອແກ່ໂຮງຮຽນຢ່າງເນື່ອງນິດລຽນຕິດ ນອກຈາກນັ້ນ ຍັງມີບຸກຄົນ ນັກຮຽນເກົ່າ ນັກທຸລະກິດລວມທັງນັກທ່ອງທ່ຽວຊາວຕ່າງປະເທດໄດ້ເຂົ້າມາຊ່ວຍເຫຼືອ ຫ້ອງອ່ານຈຶ່ງນັບມື້ນັບຂະຫຍາຍຕົວ ນັກຮຽນ ຄູອາຈານ ແລະສັງຄົມກໍເຂົ້າມາໃຊ້ບໍລິການຢ່າງຕໍ່ເນື່ອງ.



# ວຽກງານການພົວພັນຊຸມຊົນ :

ຂ້າພະເຈົ້າ ໄດ້ຕິດຕາມສະພາບ ແລະສຳພາດຫຼາຍຄົນ ຈຶ່ງຮູ້ວ່າໂຮງຮຽນນີ້ ບໍ່ທັນໄດ້ຮັບຄວາມສົນໃຈເອົາໃຈໃສ່ເທົ່າທີ່ຄວນຈາກຊຸມຊົນຄື: ຈະເອົາບັນດາຄູລົງຢ້ຽມຢາມຊາວບ້ານອ້ອມຂ້າງກໍຍາກ ແລະແຕ່ລະບ້ານບໍ່ຢາກຕ້ອນຮັບ ເຮັດໃຫ້ຄວາມຫ່າງເຫີນລະຫວ່າງການສຶກສາແລະຊຸມຊົນມີຂຶ້ນ, ຂ້າພະເຈົ້າໃຫ້ທັດສະນະຫຼາຍຢ່າງບັນຫາອາດເກີດມາຈາກຫຼາຍປັດໄຈຄື: ຄວາມບໍ່ເຂົ້າໃຈຂອງຊຸມຊົນ, ບໍ່ມີສິ່ງທີ່ກະຕຸ້ນໃຫ້ສັງຄົມເຊື່ອໝັ້ນ, ສັງຄົມເບິ່ງໃນແງ່ລົບ ຕົວຢ່າງ: ການສະຫຼອງວັນຄູແຫ່ງຊາດບໍ່ໄດ້ມີສັງຄົມເຂົ້າມາອວຍພອນ ມີແຕ່ຈັດຕັ້ງຂຶ້ນເອງ ຍໍຕົນເອງ. ຂ້າພະເຈົ້າຊອກວິທີແກ້ໄຂຄື: ຕ້ອງໄດ້ລົງໃກ້ຊິດກັບຊຸມຊົນ ໃຫ້ສັງຄົມເຂົ້າຮ່ວມໃນກິດຈະກຳຕ່າງໆ ຂອງໂຮງຮຽນ ເອົາຄູລົງໄປຢ້ຽມຢາມປະຊາຊົນ ເພື່ອລາຍງານການເຄື່ອນໄຫວຂອງນັກຮຽນ ແຕ່ລະບ້ານໃຫ້ຜູ້ປົກຄອງຮັບຮູ້ ແລະພ້ອມກັນຊອກວິທີແກ້ໄຂ ບັນຫາທີ່ຍັງຄົງຄ້າງ, ຈັດຕັ້ງການອວຍພອນອຳນາດການປົກຄອງຂ້າງນອກ. ຜູ້ປົກຄອງນັກຮຽນທີ່ມາຮຽນຢູ່ໃນໂຮງຮຽນແຫ່ງນີ້ ຫຼືເວົ້າຢ່າງໜຶ່ງຄື: ຕີນອກເຂົ້າໃນ, ຊອກເອົາສັງຄົມທີ່ເຂົ້າໃຈທາງດ້ານການພັດທະນາການສຶກສາ ເຂົ້າມາມີສ່ວນຮ່ວມໃນການປະກອບກິດຈະກຳຕ່າງໆ ເຮັດໃຫ້ເຂົາເຈົ້າເຂົ້າໃຈແຕ່ນັ້ນມາບັນດາກິດຈະກຳທີ່ໂຮງຮຽນຈັດຂຶ້ນ ບັນດາຊຸມຊົນຈະເຂົ້າມາຮ່ວມ ແລະສະໜັບສະໜູນວຽກງານຕ່າງໆທາງວັດຖຸ ແລະຈິດໃຈ. ໃນວັນຄູແຫ່ງຊາດ 7 ຕຸລາແຕ່ລະປີ



ຈະແມ່ນອຳນາດການປົກຄອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ໂດຍເອົາສະຖານທີ່ໂຮງຮຽນເປັນບ່ອນສະຫຼອງ ຈະມີການບາສີໃຫ້ບັນດາຄູອາຈານ ມອບຂອງຂວັນ ມອບຊໍ່ດອກໄມ້ ອວຍພອນຄູ ຊຸກຍູ້ລູກຫຼານກາຍເປັນຮີດຄອງປະຈຳໂຮງຮຽນ ນອກຈາກວຽກງານດັ່ງກ່າວນັ້ນແລ້ວ ຍັງມີການພັດທະນາຮອບດ້ານເພື່ອເປັນສິ່ງຈູງໃຈ ແລະ ສົ່ງເສີມການຮຽນ-ການສອນເຊັ່ນ: ກິລາ, ວັນນະຄະດີ, ຂ່າວສານ,ພອນສະຫວັນໃນການຂຽນບົດເລື່ອງ, ກະວີ, ແຕ້ມຮູບ... ໂດຍມີລາງວັນແກ່ຜູ້ດີເດັ່ນ.

ໃນປີ 2005 ຄະນະອຳນວຍການໂຮງຮຽນ ໄດ້ສົມທົບນຳອຳນາດການປົກຄອງ ເພື່ອປຶກສາຫາລື ຊອກຫາອຸປະກອນບາງຢ່າງ ເພື່ອໃຊ້ເປັນເຄື່ອງສະໜັບສະໜູນການຮຽນ ການສອນໃຫ້ດີຂຶ້ນຄື: ເຄື່ອງຂະຫຍາຍສຽງ, ພິມດີດເພາະວ່າ ສອງອັນນີ້ມີມູນຄ່າສູງສຳລັບໂຮງຮຽນ, ດັ່ງນັ້ນຕ້ອງໄດ້ຮັບການເຫັນດີສະໜັບ ສະໜູນຂອງອຳນາດການປົກຄອງທ້ອງຖິ່ນ ເງິນສ່ວນທີ່ເອົາມາຊື້ເຄື່ອງດັ່ງກ່າວ ແມ່ນເງິນທີ່ປະຢັດໄວ້ໃນສົກຮຽນ 2003-2004 ໃນເມື່ອມີເຄື່ອງດັ່ງກ່າວແລ້ວ ເຮັດໃຫ້ການເຮັດວຽກຄ່ອຍໆສະດວກສະບາຍຂຶ້ນຕື່ມ, ສັງຄົມກໍເຫັນໄດ້ແງ່ຂະຫຍາຍຕົວຮອບດ້ານຂອງໂຮງຮຽນ.

ດ້ານແນວຄິດການເມືອງ ຄູອາຈານ ທຸກຄົນໄດ້ມີແນວຄິດໜຸ່ນທ່ຽງ ມີຫຼັກໝັ້ນຕໍ່ທິດທາງການນຳຂອງໂຮງຮຽນວາງອອກ ມີຄວາມສາມັກຄີກວ້າງຂວາງ ໄດ້ສະແດງອອກຄື: ມີວຽກງານຢູ່ເຮືອນອາຈານໃດກໍຕາມ ຄູທຸກຄົນໄດ້ມີທັງວັດຖຸ ແລະຈິດໃຈພ້ອມກັນຊ່ວຍເຫຼືອ ເຊັ່ນ: ການແຕ່ງງານ, ເກີດລູກ, ເຈັບເປັນອື່ນໆ ດ້ານການຮຽນການສອນກໍມີທ່າກ້າວໜ້າ, ໄດ້ຈັດຕັ້ງມີການສອນເພີ່ມນອກໂມງຮຽນ, ຈັດການສອນ



ບຳລຸງນັກຮຽນເກົ່າ, ບຳລຸງນັກຮຽນອ່ອນຢ່າງເປັນຂະບວນ, ນອກຈາກນັ້ນຍັງຈັດກິດຈະກຳນອກໂມງຮຽນເຊັ່ນ: ຈັດການຕອບຖາມຄວາມຮູ້ວິທະຍາສາດ, ການແຂ່ງຂັນກິລາລະຫວ່າງຫ້ອງ, ລະຫວ່າງຊັ້ນ, ຈັດການສອບເສັງນັກຮຽນເກັ່ງເປັນແຕ່ລະຊັ້ນ ໃນງານບຸນປະຫວັດສາດຕ່າງໆ ຂອງໂຮງຮຽນ.

ດ້ານບຸຄະລາກອນ ກໍໄດ້ຊຸກຍູ້ ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ຄູອາຈານໄດ້ຊອກຮູ້ຮໍ່າຮຽນ ວິຊາຄວາມຮູ້ ເພື່ອມາພັດທະນາວິຊາສອນຂອງຕົນເອງ. ຊຸກຍູ້ຄູອາຈານຍົກລະດັບວິຊາສະເພາະ ໄລຍະສັ້ນ ແລະໄລຍະຍາວຢ່າງຕໍ່ເນື່ອງ.

ດ້ານອາຄານ ສະຖານທີ່ ເຫັນໄດ້ວ່າ ໃນປີນີ້ຈຳນວນນັກຮຽນ ມີປະລິມານເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍ ເຮັດໃຫ້ນັກຮຽນແອອັດ ຍ້ອນອາຄານບໍ່ພຽງພໍ ຂ້າພະເຈົ້າຈຶ່ງໃຫ້ຄຳເຫັນຕໍ່ຄະນະໂຮງຮຽນເພື່ອຊອກຫາວິທີແກ້ໄຂ ຖ້າຂໍຮ້ອງນຳຂັ້ນເທິງພຽງຢ່າງດຽວ ອາດຈະເປັນໄປໄດ້ຍາກ ຫຼືໄດ້ກໍຕ້ອງໃຊ້ເວລາດົນນານ, ຂ້າພະເຈົ້າຈຶ່ງລົງຄຳເຫັນເພື່ອປຶກສາຫາລືຄື: ຂຽນໂຄງການການພັດທະນາຫ້ອງຮຽນ ເພື່ອເຂົ້າປຶກສາຫາລືຍື່ນຜ່ານອຳນາດການປົກຄອງ ແລະພະແນກສຶກສາປະຈຳແຂວງ ແລ້ວແຫຼ່ງທຶນ



ການກໍ່ສ້າງນັ້ນຈະໄດ້ຂໍຈາກຫຼາຍພາກສ່ວນຄື: ຂໍສັງກະສີ ແລະຕະປູ ຈາກພະແນກສຶກສາ, ໂຕະຕັ່ງ ແລະແຮງງານແມ່ນໂຮງຮຽນປະກອບ, ໄມ້ແມ່ນອຳນາດ ການປົກຄອງປະກອບສ່ວນ ບັນຫານີ້ກໍມີຂໍ້ຫຍຸ້ງຍາກຫຼາຍຢ່າງເຊັ່ນ: ປະຊາຊົນບາງບ້ານບໍ່ມີໄມ້, ບາງບ້ານບໍ່ຢາກປະກອບສ່ວນ ແຕ່ໃນເມື່ອໄດ້ອະທິບາຍໃຫ້ເຂົາເຈົ້າເຂົ້າໃຈແລ້ວ ຈຶ່ງຕົກລົງເອກະພາບ ໃຫ້ປະກອບສ່ວນເປັນເງິນສົດ, ສ່ວນນັກຮຽນທີ່ລົ້ນຫ້ອງ ກໍເອົາໄປຮຽນທີ່ໂຮງຮຽນປະຖົມສຶກສາຍອດງື່ມຊົ່ວຄາວ ດ້ວຍວິທີຢືມຫ້ອງຮຽນ.

ໃນປີນີ້ເອງ ນັກກິລາຂອງໂຮງຮຽນ (ນັກຮຽນ) ກໍໄດ້ເຂົ້າຮ່ວມແຂ່ງຂັນໃນງານວັນຄຣດແຄ້ນຈັກກະພັດອາເມລິກາ ຖິ້ມລະເບີດໃສ່ຖ້ຳປີວສາມາດຍາດໄດ້ຂັນທອງມາຄອງ ເຊິ່ງເປັນປະຫວັດສາດເປັນຄັ້ງທຳອິດ ຂອງໂຮງຮຽນ ຄູອາຈານ ແລະນັກຮຽນໃຜໆ ກໍມີຄວາມປິຕິຊົມຊື່ນ ຕໍ່ຜົນງານທີ່ຍາດມາໄດ້ ຊື່ສຽງຂອງໂຮງຮຽນກໍດັງກ້ອງອອກສູ່ສັງຄົມໃນດ້ານກິດຈະກຳນອກຫຼັກສູດ,ນອກຈາກກິລາແລ້ວ ຍັງມີການເຄື່ອນໄຫວສິລະປະວັນນະຄະດີອີກຄື: ການແກະບົດຟ້ອນຂອງອາຈານ ສາຍສະໝອນ ເຮັດໃຫ້ສັງຄົມຮອງຮັບ ແລະກໍໄດ້ອອກເຄື່ອນໄຫວຮັບໃຊ້ຊຸມຊົນຢ່າງເນື່ອງນິດລຽນຕິດ.



ໃນການເຄື່ອນໄຫວ 7 ໜ້າວຽກ ຂອງຜູ້ບໍລິຫານໂຮງຮຽນ ມີທ່າກ້າວຂະຫຍາຍຢ່າງຕໍ່ເນື່ອງເຮັດໃຫ້ຄວາມອິດສາຂອງກຸ່ມຄົນພາຍໃນເກີດຂຶ້ນຢ່າງບໍ່ຮູ້ສຶກຕົວ ເຊິ່ງໄດ້ສະແດງອອກຄື: ມີການຕ້ານກັບແຜນການຂອງໂຮງຮຽນວາງອອກ ບໍ່ຍາກປະຕິບັດຕາມ ໃຊ້ທິດສະດີປ່າວຂ່າວ ຊວນເຊື່ອວ່າ ອາຈານໃນໂຮງຮຽນແຍກອອກເປັນສາມກຸ່ມຄື: ກຸ່ມມັກກິນ, ກຸ່ມເຄັ່ງຄັດ ແລະກຸ່ມເຈົ້າລະບຽບ, ເຮັດໃຫ້ຄວາມແຕກແຍກລະຫວ່າງຄະນະໂຮງຮຽນເລີ່ມມີບັນຫາ. ນອກນັ້ນຍັງປາກົດມີການຍຸແຍ່ ເຮັດໃຫ້ຄວາມບໍ່ເຂົ້າໃຈລະຫວ່າງບຸກຄົນຕໍ່ບຸກຄົນ, ກຸ່ມຄົນກັບກຸ່ມຄົນ ແລະລະຫວ່າງຄູສອນ ແລະຜູ້ບໍລິຫານເກີດຂຶ້ນ,ປາກົດໃຫ້ເຫັນການເຮັດວຽກບໍ່ໄດ້ເອົາໃຈໃສ່, ແຕ່ຜົນງານຕົວເດັ່ນພັດຢາກໄດ້ ໃນການປະຊຸມຕົກລົງແຜນການເຄື່ອນໄຫວບໍ່ເຂົ້າຮ່ວມ, ແຕ່ໃນເມື່ອປະຕິບັດພັດອ້າງເຫດຜົນມາຄັດຄ້ານວ່າຕົນເອງດີເດັ່ນ.



ມາຮອດປີ 2008 ຜົນສຳເລັດຂອງຂ້າພະເຈົ້າກໍຄື ຂອງໂຮງຮຽນ ໄດ້ປາກົດຕົວອອກໃນເວທີສັງຄົມ ຄື: ໄດ້ຮັບການມອບຮັບຫ້ອງອ່ານຢ່າງເປັນທາງການຈາກສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ A.L.C ໃນວັນທີ 14/03/2008 ເຊິ່ງພາຍໃຕ້ການໃຫ້ທຶນຂອງບໍລິສັດ Ford Motor Company ນອກຈາກນີ້ ຍັງມີຫຼາຍສຳນັກງານອົງການຊ່ວຍເຫຼືອເຊັ່ນ: ຄະນະໜ່ວຍຊາວໜຸ່ມ ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ປະຈຳສຳນັກງານນາຍົກລັດຖະມົນຕີ, ອົງການຣູມທູຣີດ ປະຈຳ ສປປ. ລາວ Room to Read in Lao PDR ລວມທັງບຸກຄົນ ແລະອົງການຈັດຕັ້ງອື່ນໆ

ການພັດທະນາການສຶກສາພາຍໃນໂຮງຮຽນ ໄດ້ມີຫຼາຍຮູບແບບຈາກໂຮງຮຽນລະດັບນ້ອຍກາຍມາເປັນໂຮງຮຽນລະດັບກາງ ຍ້ອນປະລິມານນັກຮຽນເພີ່ມຂຶ້ນທຸກໆປີ ເພື່ອເປັນການພັດທະນາທັງຄູ ແລະນັກຮຽນ ຈຶ່ງໄດ້ຈັດການທັດສະນະສຶກສາໃນແຕ່ລະປີຄື: ນຳພາຄູ ແລະນັກຮຽນໄປທັດສະນະສຶກສາສະຖານທີ່ປະຫວັດສາດທົ່ງໄຫຫີນ 2 ອັນເປັນປະຫວັດສາດຂອງແຂວງຊຽງຂວາງຫຼືມໍລະດົກຊາວເມືອງພວນ, ໄດ້ນຳພາຄູອາຈານ ແລະນັກຮຽນຍ່າງຕາມຮອຍກອງພັນທີ 2 ໃນວັນຄົບຮອບ 50 ປີ ການຜ່າວົງປິດລ້ອມຂອງກອງພັນທີສອງອອກຈາກທົ່ງໄຫຫີນ,ຢ້ຽມຢາມປະຊາຊົນ ບ້ານຜາແກ້ວ ແລະທ່ຽວຊົມໄຫຫີນ ທີ່ບ້ານຜາແກ້ວ ຊຶ່ງເປັນສະຖານທີ່ທ່ອງທ່ຽວໃນເຂດພູດອຍ, ເຮັດໃຫ້ປະຊາຊົນມີຄວາມດີອົກດີໃຈຫຼາຍ ເພາະຕັ້ງແຕ່ເກີດມາເຂົາເຈົ້າບໍ່ເຄີຍ ເຫັນຄູອາຈານມາຢ້ຽມຢາມແນວນີ້ຈັກເທື່ອ. ນອກຈາກຄວາມດີໃຈແລ້ວຍັງກໍ່ໃຫ້ເກີດຄວາມສາມັກຄີລະຫວ່າງບ້ານ ກັບໂຮງຮຽນມີຄວາມແໜ້ນແຟ້ນຂຶ້ນຕື່ມ.



ຜາແກ້ວ ເປັນບ້ານພູດອຍເຊິ່ງມີແຕ່ເຜົ່າມົ້ງ 100% ລວມມີ 72 ຄອບຄົວອາໄສຢູ່, ຫ່າງຈາກໂຮງຮຽນ ໄລຍະທາງປະມານ 24 ກິໂລແມັດ, ນັກຮຽນຕ້ອງໄດ້ອອກຈາກບ້ານມາອາໄສມາຢູ່ນຳພີ່ນ້ອງທີ່ຢູ່ບ້ານໃກ້ໂຮງຮຽນ ອາດແມ່ນຍ້ອນມີຄວາມລຳບາກໃນການມາຮຽ ຈຶ່ງເຮັດໃຫ້ ນັກຮຽນຈາກບ້ານນີ້ຫຼາຍຄົນ, ມີຄວາມມຸ່ງໝັ້ນຕັ້ງໃຈສູງກາຍເປັນນັກຮຽນທີ່ດີເດັ່ນພາຍຂອງໂຮງຮຽນ ແລະຫຼາຍຄົນທີ່ຮຽນຈົບໄປແລ້ວ ກໍເປັນຕົວແທນທີ່ດີ ໃນສຳນັກງານອົງການຕ່າງໆ ໄດ້ຮັບການຍ້ອງຍໍຊົມເຊີຍ. ນອກຈາກນີ້ຄະນະອຳນວຍການຍັງນຳພາຄູ ອາຈານ ໄປຊົມບໍ່ນ້ຳຮ້ອນ ເມືອງຄຳ ອັນເປັນສິ່ງມະຫັດສະຈັນທາງທຳມະຊາດ ທີ່ແຂວງຊຽງຂວາງ, ເປົ້າໝາຍແມ່ນແນໃສ່ເຮັດໃຫ້ຄູອາຈານ ແລະນັກຮຽນສາມາດຮັບຮູ້ ແລະເຂົ້າໃຈໃນປະຫວັດສາດ, ວັດຖຸບູຮານ,ການປະດິດຄິດແຕ່ງຂອງຄົນລາວໃນຍຸກສະໄໝ.

ພິເສດ ຍັງໄດ້ຈັດການຕ້ອນຮັບໂຮງຮຽນອື່ນ ເຂົ້າມາຖອດຖອນບົດຮຽນວຽກງານການນຳພາຢູ່ໃນໂຮງຮຽນເຊັ່ນ: ໂຮງຮຽນມັດທະຍົມສຶກສາຕອນຕົ້ນພູກູດ, ໂຮງຮຽນ ມ.ສ ພູວຽງ ເມືອງພູກູດ, ມ.ສ ຕູ້ຢ່າ ເມືອງໜອງແຮດ, ມ.ສ ຈອມເພັດ ເມືອງຄູນ, ມ.ສ ນາປາ ເມືອງຄຳ ແລະໂຮງຮຽນມັດທະຍົມຕົ້ນຕ່າງໆ ຫຼາຍໂຮງຮຽນ.

ຕົກມາຮອດປີ 2010 ກໍເປັນອັນວ່າຄົບຮອບ 10 ປີ ໃນການພັດທະນາໂຮງຮຽນ ມ.ສ ໜອງເປັດ ຊຶ່ງຂ້າພະເຈົ້າໄດ້ມາສືບທອດມູນເຊື້ອອັນດີເດັ່ນຈາກບັນພະບູລຸດຂອງຄູທີ່ໄດ້ໃຫ້ບົດຮຽນມາກ່ອນນັ້ນ ພ້ອມນີ້ກໍຂໍສະແດງຄວາມຮູ້ບຸນຄຸນ, ຄວາມຂອບໃຈໄປຍັງຄູອາຈານຜູ້ທຳອິດ ແລະບັນດາຄູຮຸ່ນຕໍ່ມາ ທີ່ໃຫ້ການສຶກສາແກ່ເຂດຍອດງີ່ມ ແລະເຂດຄັງວຽງພ້ອມທັງໄດ້ສ້າງມູນເຊື້ອອັນດີງາມໄວ້ໃຫ້ແກ່ຄູໃນສະໄໝນີ້ແລະສະໄໝຕໍ່ໄປ.



ມາຮອດມື້ນີ້ ໂຮງຮຽນມັດທະຍົມສຶກສາໜອງເປັດ ໄດ້ມີການພັດທະນາກວ້າງ ໄກພໍສົມຄວນ ມີເຄື່ອງຮັບໃຊ້ໃນຫ້ອງການຄົບຊຸດເຊັ່ນ: ຈັກກ໊ອບປີ (Photo Coppy), ຄອມພິວເຕີ (Computer), ເຄື່ອງຂະຫຍາຍສຽງ, ເຄື່ອງຫຼິ້ນດົນຕີ ທີ່ສາມາດນຳ ໃຊ້ໄດ້ຫຼາຍ ແລະສະດວກສະບາຍ ສາມາດເດີນໄປຕາມຍຸກທັນສະໄໝໄດ້ຈຳນວນໜຶ່ງ

ສຳລັບອາຄານຮອງຮັບນັກຮຽນ ເຖິງຈະບໍ່ພຽງພໍກໍຕາມ. ອົງການສາກົນເຊັ່ນ ບໍລິສັດກາດເຕື່ອງ ທີ່ໄດ້ຊ່ວຍເຫຼືອຄອມພິວເຕີ (Computer) ກໍຍັງຮັບຮອງວ່າຈະມາ ຊ່ວຍເຫຼືອທາງດ້ານ ອາຄານສະຖານທີ່ ແລະຫ້ອງທົດລອງ ໃນອະນາຄົດອີກດ້ວຍ.



ເຖິງຢ່າງໃດກໍດີຢາກຝາກຝັງໃຫ້ຄູອາຈານ ແລະນັກຮຽນທຸກຄົນ ຈົ່ງພ້ອມໃຈກັນປົກ ປັກຮັກສາ ແລະນຳໃຊ້ສິ່ງທີ່ໄດ້ມາໃຫ້ມີປະ ໂຫຍດຍາວນານພ້ອມກັນໃຊ້ຫົວຄິດປະ ດິດສ້າງ ເພື່ອພັດທະນາເດັກໃຫ້ມີຄວາມຮູ້, ຄວາມສາມາດ,ຄວາມສະຫຼາດ,ມີຄຸນສົມ ບັດດີ ເປັນທີ່ໄວ້ເນື້ອເຊື່ອໃຈຂອງການຈັດ ຕັ້ງແລະປະຊາຊົນທີ່ໃຫ້ການອູ້ມຊູຊ່ວຍ ເຫຼືອຕະຫຼອດມາ.





## ພູຄ້ົວ + ພູສັນ ແລະ ພູຮັກ ພູໂຮຍ

### ບຸນມີ ອຸດທະຈັກ ຫົວໜ້າຈຸດສຸມພັດທະນາ ເຂດຍອດງື່ມ ເປັນຜູ້ເລົ່າ

### ບັນທຶກໂດຍ: ຄຳອອນ ເພັດດາວເຮືອງ

.........................................

ໃນໂອກາດທີ່ຂ້າພະເຈົ້າໄດ້ໂທລະສັບໄປພົວພັນຂໍ້ມູນບາງຢ່າງນຳ ທ່ານຄູ ຄຳພວງດາລາແສນກ່ຽວກັບການຈັດພິມປື້ມນີ້ ກໍເລີຍຖາມເພິ່ນວ່າ: ອຳນາດການປົກຄອງທ້ອງຖິ່ນຍອດງື່ມເຮົາດຽວນີ້ແມ່ນໃຜເປັນຫົວໜ້າເຂດ ? ທ່ານ ຄຳພວງ ກໍບອກວ່າ ໂອ..ກໍພໍດີຫົວໜ້າເຂດ ເຂົາມາເຮັດວຽກຢູ່ບໍລິເວນນີ້ ມີອັນເດີ ກໍລົມກັບເຂົາເລີຍເນ ! ດຽວນີ້ເຂົາພວມພັກຜ່ອນ ແລະມາແວ່ກິນງາຍຢູ່ສາມແຍກໜອງເປັດນີ້ເນ! ໂອຍຈັ່ງ ແມ່ນຄ້ອນພໍດີອີກແລ້ວ, ຕົນຈຶ່ງຂໍອະນຸຍາດຈາກເຈົ້າຂອງເຮືອນບ່ອນຄະນະເຂດມາແວ່ກິນງາຍນັ້ນ ເພື່ອຂໍລົມກັບຫົວໜ້າເຂດຈຸດສຸມພັດທະນາຍອດງື່ມ( ໜອງເປັດ) ແລະກໍໄດ້ເນື້ອໃນໃຈຄວາມຄືດັ່ງນີ້:

ນ້ອງນີ້ກໍເປັນແຕ່ຊຽງ ບໍ່ໄດ້ເປັນອ້າຍຫຼວງ ອ້າຍກາງອັນເລີ ແຕ່ພໍ່ແມ່ພີ່ນ້ອງໃນທ້ອງຖິ່ນນີ້ມີຄວາມຮັກແພງແລະໄວ້ວາງໃຈ ຈຶ່ງຖືກເລືອກໃຫ້ເປັນຫົວໜ້າເຂດມາແຕ່ ປີ 1993 ພຸ້ນມາ ນ້ອງມີຊື່ວ່າ ບຸນມີ ອຸດທະຈັກ, ປີນີ້ອາຍຸໄດ້ 52 ປີ, ເປັນຄົນທ້ອງຖິ່ນຕີນພູຮັກ ພູໂຮຍນີ້ເອງ ເມື່ອກ່ອນບ້ານຂອງນ້ອງເອີ້ນວ່າບ້ານຮ້າງ (ຄົນເກົ່າເຖົ້າແກ່ ເລົ່າລືຕໍ່ໆກັນມາວ່າ ທ້າວຮັກ ກັບນາງໂຮຍ ມີຄວາມໝັ້ນສັນຍາຮັກໄຄ່ໄມຕີຕໍ່ກັນແຕ່ ຍ້ອນອຸປະສັກບາງຢ່າງມາຜ່າມ້າງ ຈຶ່ງກາຍເປັນຄວາມຮັກຮ້າງ, ເມື່ອຮັກບໍ່ສົມຫວັງຄູ່ ຮັກທັງສອງກໍ່ພາກັນກັ້ນໃຈຕາຍ ແລະໄດ້ກາຍເປັນພູຮັກ ພູໂຮຍເຖິງທຸກວັນນີ້) ເມື່ອມາເຖິງລະບອບໃໝ່ ກໍ່ໄດ້ປ່ຽນຊື່ບ້ານຮ້າງ ມາເປັນບ້ານໂພນຄຳເພື່ອໃຫ້ຊາວບ້ານ ຫຼືພີ່ນ້ອງໃນບໍລິເວນພູຮັກ ພູໂຮຍ ມີຄວາມສຸກສົມຫວັງໃນຊີວິດຮັກແລະຄອບຄົວແຕ່ລະຄົນ ວ່າຊັ້ນເນ!!!.

ລົມກັນບໍ່ທັນເຂົ້າເນື້ອໃນສາຍກໍ່ຕັດຕືດໆ ໂອ! ເງິນໝົດ! ເຕີມບັດແລ້ວຈຶ່ງລົມຕໍ່. ຫົວໜ້າເຂດໄດ້ໃຫ້ຮູ້ວ່າ: ຄະນະພັກຮາກຖານເຂດ ມີ 7 ຄົນ, ຄະນະປົກຄອງເຂດລວມທັງໝົດມີ 11 ຄົນ, ໄດ້ມີຕາງໜ້າທຸກພາກສ່ວນເຂົ້າຮ່ວມນຳເພື່ອເປັນເອກະພາບໃນການນຳພາຊາວບ້ານຈຳນວນ 22 ບ້ານ ດັ່ງມີລາຍຊື່ ບ້ານຄື: ບ້ານຍອດງື່ມ, ບ້ານໂພນຄຳ, ບ້ານມອນ, ບ້ານຄາຍ, ບ້ານແກ່ວ, ບ້ານວຽງໄຊ, ບ້ານເທີນ, ບ້ານນ້ຳເກາະ, ບ້ານຍວນທອງ, ບ້ານເມືອງນ້ອຍ, ບ້ານຊ້ວນ, ບ້ານອໍ້ອັ່ນ, ບ້ານຕ້າ, ບ້ານຄັງໂດນ, ບ້ານທ່າໂຈກ, ບ້ານນ້ຳແພງ, ບ້ານພູສັນ, ບ້ານບວກກົບ, ບ້ານນາສາລາ, ບ້ານປ່າຂົມ, ບ້ານນ້ຳຄະ ແລະບ້ານຜາແກ້ວ...

(ບໍ່ວ່າແຕ່ຫົວໜ້າເຂດເລົ່າຊື່ບ້ານ, ຜູ້ຂຽນໄດ້ຫຼອນທົດລອງຖາມພໍ່ເຖົ້າຈ່ອຍ ຢູ່ສາມແຍກໜອງເປັດເພິ່ນກໍ່ຕອບຂ້ອຍຢ່າງລ່ຽນໄຫຼປານບົດທ່ອງຂຶ້ນໃຈບັນຂ້ອຍຖາມວ່າອ່ານໃຫ້ຟັງບໍ່? ເພິ່ນຕອບວ່າ ຈື່ຖ້າອ່ານເອັດເລີ,ຄະນະເຂດນີ້ເຂົາທ່ອງຂຶ້ນໃຈ ແລະເຂົາໄປທຸກທີທຸກບ່ອນ ແລະຈື່ໄດ້ເລົ່າໄດ້ໝົດທຸກໆ (ບ້ານ)...ເພິ່ນຍັງເວົ້າໄມ້ຕື່ມອີກວ່າ: ນາຍບ້ານແຕ່ລະບ້ານ ເຂົາຍັງຈື່ຊື່ຊາວບ້ານໄດ້ໝົດທຸກຄົນເນ.( ຂໍຊົມເຊີຍ ໆ ໆ)

ປະຊາກອນໃນທົ່ວເຂດ ມີ 10,448 ຄົນ, ຍິງ 5,107 ຄົນ, ທົ່ວເຂດມີໂຮງຮຽນ 12 ບ່ອນ, ແຕ່ມີ ມັດທະຍົມສົມບູນ ພຽງແຕ່ບ່ອນດຽວ ຄືໜອງເປັດນີ້ແຫຼະ, ຊຶ່ງສົກຮຽນນີ້ມີນັກຮຽນທັງໝົດ 1,650 ຄົນ, ມີຄູອາຈານຍິງ ແລະຊາຍ 62 ຄົນ. ສ່ວນປະຫວັດແລະມູນເຊື້ອການສຶກສາທີ່ລິເລີ່ມມາແຕ່ອະດີດນັ້ນ, ນ້ອງກໍ່ເຫັນດີຕາມການປະກອບຄຳເຫັນຂອງຄະນະອຳນວຍການໂຮງຮຽນ ແລະຄູອາຈານທຸກຄົນ, ພິເສດແມ່ນພໍ່ເຖົ້າ ພວງນີ້ແຫຼະ ທີ່ເປັນຜູ້ເລົ່າຄືນສູ່ລູກຫຼານຟັງ, ຄົນຮຸ່ນຫຼັງຈຶ່ງໄດ້ຮັບຮູ້ ແລະເຂົ້າໃຈເຖິງຄວາມຫຍຸ້ງຍາກລຳບາກ, ຄວາມບຸກບືນ ແລະການເຕີບໃຫຍ່ຂະຫຍາຍຕົວ ມາຈົນຮອດມື້ນີ້.

ໄດ້ຍິນຂ່າວ ແລະຮັບຮູ້ເປັນຢ່າງດີ ມາກັນແຕ່ປີກາຍມາຮອດປີນີ້, ວ່າໂຮງຮຽນມັດທະຍົມອິນແປງ (ເຂດຄັງວຽງ) ໄດ້ຮັບການພັດທະນາຢ່າງພິລຶກຄຶກຄື້ນດ້ວຍການເຕົ້າໂຮມທຶນຂອງແມ່ປ້າ ຄຳເມິງ ວໍລະຈິດ ບ້ານສີຄູນ ພ້ອມຄອບຄົວລູກເຕົ້າ ແລະຍາດຕິພີ່ນ້ອງມາສ້າງ ແລະມາເຖິງມື້ນີ້ ເພິ່ນກໍ່ໄດ້ແບ່ງສັດທາສ້າງປຶ້ມມູນເຊື້ອການສຶກສາໃຫ້ແກ່ໂຮງຮຽນ ມ.ສ ໜອງເປັດ (ເຂດຍອດງື່ມ) ພິເສດ: ແມ່ນມອບແກ່ທ່ານຄູເກົ່າຂອງເພິ່ນ (ພໍ່ເຖົ້າພວງ ດາລາແສນ) ສະນັ້ນໃນໂອກາດນີ້ກໍຂໍອະນຸຍາດຕາງໜ້າໃຫ້ແກ່ຊາວບ້ານ, ລູກຫຼານ ແລະຄູອາຈານ ສະແດງຄວາມຂອບໃຈເປັນຢ່າງສູງນຳແມ່ປ້າຄຳເມິງ ວໍລະຈິດ ພ້ອມດ້ວຍຄອບຄົວ ແລະຜູ້ຮ່ວມສັດທາທຸກໆທ່ານ ຂໍອວຍພອນແດ່ພວກເພິ່ນຈົ່ງຢູ່ດີມີສຸກ ສົມດັ່ງເພິ່ນເປັນຫ່ວງເປັນໃຍນຳລູກຫຼານບ້ານເມືອງຢ່າງແທ້ຈິງ.

ຂໍໃຫ້ມິດຕະພາບຂອງທຳມະຊາດ: ພູຄົ້ວ+ພູສັນແລະພູຮັກພູໂຮຍ ຈົ່ງໝັ້ນຄົງ ຂະໜົງແກ່ນເປັນສັນຍາຮັກແຫ່ງດວງໃຈຂອງປະຊາຄັງ+ຄາຍ ກໍຄືປະຊາຊົນຄົນສອງເຂດຄັງວຽງ ແລະຍອດງື່ມຈົ່ງຮັກແພງກັນຍືນຍົງຄົງຕົວ ແລະຂະຫຍາຍຕົວຕະຫຼອດໄປພ້ອມກັນສ້າງສາພັດທະນາບ້ານເມືອງ.

ພ້ອມນີ້ນ້ອງໄດ້ຝາກຮູບຄະນະພັກ ຄະນະຮັບຜິດຊອບເຂດໃຫ້ເອື້ອຍ (ແຕ່ບໍ່ທັນຄົບ) ຮູບນີ້ໄດ້ຝາກນຳທ້າວ ຕົວ ຄົນບ້ານທົ່ງມີໄຊ ເມືອງແປກ, ຜູ້ຮັບຜິດຊອບລົດເມ ບກ 0180 ຫນອງແຮດ - ວຽງຈັນມາໃຫ້ເນີ. ຂໍຂອບໃຈນຳຄະນະທຸກທ່ານທີ່ມີສ່ວນຮ່ວມໃນຄັ້ງນີ້







**ຄະນະກຸ່ມ**

1. ທ້າວ ບຸນມີ ອຸດທະຈັກ ອາຍຸ 52 ປີ ກຳມະການພັກເມືອງແປກ,ເລຂາພັກຮາກຖານ ກຸ່ມໜອງເປັດ, ຫົວໜ້າກຸ່ມໜອງເປັດ ແຕ່ປີ 1997-2010
2. ຮຕ. ພົມມາ ໄຊສະຫວັນ ອາຍຸ 60 ປີ, ຮອງເລຂາພັກຮາກຖານ, ຮອງຫົວໜ້າກຸ່ມ, ຫົວໜ້າກອງຮ້ອຍກອງຫຼອນກຸ່ມ, (1999-ປັດຈຸບັນ).
3. ຈານ ພິມພາ ນັນທະວົງ ອາຍຸ 43 ປີ ຄະນະພັກຮາກຖານ ຄະນະກຸ່ມ,ປະທານແນວ ໂຮມກຸ່ມ, ປະທານກວດກາພັກ, (2009-ປັດຈຸບັນ)







4. ທ້າວ ນັນ ສຸພັນພົບ ອາຍຸ 47 ປີ: ຄະນະພັກ ຄະນະກຸ່ມ, ຮອງຫົວໜ້າກອງຮ້ອຍ ກອງຫຼອນກຸ່ມ ແຕ່ 2006-ປັດຈຸບັນ
5. ນາງ ບົວພາ ມາລາວົງ ອາຍຸ 40 ປີ ຄະນະພັກຮາກຖານ, ຄະນະກຸ່ມ,ຄະນະບໍລິຫານ ງານແມ່ຍິງ ເມືອງແປກ, ປະທານສະຫະພັນແມ່ຍິງກຸ່ມໜອງເປັດ 2007-ປັດຈຸບັນ.
6. ທ້າວ ພອນຄຳ ດາລາແສນ ອາຍຸ 40 ປີ: ຄະນະພັກຮາກຖານ, ຄະນະກຸ່ມ, ຄະນະບໍ ລິຫານງານຊາວໜຸ່ມເມືອງແປກ, ເລຂາຊາວໜຸ່ມກຸ່ມໜອງເປັດ, 2005-ປັດຈຸບັນ.





7. ທ້າວ ບຸນໄຊວີ ຢົ້ວຕົ່ງ ອາຍຸ 45 ປີ: ຄະນະພັກຮາກຖານ ຄະນະກຸ່ມ ຫົວໜ້າ ປ.ກ.ສ ກຸ່ມ, ແຕ່ປີ 2005-ປັດຈຸບັນ
8. ທ້າວ ຕົ່ງຢົ້ງລໍ່ ເຢ່ຍລົ່ງ ອາຍຸ 34 ປີ ຄະນະກຸ່ມ ຮອງເລຂາຊາວໜຸ່ມກຸ່ມ ແຕ່ປີ 2005-ປັດຈຸບັນ.
9. ທ້າວ ໜໍລົ້ງມົວ ອາຍຸ 45 ປີ : ຄະນະກຸ່ມ, ຄະນະກອງຮ້ອຍກອງຫຼອນກຸ່ມ ແຕ່ປີ 2005-ປັດຈຸບັນ.




10. ນ. ຊົວລໍ່ ຈົ່ງວີ ອາຍຸ 54 ປີ: ຄະນະກຸ່ມ, ຮອງສະຫະພັນແມ່ຍິງກຸ່ມ, ຄະນະບໍລິຫານງານແມ່ຍິງ ເມືອງແປກ, ແຕ່ປີ 1993-ປັດຈຸບັນ.
11. ຮທ. ພູທອນ ໜໍ່ຄຳມີ ອາຍຸ 32 ປີ, ຄະນະກຸ່ມ, ຫົວໜ້າປ.ກ.ສ ກຸ່ມບ້ານ, ແຕ່ປີ 2007-ປັດຈຸບັນ.

ທົ່ວກຸ່ມມີ 22 ບ້ານ, ມີ 27 ໜ່ວຍພັກຂື້ນນຳ, ມີໂຮງຮຽນປະຖົມ-ມັດທະຍົມສົມບູນລວມ 12 ແຫ່ງ + ຄູອາຈານ: 163 ຄົນ, ຍິງ 80 ຄົນ.. ປະຊາກອນທັງຫມົດ: 1,572 ຫຼັງຄາເຮືອນ, ມີ 10,239 ຄົນ ຍິງ 5,107 ຄົນ ເຜົ່າມົ້ງ 954 ຫຼັງຄາເຮືອນ, ມີ 6,593 ຄົນ ຍິງ 3,348 ຄົນ. ລາວລຸ່ມ 470 ຫຼັງຄາເຮືອນ, ມີ 2,766 ຄົນ, ຍິງ 1,335 ຄົນ. ກືມມຸ 148 ຫຼັງຄາເຮືອນ, ມີ 880 ຄົນ, ຍິງ 424 ຄົນ. ສະມາຊິກພັກ: 374 ສະຫາຍ, ຍິງ 105 ຄົນ. ກຳມະບານ: 163 ຄົນ, ຍິງ 80 ຄົນ.

## ສາວຄູຄູ່ຮັກ
ຄຳອອນ ເພັດດາວເຮືອງ

..........................................

ສານນີ້ຂຽນຈາກອ້າຍ ກຳ້ຝ່າຍກຳມະກອນ
ຜູ້ລ້ຽງຕອນໝູເຖິກ ພໍ່ແມ່ພັນ ແລະໝູນ້ອຍ
ອ້າຍນີ້ຄອງຄອຍຖ້າ ສະເໜຫາຮັກຮ່ວມ
ຫາກບໍ່ທັນພົບພໍ້ ພໍໃຫ້ຖືກພະໄທ

ພໍແຕ່ຄິດໄຄ່ຮູ້ ວ່ານ້ອງນາດສາວຄູ
ທີ່ຈິງໃຈສະຫງວນຮັກ ບໍ່ຕ່ຳຕິຕົນອ້າຍ
ອ້າຍແສນດີໃຈລົ້ນ ຂຽນສານແລ້ວຮີບສົ່ງ
ຈຸດປະສົງຕອບຕ້ອນ ຂອບໃຈນ້ອງນາດຄູ ພີ້ແລ້ວ

ສັງຄົມໄດ້ແບ່ງໃຫ້ ວຽກງານໃຫຍ່ໜັກເບົາ
ໃຜຜູ້ທຳງານຫຍັງ ບົດບາດມີພຽງພ້ອມ
ໃຜຜູ້ຕິຖະແຫຼງເວົ້າ ການງານນັ້ນສູງຕ່ຳ
ມັນບໍ່ດີດອກນ້ອງ ຄົນນັ້ນບໍ່ຊາບຊຶ້ມ ແທ້ແລ້ວ

ໃຜຜູ້ຕິຕ່ຳຕ້ອຍ ຄຸນຄ່າຂອງຄູ
ນ້ອງຢ່າເອົາຫູຟັງ ອັ່ງມະໂນໃນນ້ອງ
ຂໍໃຫ້ເອົາໃຈຕັ້ງ ສອນດີນັກຮຽນເກັ່ງ
ການສອບເສັງທຸກຄັ້ງ ຄະແນນໄດ້ດີເດັ່ນ ນັ້ນທ້ອນ

ຂໍໃຫ້ນົງນາດນ້ອງ ຝຶກຝົນແອບຕົນເອງ
ເດັ່ນທຸກຄຸນສົມບັດ ແລະເດັ່ນທັງຄວາມຮູ້
ນ້ອງຈົ່ງດູແລນ້ອຍ ເຍົາໄວທີ່ຮຽນຮ່ຳ
ສົມດັ່ງຄຳຊ່າຍ້ອງ ວ່ານາງນ້ອງແມ່ນຍອດຄູ ນັ້ນເນີ

ສຳລັບແນວຄິດອ້າຍ ທາງຝ່າຍກຳມະກອນ
ໄດ້ຍົກສູງຄຸນຄູ ຄ່າເກີນໄກກວ້າງ
ການລ້ຽງໝູກໍໄດ້ນຳໃຊ້ ວິທະຍາການເຂົ້າມາໃສ່
ຖ້າຂາດຄູສອນສັ່ງຊີ້ ເມືອງບ້ານຊິຈຸ່ມຈົມ ແທ້ແລ້ວ

ໃຜຊິຕິຕ່ຳຕ້ອຍ ກໍເຊີນຊ່າງຕາມເຂົາ
ອ້າຍລ້ຽງໝູນ້ອງເປັນຄູ ແຂ່ງຂັນກັນສ້າງ
ແຜນການລັດວາງໄວ້ ເຕັມໃຈປະກອບສ່ວນ
ຂໍເຊີນຊວນພີ່ນ້ອງ ຈົ່ງປົກປ້ອງກຽດຄູ ແດ່ທ້ອນ

ຖ້າວ່າອ້າຍ ແລະນ້ອງ ປະຄອງຄູ່ຄຽງກັນ
ຈະມີຄວາມສຸກສັນ ຕໍ່ໄປພາຍໜ້າ
ເຮົາແຂ່ງຂັນກັນສ້າງ ຜົນງານບໍ່ເວັ້ນຫວ່າງ
ອ້າຍບໍ່ວາງນາດນ້ອງ ຄູໄວ້ໃຫ້ບໍ່ຮອໃຈ ດອກເນີ

ນ້ອງຢ່າຄິດເວົ້າອ້າງ ກາງຕໍ່ທາງໄກ
ໃຫ້ນ້ອງຫັນມາມອງ ບ່າວກຳມະກອນພີ້
ພໍໃຫ້ມີກຳລັງໃຈສູ້ ຜະລິດໝູອອກຈຳໜ່າຍ
ຫາລາຍໄດ້ເພີ່ມຂຶ້ນ ເຮົາເຈົ້າ ແລະລັດຫຼວງ ນ້ອງເອີຍ

ໃນໂອກາດຄຶກຄື້ນ ສະຫຼອງມ່ວນວັນຄູ
ທີ່ໝູນວຽນມາຄົບ ທຸກໆປີໂຮມເຕົ້າ
ນ້ອງຈົ່ງສຸກຂີພ້ອມ ຄູອາຈານທົ່ວທັງຊາດ
ປະກາດລືລັ່ນກ້ອງ ພະຄຸນເຄົ້າຄ່າຄູ ນັ້ນເນີ



## ຄວາມຫຼັງຝັງໃຈ

**ໂດຍ: ຮ້ອຍເອກ ຄຳເມີງ ວໍລະຈິດ**

(ໜຶ່ງໃນຖັນແຖວນັກຮົບເສື້ອຂາວໃນເມື່ອກ່ອນ)
ຖອດຈາກໜັງສືພິມ ແມ່ຍິງລາວ ສະບັບທີ 358
ປີທີ 30

..............................................

ເພື່ອນນັກຮົບທຸກຄົນ, ນາຍ ແລະພົນທະຫານທຸກທ່ານໂດຍສະເພາະແມ່ນນັກຮົບເສື້ອຂາວກໍຄືແພດປະຕິວັດນັ້ນເອງ. ທ່ານທັງຫຼາຍຍັງຄົງຈະຈື່ຈຳໄດ້ດີໃນບັ້ນຮົບໂອເດແອນ, ບັ້ນຮົບກູ້ກຽດ, ບັ້ນຮົບທະນົງກຽດ... ເຫດການດັ່ງກ່າວເຖິງວ່າຈະບໍ່ມີໂອກາດໄດ້ກັບຕ່າວຄືນມາ....ແຕ່ມັນຍັງຄົງຝັງໄວ້ຢູ່ໃນຄວາມຊົງຈຳຂອງຂ້າພະເຈົ້າຢ່າງບໍ່ມີມື້ຫຼົງລືມໄດ້, ແຕ່ລະມື້ ແຕ່ລະຊົ່ວໂມງແມ່ນຈະໄດ້ຍິນແຕ່ສຽງຍົນທີ່ບິນເຈີ້ຍເຈີດໄປມາຄອນໆ ກໍຖິ້ມລະເບີດໃສ່ດິນແດນຊຽງຂວາງ ເຮັດໃຫ້ປະຊາຊົນ, ໄຮ່ນາ ຮົ້ວສວນ, ເຮືອນຊານບ້ານຊ່ອງຖືກທຳລາຍ ເຜົາໄໝ້ໝົດກ້ຽງ.

ທຸກໆຄົນລ້ວນແຕ່ໄປປະກອບສ່ວນເຫື່ອແຮງ, ເລືອດເນື້ອຂອງຕົນເອງເພື່ອປະເທດຊາດແລະປິຕຸພູມທີ່ແສນຮັກແລະຫວງແຫນຂອງພວກເຮົາ, ບັນດາທ່ານນັກຮົບຜູ້ກ້າແກ່ນບາງຄົນກໍ່ເສຍຊີວິດ, ບາງຄົນກໍ່ເສຍອົງຄະ, ບາງຄົນກໍ່ເສຍພໍ່, ບາງຄົນກໍ່ເສຍແມ່, ເສຍລູກແລະບາງຄົນກໍ່ສູນເສຍໝົດຄົນທີ່ຕົນເອງຮັກກໍ່ຄືຄອບຄົວ ແລະໃນນີ້ຂ້າພະເຈົ້າຢາກຍົກຂຶ້ນມາບາງຄົນທີ່ຍັງຜູກພັນ ແລະຢູ່ໃນຄວາມຊົງຈຳ ໃນດວງໃຈຂອງຂ້າພະເຈົ້າຕະຫຼອດມານັ້ນກໍ່ຄືເຫດການທີ່ເກີດກັບນ້ອງສາວສອງຄົນທີ່ເຄີຍກິນສຸກກິນດິບນຳກັນ, ຮ່ວມວຽກງານນຳກັນ, ຮັກກັນເໝືອນເອື້ອຍນ້ອງສາຍເລືອດດຽວກັນ,

ມີມື້ໜຶ່ງ ນ້ອງສອງຄົນໄດ້ໄປຮັບຢາ ເວລາຍ່າງກັບມາຕາມສາຍທາງເລກ 7 ນັ້ນ, ຟ້າເອີຍ ! ຍົນໄດ້ຖິ້ມລະເບີດໃສ່ ເຮັດໃຫ້ນາງພອນຄຳ ຖືກບາດເຈັບໜັກ ເລືອດໄຫຼອອກຫຼາຍ ຈົນເຖິງຂັ້ນເສຍຊີວິດ (ຂໍໃຫ້ນ້ອງຈົ່ງໄປສູ່ສຸຄະຕິເຖີດ). ສ່ວນນາງຄຳໃບພັດຖືກບາດແຜສະໝອງ ຊ້ຳບໍ່ໜຳລູກພັດຕາຍເສຍ ຜົວພັດຕາຍຈາກ (ເອື້ອຍຂໍເປັນກຳລັງໃຈໃຫ້ນ້ອງຈົ່ງ ສູ້ຕໍ່ໄປເພື່ອລູກ ແລະຕົນເອງ)

ໜຶ່ງໃນຫຼາຍເຫດການ ທີ່ຂ້າພະເຈົ້າຈື່ບໍ່ລືມ ແມ່ນໃນບັ້ນຮົບກູ້ກຽດ ເຫດເກີດໃນເວລາທີ່ກຳລັງເດີນທາງເຄື່ອນຍ້າຍຄົນເຈັບຮອດບ້ານໂນນ ກໍຖືກຍົນຂອງຈັກກະພັດອາເມລິກາຖິ້ມລະເບີດບຸກໂຈມຕີຢ່າງຮ້າຍແຮງ ຂ້າພະເຈົ້າໄດ້ຂົນເອົາຄົນເຈັບເຂົ້າຂຸມ

ຄອງຫຼົບໄພແລ້ວ ອອກມາເຝົ້າຍາມຢູ່ປາກຂຸມຄອງ ກັບໝູ່ສອງຄົນຈົນຮອດ 8:00 ໂມງເຊົ້າ ຍົນກໍ່ຍັງສືບຕໍ່ຍິງລະເບີດຢ່າງບໍ່ຂາດສາຍ ຂ້າພະເຈົ້າຈຶ່ງ ໄດ້ຕັດສິນໃຈເຈ່ຍເອົາຄົນເຈັບທີ່ຖືກລະເບີດຂາຫັກເບື້ອງໜຶ່ງ ຊື່ ທ້າວສອນ (ປັດຈຸບັນເປັນຄະນະກອງບັນຊາການທະຫານແຂວງວຽງຈັນ) ອອກເດີນທາງແຕ່ບ້ານໂນນໄປບ້ານຄັງເໝີຍ ແລະໄດ້ປຶກສານຳກອງຫຼອນ ພໍຮອດ 3:00 ໂມງເຊົ້າ ກໍ່ໄດ້ສືບຕໍ່ເຈ່ຍຄົນເຈັບຍ່າງເລາະຕາມແມ່ນ້ຳລ້ອງໄກ່ພໍຍ່າງໄປໄດ້ປະມານ 4 ກິໂລແມັດກໍ່ມີລະເບີດແຕກຂຶ້ນແລະຍ່າງຕໍ່ໄປອີກປະມານ 50 ແມັດ ກໍ່ມີລະເບີດແຕກຂຶ້ນອີກ,ຕົນເອງກໍ່ຍັງສືບຕໍ່ເຈ່ຍຄົນເຈັບຍ່າງຕໍ່ໄປອີກປະມານ 50 ແມັດ ລະເບີດກໍ່ແຕກຂຶ້ນອີກ ຕົນຈຶ່ງໄດ້ຕັດສິນໃຈເຈ່ຍເອົາຄົນເຈັບຂຶ້ນໄປທາງຫ້ວຍ ພໍໄດ້ປະມານ 5 ແມັດ ລະເບີດກໍໄດ້ແຕກຂຶ້ນຢ່າງແຮງ ເຮັດໃຫ້ຂາເບື້ອງທີສອງຂອງຄົນເຈັບທີ່ຂ້າພະເຈົ້າເຈ່ຍຢູ່ນັ້ນຖືກລະເບີດອີກ ສຳລັບຂ້າພະເຈົ້າຍ້ອນຫ່ວງຄົນເຈັບຈຶ່ງບໍ່ຮູ້ ວ່າຕົນໄດ້ຮັບບາດເຈັບ ເພາະບໍ່ແນມເຫັນຫຍັງໝົດ ຈົນທ້າວສອນຄົນເຈັບທີ່ຕົນກຳລັງເຈ່ຍຢູ່ບ່ານັ້ນຮ້ອງຂຶ້ນຢ່າງແຮງວ່າ:

ເອື້ອຍ ! ເບິ່ງແມ່ ໜ້າຕາຕົນໂຕເອື້ອຍເລືອດໄຫຼອອກອາບທົ່ວໂຕແລ້ວເນ !

ຕົນເອງຈຶ່ງຮູ້ວ່າຖືກລະເບີດແລະບໍ່ສາມາດເດີນທາງຕໍ່ໄປໄດ້, ຈາກນັ້ນຈຶ່ງມີກອງພັນ 18 B ມາຮັບເອົາໄປພັກຢູ່ບ້ານຄັງເໝີຍໄດ້ 7 ມື້ ຈຶ່ງມີກອງພັນ 71 ມາຮັບເອົາໄປປິ່ນປົວຢູ່ໂຮງໝໍນ້ຳກັ່ນ, ສ່ວນທ້າວສອນ ຄົນເຈັບແມ່ນ ນາງບົວຄຳ ເປັນຜູ້ສືບຕໍ່ໄປສົ່ງໂຮງໝໍບ້ານຕາດ.

ບັນດາທ່ານທີ່ເຄົາລົບ ! ເພື່ອນນັກຮົບແພດປະຕິວັດທັງຫຼາຍ ໜ້າທີ່ອັນມີກຽດຂອງພວກເຮົາແມ່ນຮັບໃຊ້ຄົນເຈັບ ຄ່ຳບໍ່ໄດ້ຍືນ ຄືນບໍ່ໄດ້ຢູ່ ຮັກຄົນເຈັບຄືກັນ ກັບຮັກລູກໃນອຸທອນຂອງຕົນເອງ ເມື່ອຄົນເຈັບຮ້ອງຄວນຄາງແພດ ຈະຢູ່ຄຽງຂ້າງສະເໝີຊຶ່ງມັນແມ່ນຄຸນສົມບັດ ຈັນຍາບັນຂອງນາງແພດປະຕິວັດ.

ເອື້ອຍນ້ອງແມ່ຍິງຂອງພວກເຮົາ ໄດ້ຄຽງບ່າຄຽງໄຫຼ່ກັບເພດຊາຍ, ເຮັດທຸກສິ່ງທຸກຢ່າງເພື່ອແນວໜ້າ, ເພື່ອພາລະກິດປົດປ່ອຍຊາດ, ຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານຢ່າງອົງອາດກ້າຫານ, ຕໍ່ສູ້ບໍ່ຍອມຈຳນົນ, ຍອມເສຍສະຫຼະເພື່ອປະເທດຊາດ ເພື່ອປະຊາຊົນ, ຍອມຕາຍດີກວ່າເປັນຂ້ອຍຊາດອື່ນ ນັ້ນຄືຄະຕິເຕືອນໃຈຂອງນັກຮົບປະຕິວັດ.

ນັກຮົບປະຕິວັດທຸກໆທ່ານ ຂ້າພະເຈົ້າຄິດວ່າ ແມ່ຍິງລາວບັນດາເຜົ່າກໍຄືປວງຊົນລາວທັງຊາດ ຈະຮັກສາມູນເຊື້ອປະຕິວັດທີ່ຮຸ່ນພໍ່, ຮຸ່ນແມ່, ລຸງປ້າ ອາວອາທີ່ຍາດມາໄດ້ດ້ວຍເລືອດ ແລະນ້ຳຕາ ຈຶ່ງພ້ອມກັນປົກປັກຮັກສາໝາກຜົນຂອງການປະຕິວັດໃຫ້ໝັ້ນຄົງຢູ່ຄູ່ກັບຊາດລາວຕະຫຼອດໄປ.



# ນັກຮຽນເກົ່າເລົ່າຄວາມຫຼັງ

ໂດຍ: ຄຳອອນ ເພັດດາວເຮືອງ

ເມື່ອໄດ້ອ່ານປຶ້ມ **ຫວນຄືນການສຶກສາໃນຂົງເຂດຍອດງື່ມ-ຄັງວຽງ** (ອາຈານຄຳແກ້ວ ພິມມະສອນລວບລວມ) ສິ້ນສຸດລົງ, ຂ້າພະເຈົ້າກໍຍິ່ງຫວນຄິດເຖິງອະດີດຂອງຕົນໃນຄາວທີ່ຮຽນໜັງສືຫ້ອງທີສອງນ້ອຍຢູ່ໂຮງຮຽນບ້ານຄາຍ...ຈຶ່ງຂໍສະແດງຄວາມຊື່ນຊົມ ແລະຍ້ອງຍໍສັນລະເສີນ ຕໍ່ອາຈານຄຳແກ້ວ ທີ່ໄດ້ບັນທຶກເອົາບົດໂອ້ລົມຂອງຄູເກົ່າ (ທ່ານຄູຄຳພວງ ດາລາແສນ) ໄວ້ເປັນພື້ນຖານແລ້ວ ປັບປຸງຮຽບຮຽງລຽງລຳດັບໜ້າວຽກທີ່ຕົນ ແລະໝູ່ຄະນະຮັບຜິດຊອບ ຊຶ່ງພະຍາຍາມລິເລີ່ມຈົນໄດ້ຮັບຜົນສຳເລັດໃນ ພື້ນຖານມາບັນຈຸໄວ້ໃນປຶ້ມມູນເຊື້ອເຫຼັ້ມນັ້ນ

ການສ້າງປຶ້ມນັ້ນ ເໝືອນກັບວ່າ ອາຈານ ຄຳແກ້ວ ພິມມະສອນ ໄດ້ຈຸດປະກາຍໄຕ້ທຽນ ຫຼືແປກເຫຼັ້ມນ້ອຍໆພໍໃຫ້ມີແສງຮຸ່ງມົບໆ ມຽງໆ, ໄວ້ຖ້າຜູ້ອື່ນທີ່ມີຄວາມປະສົງຢາກຈະເອົາທຽນເຫຼັ້ມບາດ, ແປກດ້ອນໃຫ່ຍ ຫຼືໄຟຟ້າມາຊ່ວຍສ່ອງແສງອອກໄປໃຫ້ກວ້າງ ຂວາງກວ້າງໄກ ສະຫວ່າງສະໄຫວຮຸ່ງເຮືອງເຫຼືອງເຫຼື້ອມ.

ຂ້າພະເຈົ້າ ໃນຖານະເປັນໜຶ່ງໃນຈຳນວນນັກຮຽນຫ້ອງທີສອງນ້ອຍ (ປ.4) ຮຸ່ນທຳອິດຂອງໂຮງຮຽນບ້ານຄາຍ ທີ່ມີທ່ານຄູ ຄຳພວງ ດາລາແສນ ເປັນຜູ້ສອນວິຊາຄວາມຮູ້ໃຫ້ (ຕອນນັ້ນເພິ່ນເອີ້ນວ່າທ່ານຄູ) ໃນສົກຮຽນປີ 1956-57 ຊຶ່ງເປັນປີທີ່ເລີ່ມມີຫ້ອງທີສອງນ້ອຍທຳອິດໃນຕາແສງນີ້.ຂ້າພະເຈົ້າຈຶ່ງຂໍເລົ່າປະສົບການຊີວິດຂອງຕົນຝາກໄວ້ໃນທີ່ນີ້ເພື່ອວ່າຈະໄດ້ເພີ່ມແສງທຽນ ເຕີມໄມ້ແປກທີ່ມີແລ້ວໃຫ້ຮຸ່ງເຮືອງຕໍ່ໄປ ແລະຊ່ວຍສ່ອງເຍືອງໃຫ້ທ່ານຜູ້ອ່ານໄດ້ຮູ້ເຫັນບາງແງ່ມູມໃນອະດີດຂອງນັກຮຽນເກົ່າ.

ຂ້າພະເຈົ້າ ເປັນຄົນທ້ອງຖິ່ນດິນເກີດ ຢູ່ບ້ານນາໄຊ ເມືອງຄູນພຸ້ນ (ໃນລະບອບເກົ່າທີ່ວ່າການປົກຄອງແຂວງຊຽງຂວາງ ແມ່ນຢູ່ເມືອງຄູນ) ແຕ່ເມື່ອໄດ້ອ້າຍເຂີຍເປັນທ່ານຄູໃຫຍ່ (ທ່ານຄູຄຳພວງ ດາລາແສນ) ພາຍຫຼັງຈົບຫ້ອງທີສາມຢູ່ບ້ານແລ້ວ ພໍ່ແມ່ກໍເລີຍໃຫ້ຂ້າພະເຈົ້າຍ້າຍໄປຮຽນຕໍ່ຢູ່ບ້ານຄາຍນຳອ້າຍເຂີຍຄູໃຫຍ່ ເພື່ອໄປຢູ່ເປັນເພື່ອນເອື້ອຍກົກ ຜູ້ເປັນໃພ້ໃໝ່ ທີ່ລົງເຮືອນໄປຢູ່ນຳຜົວ ເອື້ອຍຊື່ ນາງຄຳເນີງ ເພັດລຸນນະວົງ ຫຼືແຖບຄັງຄາຍເອີ້ນວ່າ ແມ່ໄຊ..ແມ່ໄຊ..! ໃຜໆລົ້ງ ແກວ່ນແມ່ນເຄີຍ.ເຖິງວ່າເອື້ອຍຈາກໄປແລ້ວ ແຕ່ຄຸນງາມຄວາມດີຂອງເອື້ອຍ ຍັງຢູ່ໃນຄວາມຊົງຈຳຂອງພີ່ນ້ອງທຸກຄົນ.

ການໄປຮຽນຢູ່ບ້ານຄາຍນັ້ນ ໄດ້ໃຊ້ຄວາມມານະ ອົດທົນສູງຫຼາຍເຊັ່ນວ່າ: ຕອນເຊົ້າໄດ້ຫໍ່ເຂົ້າແລ້ວ ກໍ່ຕ້ອງຍ່າງແຕ່ບ້ານຄັງມອນ (ບ້ານແປ້ນ) ໄປຮຽນ ຢູ່ບ້ານຄາຍ ຄ່ຳມາກໍ່ຍ່າງກັບມານອນຢູ່ເຮືອນໃຫ່ຍບ້ານແປ້ນ ໃຜຊິວ່າໃກ້ສ່ຳໃດກໍຕາມ ແຕ່ສຳລັບຕົນເອງເວລານັ້ນແມ່ນໄກທີ່ສຸດ, ເພາະບໍ່ເຄີຍໄດ້ຍ່າງໄກປານນັ້ນມາກ່ອນ.(ເມື່ອຮຽນຢູ່ເມືອງຄູນ ແຕ່ເຮືອນຂອງຕົນໄປຫາໂຮງຮຽນມີແຕ່ 700 -800 ແມັດເທົ່ານັ້ນ) ດີແຕ່ວ່າໄດ້ຍ່າງນຳກັນຫຼາຍຄົນເປັນຕົ້ນ ມີເອື້ອຍຫຼ້າ ບົວໄຂ, ທ້າວອຸດທາ, ທ້າວຫຼ້າ ເມື່ອຍ່າງໄປຮອດບ້ານຮ້າງ ບ້ານມວນ ກໍ່ມີໝູ່ເພື່ອນເພີ່ມຂຶ້ນ, ໝູ່ທີ່ຈື່ໄດ້ກໍ່ແມ່ນ ສີໄວ ອຸດທະຈັກ ວັນສີ...ເວລາມ່ວນມາຕາມທາງກໍ່ອ່າວສວາຍແດ່ ມື້ອາກາດດີກໍ່ແວ່ກິນໝາກທຸ່ມ,ໝາກຂີ້ມ້ອນ, ໝາກເໜືອດ, ໝາກຖັດກາງ ກິນແລ້ວແຂ້ວດຳ ກໍ່ຫຍີ່ງແຂ້ວຍອກກັນ ບາດມ່ວນມາຄັກໆ ກໍ່ແລ່ນປະກັນ...ໂອ້ຍຈັ່ງແມ່ນເມື່ອຍ, ຈັ່ງແມ່ນມ່ວນ...

ໜ້າອິດສາແຕ່ ພູມີ ທິບພະວອນ ເພິ່ນຢູ່ບ້ານແກ່ວ ຕິດກັບບ້ານຄາຍ ໃກ້ໆຮອດໂມງຈຶ່ງເຫັນເພິ່ນພາຍຖົງແດງແລ່ນຂຶ້ນມາຫ້ອງຮຽນ.ຍັງຈື່ໄດ້ວ່າອ້າຍເຂີຍຂອງຕົນຈັກເອົາໃຈໃສ່ແນວໃດ ຈຶ່ງໃຫ້ຕົນມານັ່ງແຖວໜ້າ, ນັ່ງກາງລະຫວ່າງ ພູມີ ແລະສີໄວ, ດ້ານໜຶ່ງພວກຂ້ອຍທັງສາມກໍ່ເປັນຜູ້ອ່າວນ້ອຍແດ່ ຜູ້ໃຫຍ່ເພິ່ນກໍ່ຈັດໃຫ້ນັ່ງໄປຕາມລຳດັບດ້ານຫຼັງ. ຕອນແລງເມື່ອເລີກໂຮງຮຽນແລ້ວກໍ່ພາກັນຍ່າງເປັນພຶງກັບຄືນ, ອອກຈາກໂຮງຮຽນອ່າວຫຼາຍຄົນແດ່ ແຕ່ໄປຮອດແຕ່ລະບ້ານກໍ່ໜ້ອຍລົງໆ ຕົນພ້ອມເອື້ອຍບົວໄຂ ທ.ອຸດທາ ທ. ຫຼ້າ ເປັນຈຸສຸດທ້າຍ



ສິ່ງທີ່ເຫງົາ ແລະຢ້ານທີ່ສຸດໃນຊີວິດ ໄລຍະທຳອິດແມ່ນເວລານອນ ເຮືອນໃຫຍ່ທີ່ບ້ານແປ້ນ ເປັນເຮືອນເສົາຕັ້ງ ແອ້ມແປ້ນ ມຸງສັງກະສີ ເພິ່ນຂັ້ນເປັນຫ້ອງນອນເບື້ອງຕາເວັນອອກສອງຫ້ອງ ເບື້ອງຕາເວັນຕົກສອງຫ້ອງ ລວມເປັນສີ່ຫ້ອງ ຢູ່ສອງສົ້ນເຮືອນ ຈຶ່ງຫ້ອງໂຖງໄວ້ທາງກາງເຮືອນ ຫ້ອງທີໜຶ່ງແມ່ນຫ້ອງຂອງພໍ່ເຖົ້າແມ່ເຖົ້າ ຫ້ອງທີ່ສອງແມ່ນຫ້ອງຂອງປ້າແລະລຸງໃຫຍ່ ຫ້ອງທີສາມແມ່ນຫ້ອງຂອງເອື້ອຍຄຳເມີງ ແລະອ້າຍເຂີຍ ຫ້ອງທີສີ່ແມ່ນຫ້ອງຂອງເອື້ອຍບົວໄຂ (ນ້ອງສາວຫຼ້າທ່ານຄູ) ຄ່ຳມາກິນເຂົ້າແລງແລ້ວ ແຕ່ ລະຄົນກໍເຂົ້າຫ້ອງໃຜຫ້ອງລາວ ອັດຕູກົ່ມກ່າໆ ມອດແປກ ມອດທຽນແລ້ວ ຕ່າງຄົນຕ່າງຫ້ອງກໍນອນມິດຊ້ອຍມ້ອຍ ປ່ອຍໃຫ້ຂ້ອຍນອນຜູ້ດຽວຢູ່ຫ້ອງໂຖງ ຫຼືຫ້ອງຫ່ອງ, ເພາະຮີດຄອງປະເພນີ ຖືວ່າຕົນເປັນຄົນນອກ, ບໍ່ໄດ້ນອນໃນຫ້ອງຄືຜູ້ອື່ນ...

ຂ້ອຍນອນກິ້ງໄປກິ້ງມາຢູ່ເທິງຕຽງໃນຫ້ອງນອກທີ່ວ່າງກວ້າງມືດ ບໍ່ຢາກເຫັນຄວາມມືດ ກໍມີແຕ່ນອນຫຼັບຕາ ເອົາຜ້າຫົ່ມປົກຫົວ ຄິດເຖິງພໍ່ແມ່ ເອື້ອຍນ້ອງ ທີ່ຢູ່ນາໄຊ ເມືອງຄູນພຸ້ນ ນອນຢູ່ເຮືອນພື້ນແປ້ນ ຝາແປ້ນເໝືອນກັນ ຕ່າງແຕ່ເຮືອນຂອງຂ້ອຍຢູ່ພຸ້ນມຸງດ້ວຍແປ້ນ ມີຄວາມອົບອຸ່ນ. ຂ້ອຍເຄີຍນອນກາງເຄິ່ງ (ເຄິ່ງກາງ) ທຸກໆຄືນ ນຳພໍ່ແມ່, ນຳເອື້ອຍ (ເອື້ອຍຄຳເມີງ+ເອື້ອຍຄຳຈັນ) ເມື່ອເອື້ອຍໄປເປັນໃພ້ເພິ່ນຄວາມໃຈນ້ອຍ ຄວາມນ້ອຍໃຈ ກໍຍັງຢາກນອນຢູ່ກາງເຄິ່ງອີກ ເບື້ອງຊ້າຍແມ່ນເອື້ອຍຈັນ + ເບື້ອງຂວາແມ່ນເອື້ອຍເມີງ...(ຄືນທຳອິດນັ້ນ ຂ້ອຍຄິດວ່າເອື້ອຍບົວໄຂຈະເປັນຜູ້ພາຂ້ອຍເຂົ້ານອນນຳເພິ່ນໃນຫ້ອງ ເພາະມີແຕ່ເພິ່ນນອນຜູ້ດຽວ ຄວາມຄິດຍາມຍັງນ້ອຍຂອງຂ້ອຍບໍ່ທັນຮູ້ຮີດຄອງຂອງແຕ່ລະທ້ອງຖິ່ນ...ນີ້ບໍ່ຮີດຄອງປະເພນີ ???



ເດິກດື່ນມາເທົ່າໃດຍິ່ງເຫງົາ, ຍິ່ງໜາວພິກຄິງໄປພິກຄິງມາເທິງສາດ ຫຼື ພຸຫຍ້າລວງ ທີ່ປູເທິງຕຽງເຮັດໃໝ່ໆໃຫ້ຕົນເປັນພິເສດນັ້ນ, ແຕ່ຟ້າເອີຍຄວາມຢ້ານຂອງເດັກນ້ອຍ..ຢ້ານຕາມ ຢ້ານ ຊ້ຳພັດໄດ້ຍິນນົກຕົບເຫຼັກຮ້ອງຕອນເດິກ "ຕົກ ປົກ.ປົກ.. ປົກ..ໆໆ" ໂອຍ! ເກີນຈັ່ງແມ່ນຢ້ານ ຢ້ານຕາມ ຢ້ານກໍເລີຍຫຼັບ ຕາມຄວາມຢ້ານແລະຄວາມເຫງົາ ພາໃຫ້ຕົນຄິດບໍ່ຢາກໃຫ້ມີຮອດຕອນຄ່ຳ ໂສຂໍປຽນເປັນເວລາຍ່າງຮ່ວມໝູ່ໄປຮຽນມາຮຽນ ຄືຈະດີກວ່າ

ແຕ່ຄືນທີ່ມ່ວນທີ່ສຸດຢູ່ຄັງມອນນີ້ ກໍແມ່ນຄືນທີ່ເພິ່ນມາຕີກອງຄູ່ ຢູ່ວັດຄັງມອນ ເພິ່ນເອີ້ນວ່າບຸນບ້ານ ເພິ່ນຕີກອງເພື່ອນຳຄວາມອຸດົມສົມບູນມາສູ່ບ້ານ ຕີໄລ່ນົກໄລ່ໜູບໍ່ໃຫ້ມາກິນເຂົ້າເຄື່ອງປູກຂອງຝັງ. ຕອນຫົວຄ່ຳຂ້ອຍກໍໄດ້ໄປທ່ຽວບຸນ ນຳເອື້ອຍບົວໄຂໄຕ້ແປກເລາະປາງບຸນ ເຫັນບາງບ່ອນເພິ່ນກໍໄຕ້ໂຄມມັງຊົງ ບາງບ່ອນເພິ່ນກໍໄຕ້ຫຼົວ ບາງບ່ອນກໍໄຕ້ທຽນໄຂ ໄຕ້ກະຕຽງນ້ຳມັນກາດ...ເລື່ອງເຂົ້າປຸ້ນບໍ່ຕ້ອງຊື້ ເພາະເພິ່ນເຮັດມາຄ້ຳພີ່ນ້ອງ ຢາກກິນ ນຳໃຜກໍຊິມໄປໂລດ ບໍ່ມີຊື້ ບໍ່ມີຂາຍ ບາງບ່ອນກໍລຳພອນຕອບກັນຕາມຜະຫຍາທີ່ກຽມໄວ້. ເດິກໆມາເທົ່າໃດ ສຽງກອງຄູ່ກໍຍິ່ງດັງແຮງຂຶ້ນ ຂ້ອຍທົນຍ່າງໄປຍ່າງມາບໍລິເວນນັ້ນບໍ່ໄດ້ຍ້ອນສຽງດັງ ແລະຄວາມສັ່ນສະເທືອນ ເມື່ອຕົນສະຫຼະໄດ້ຍິນໄດ້ຟັງ ກໍປຽບສະເໝືອນວ່າຕັບຈະແຕກພຸ້ນລະແມ (ເພາະຢູ່ທາງເມືອງຄູນ ບໍ່ເຄີຍໄດ້ຍິນຈັກເທື່ອ) ເມື່ອກັບໄປນອນກໍດີໃຈວ່າ ຄືນນີ້ບໍ່ຢ້ານອີກແລ້ວ.



ແຕ່ຟ້າເອີຍ...ສຽງກອງຈົ່ງແມ່ນພິລຶກ...ເດັກນ້ອຍກໍຫຸບຫວຍເປັນ ນອນບໍ່ໄດ້ຈຶ່ງລຸກມາຫາພໍ່ເຖົ້າແມ່ເຖົ້າທີ່ນັ່ງຜິງໄຟຢູ່ເຮືອນຄົວ(ເປັນຫຼັງໜຶ່ງຕ່າງຫາກຕິດເຮືອນໃຫຍ່) ພໍ່ເຖົ້າແມ່ເຖົ້າ ກໍເວົ້າວ່ານອນບໍ່ຫຼັບຍ້ອນສຽງກອງນັ້ນແຫຼະ ມື້ອື່ນເຊົ້າຈິ່ເອົາໄຂ່ໄກ່ຢູ່ຮອກທີ່ແມ່ມັນພວມພັກຢູ່ ທີ່ນັ້ນມາຕົ້ມໃຫ້ກິນ ແລະເອົາໄປໂຮງຮຽນ. ຕົນເອງຖາມວ່າ ຖ້າແມ່ມັນຟັກແລ້ວຕົ້ມມັນ ເຮັດຫຍັງ? ເພິ່ນຕອບວ່າຖ້າປະໄວ້ ບໍ່ຕົ້ມມັນກໍບໍ່ເບາະອອກມາເປັນໂຕດອກ ມັນເປັນໄຂ່ຮ່ວານໝົດແລ້ວ ຍ້ອນສຽງກອງສັ່ນສະເທືອນຕະຫຼອດຄືນ ຕົນຈຶ່ງຄິດໃນໃຈວ່າ ໂອ ! ແຮງປານນີ້ນໍ ? ສົມພໍດອກຫຼານຈຶ່ງນອນບໍ່ໄດ້ ພໍ່ເຖົ້າຈຶ່ງເວົ້າຕໍ່ໄປວ່າ:"ບໍ່ວ່າແຕ່ນອນບໍ່ໄດ້ ນອນໄປຫົວຍັງຕົກໝອນ ເສັ້ນເຂົ້າປຸ້ນຍັງເຕັ້ນອອກຊາມ ພຸ້ນແຫຼ້ວ !!!

1 ປີທີ່ໄດ້ຮຽນຫ້ອງທີສອງນ້ອຍຢູ່ບ້ານຄາຍ ແມ່ນ 1 ປີແຫ່ງການຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ຮຽນຮູ້ຊີວິດຈິງ ໃນເງື່ອນໄຂທີ່ແຕກຕ່າງກັນ ລະຫວ່າງຊົນນະບົດແລະໃນເມືອງ (ຊົນນະບົດຂອງເມືອງນອກ ແລະນອກເມືອງ) ເປັນ 1 ປີທີ່ມີຄຸນຄ່າສິ່ງຜົນດີມາເຖິງປັດຈຸບັນ ເພາະເໝືອນດັ່ງໄດ້ຜ່ານຫຼັກສູດຊີວິດ, 1 ປີທີ່ເຮັດໃຫ້ຕົນເອງໄດ້ມີທັດສະນະແຮງງານ, ທັດສະນະມະຫາຊົນ ແລະມີຄວາມມານະອົດທົນສູງຂຶ້ນ

ດັ່ງນັ້ນ ດ້ວຍຄວາມກະຕັນຍູຮູ້ບຸນຄຸນ ຂອງບັນພະບຸລຸດ ພໍ່ແມ່ພີ່ນ້ອງ ແລະຄູບາອາຈານ ດັ່ງນັ້ນ ຂໍປະຕິຍານໄວ້ ໃນປຶ້ມອະນຸສອນເຫັ້ມນີ້ວ່າ: ເຖິງຈະບໍ່ດັງ ແຕ່ກໍ່ຂໍເປັນຄົນດີຂອງພໍ່ແມ່ພີ່ນ້ອງ,ໄດ້ກິນບໍ່ລືມຖູ່ໄດ້ຢູ່ບໍ່ລືມບຸນຄຸນ ຂໍເທີດທູນມູນເຊື້ອອັນດີງາມຂອງໂຮງຮຽນບ້ານຄາຍ(ຍອດງື່ມ) ໄວ້ໃນຄວາມຊົງຈຳຕະຫຼອດໄປ.



## *ເຂົ້າ*

*ໂດຍ: ດາລາ ກັນລະຍາ*

..........................................

*ງາມເດ ນາທົ່ງກວ້າງ*
*ຄືຄຳສຸກ*
*ຍາມເມື່ອຮວງໄກວຕ້ອງ*
*ງາມກ່ຽວກ້ຽວ*

*ເຂົ້າແກ່ເຫຼືອງຕອງ*
*ເຣື່ອເຣືອງແດນດ້າວ*
*ແສງສົນສອດກ່າຍ*
*ກຳເຂົ້າແກ່ນມື*

*ເມັດອ່ອນອ້ວນ*
*ບູຮານສອນ*
*ຍາມເມື່ອເຮົາກິນແລ້ວ*

*ຜົນແຜ່ສົມບູນ*
*ໃຫ້ຮັກບຸນຄຸນເຂົ້າ*
*ຈົ່ງຍໍມືກອຍກ່າວ ສາທຸ !*

## ຂອບໃຈ

*ສຸດທີ່ຕົນແປດເປື້ອນ*
*ແຕ່ວ່າຄຸນຄວາມດີ*
*ນີ້ລະ ແຮງຊູຊວ້ານ*
*ຂອບໃຈ ຂອບໃຈຄຸນຜູ້ເຈົ້າ*

*ໝອງໝົ່ນມົວສີ*
*ບໍ່ມຊອນໃນນີ້ວ*
*ແຮງງານຄອງໂລກ*
*ທີ່ດຳເຂົ້າໃສ່ນາ*





## ລູກໃນບ້ານຫຼານເຂດຄັງ-ຄາຍ

ໂດຍ: ສີສົມພູ ບັນທະພອນ

........................................

ຂ້ອຍບໍ່ແມ່ນຄົນອື່ນຄົນໄກທາງໃດດອກ ແມ່ນລູກໃນບ້ານຫຼານໃນຄັງຂອງເມືອງແປກ ເຮົານີ້ເອງ ແມ່ນລູກຊາຍກົກຂອງແມ່ຄຳມີ ນາງິ້ວ(ບ້ານປຸ່ງ)ແລະພໍ່ບຸນຍັງ ບ້ານໝັຽງ (ນາດອນ) ນີ້ແລ້ວ ບຸນບໍ່ຫຼາຍສາຍບໍ່ຍາວ ເມື່ອເກີດມາກໍບໍ່ທັນເຫັນໜ້າພໍ່ຜູ້ໃຫ້ກຳເນີດຊ້ຳ ພີ່ນ້ອງບາງຄົນກໍຊ່າກັນວ່າ: "ມັນແພ້ພໍ່ ພໍ່ຈຶ່ງອາຍຸບໍ່ຍືນ"ຄວາມຈິງແມ່ນພະຍາດໄຂ້ຍຸງໄດ້ມາເອົາຊີວິດຂອງພໍ່ໄປຕັ້ງແຕ່ຂ້ອຍຢູ່ໃນທ້ອງແມ່ໄດ້ 6 ເດືອນ ຕາມແມ່ ແລະພີ່ນ້ອງເລົ່າສູ່ຟັງ ເມື່ອເກີດມາຂ້ອຍເປັນຕາຮັກ ຕາແພງເພິ່ນກໍຕັ້ງຊື່ໃສ່ວ່າ ບ່າຄຳ ! ບ່າຄຳ ຫຼື ບ່າຄຳແພງ ຜູ້ໃດກໍຮັກກໍແພງ ເມື່ອເຕີບໃຫຍ່ ຂຶ້ນມາຮອດປີປາຍເກືອບສອງປີ ກໍໄດ້ຮັບຄວາມອົບອຸ່ນຈາກຈາກພໍ່ຈານອວນ ບ້ານສ້ອນ ເພິ່ນຂານຮັກ ຂານແພງ ຂານລ້ຽງ ຂານດູ ແມ່ລູກພວກຂ້ອຍດ້ວຍຄວາມຈິງໃຈ ຮັກໄຄ່ ຕັ້ງແຕ່ນັ້ນມາ ເຖິງປັດຈຸບັນ ຄອບຄົວຂອງຕົນ ກໍກາຍເປັນຄອບຄົວໃຫຍ່ທີ່ເຕັມໄປດ້ວຍຄວາມຮັກຄວາມອົບອຸ່ນ ໂດຍມີອ້າຍນ້ອງຮ່ວມກັນເຖິງ 9 ຄົນ (ແຕ່ລະຄົນກໍໃຫຍ່ກ້າໜ້າບານ ແລະມີຄອບຄົວມີລູກມີຫຼານທຸກໆຄົນແລ້ວ)

ການເຕີບໃຫຍ່ຂອງຂ້ອຍນອກຈາກພໍ່ແມ່ໃຫ້ຄວາມເອົາໃຈໃສ່ແລ້ວ ລຸງປ້າ ອາວອາ ທັງສອງກໍ່ ສາມຝ່າຍ ຕ່າງກໍເບິ່ງແຍງລ້ຽງດູຕາມປະສາພີ່ໆນ້ອງໆ ໃນທ້ອງຖິ່ນຊົນນະບົດນີ້ແລ້ວ ຂຶ້ນເຮືອນເໜືອກໍປ້າ ໄປເຮືອນໜ້າກໍປ້າ ກໍລຸງ ໄປເຮືອນໃດກໍໄດ້ປັ້ນໄດ້ບ່າຍຫົວປາມ້ອມ ອ່ອມໝົກປາຈາດ ຝາຍປຸ່ງ ຝາຍປັນ ນ້ຳຄາ ນ້ຳຕອງ ລ້ອງນີ້ ແລ້ວ

ເມື່ອເຕີບໃຫຍ່ຂຶ້ນເຖິງອາຍຸເຂົ້າຮຽນກໍໄດ້ເລີ່ມຮຽນ ໂຕ ກ, ໂຕ ຂ... ຢູ່ໂຮງຮຽນອິນແປງແຫ່ງນີ້ ຮອດຫ້ອງທີສາມ (ປ.3), ແລ້ວກໍໄປຮຽນຕໍ່ຫ້ອງທີສອງນ້ອຍ ທີສອງໃຫຍ່ ຫ້ອງທີໜຶ່ງ ຢູ່ໂຮງຮຽນບ້ານຄາຍ (ໂຮງຮຽນ ມ.ສ ໜອງເປັດ ຍອດງື່ມ) ເມື່ອເສັງແຊກໄດ້ແລ້ວກໍໄປເຂົ້າຮຽນມັດທະຍົມຢູ່ຄັງໄຂ ໃນປີ 1966 ຮຽນໄດ້ 2 ປີ ບ້ານເມືອງກໍເລີ່ມເຂົ້າສູ່ສະພາບສົງຄາມ ແຮງຂຶ້ນເທື່ອລະກ້າວ ຕົນ ເອງກໍໄດ້ອົບພະຍົບລີ້ໄພ ໄປຢູ່ຫວຽດນາມເຖິງປີ 1970ກໍມີການລະດົມຊາວໜຸ່ມໄປເປັນທະຫານເພື່ອຮັບໃຊ້ຊາດ ຕົນກໍກັບຈາກຫວຽດນາມມາເຂົ້າທະຫານຮັບໃຊ້ຢູ່ກອງ ບັນຊາການທະຫານເຂດຊຽງຂວາງໃນວັນທີ 23 ພະຈິກ 1970 ເຖິງເດືອນສິງຫາ 1972 ການຈັດຕັ້ງໄດ້ມອບໝາຍໃຫ້ໄປເຮັດວຽກແນວຫຼັງແຂວງວຽງຈັນຈົນເຖິງມື້ຍຶດອຳນາດ 23 ສິງຫາ 1975

ພາຍຫຼັງຍຶດອຳນາດແລ້ວ ກໍໄດ້ສັງກັດຢູ່ກະຊວງພາຍໃນ 1976- 77 ກໍໄດ້ໄປຮຽນວຽກງານຕຳຫຼວດຢູ່ຫວຽດນາມ ປີ 1980 ກໍໄດ້ໄປຮຽນທີ່ໂຊວຽດ ເມື່ອກັບມາຮັບໃຊ້ວຽກງານໄດ້ໄລຍະໜຶ່ງແລ້ວ ກໍໄດ້ກັບໄປຮຽນ ແລະແປພາສາຢູ່ໂຊວຽດອີກ ເມື່ອຮຽນຈົບແລ້ວ ກໍໄດ້ຮັບໃຊ້ວຽກງານຢູ່ກົມ ປ້ອງກັນອາກາດ ກອງທັບປະຊາຊົນລາວ 6 ປີ ເມື່ອມີຄວາມຮຽກຮ້ອງຕ້ອງການເອົາພະນັກງານ ທະຫານ ຕຳຫຼວດລົງເຮັດວຽກຢູ່ພື້ນຖານ ຂ້າພະເຈົ້າກໍໄດ້ຖືກລົງໄປເຮັດວຽກ ພື້ນຖານ ຢູ່ແຂວງວຽງຈັນ ຈົນຮອດອາຍຸກະສຽນເຂົ້າສູ່ບຳນານ ຈຶ່ງພ້ອມກັບຄອບຄົວສ້າງເສດຖະກິດ ຕາມທິດຊີ້ນຳຂອງຂັ້ນເທິງ ການສ້າງເສດຖະກິດຄອບຄົວຂອງຂ້າພະເຈົ້າກໍຖືໄດ້ວ່າເປັນບົດຮຽນໃໝ່ ແລະກໍບໍ່ແມ່ນເລື່ອງງ່າຍດາຍປານໃດ ແຕ່ກໍອົດທົນ ຈຶ່ງຄ່ອຍເຕີບໃຫຍ່ ແລະເຂັ້ມແຂງມາເຖິງທຸກວັນນີ້. ໃນໂອກາດທີ່ດຳເນີນທຸລະກິດ ຢູ່ໃນທ້ອງຖິ່ນດິນຊຽງຂວາງ ອັນເປັນບ່ອນຝັງສາຍແຮ່ແຜ່ສາຍບືນີ້ຕົນເອງກໍໂຊກດີທີ່ສາມາດຜ່ານຜ່າຂໍ້ຫຍຸ້ງຍາກ ນາໆປະການມາດ້ວຍຜົນສຳເລັດຂັ້ນພື້ນຖານ ແລະກໍເປັນໂອກາດດີ ຫຼາຍປີຈົນເກືອບເຖົ້າແລ້ວຈຶ່ງໄດ້ຮັບໂອກາດພິເສດ ຈາກປ້າ ຄຳເມິງ ພ້ອມດ້ວຍຄອບຄົວ ແລະຍາດຕິພີ່ນ້ອງໃຫ້ຮັບຜິດຊອບການພັດທະນາໂຮງຮຽນອິນແປງ(ເຂດຄັງວຽງ)ໃນຄັ້ງນີ້ ຂ້ອຍຖືວ່ານີ້ແມ່ນໂອກາດສຳຄັນຄັ້ງໜຶ່ງ ໃນການທົດແທນບຸນຄຸນ ພໍ່ແມ່ ລຸງປ້າອາວອາ ຄູບາອາຈານໃນທົ່ວເຂດຄັງ - ຄາຍ ເພື່ອໃຫ້ສົມກັບຄວາມໄວ້ວາງ ໃຈຂອງພໍ່ແມ່ພີ່ນ້ອງ ຕົນເອງຂໍຕັ້ງໜ້າເອົາໃຈໃສ່ປະກອບສ່ວນໃນການພັດທະນາຈົນສຸດຄວາມສາມາດ ເພື່ອໃຫ້ລູກຫຼານໄດ້ມີໂຮງຮຽນພຽງພໍ ນັບແຕ່ອະນຸບານຮອດມັດທະຍົມສົມບູນ ໃຫ້ລູກຫຼານໄດ້ຫຼິ້ນກິລາຕາມເງື່ອນໄຂໃໝ່ໃຫ້ດີທີ່ສຸດ ເທົ່າທີ່ຈະເຮັດໄດ້ເຊັ່ນ: ບານເຕະ ບານສົ່ງ ກະຕໍ້ຫວາຍ ຕີບູນ ໆລໆ...

ຂໍສະແດງຄວາມຮູ້ບຸນຄຸນຕໍ່ບັນພະບຸລຸດ ພໍ່ແມ່ ຍາດພີ່ນ້ອງ ທີ່ໄດ້ໃຫ້ຄວາມຮັກແພງໄດ້ລ້ຽງດູດ້ວຍທຸກປັ້ນເຂົ້າ ໝື່ນຫົວປາ ແສນຂາໄກ່ ລວມທັງຄູອາຈານທີ່ໄດ້ອົບຮົມສິດສອນແບ່ງປັນຄວາມຮູ້ໃຫ້ຕົນ. ທຸກຄຳຕັກເຕືອນສັ່ງສອນຍັງຄົງຈາລຶກຈົດຈຳ ແລະເປັນຄະຕິເຕືອນໃຈ ຕະຫຼອດມາ ແລະຕະຫຼອດໄປ.





# ຍອດງື່ມແດນງາມ

**ໂດຍ: ມະນີຄູນ**

........................................................

ເມກໝອກມົວໄຫຼກົ້ວ    ຫຸ້ມຫໍ່ປັດຖະພີ (ແດນໝາວ)
ແດນດິນສີສວຍງາມ    ດັ່ງອິນແປງປັ້ນ (ເນລະມິດສ້າງ)
ມີທັງຄັງ ແລະພູລ້ອມ    ສະອອນເດ້ຍອດງື່ມ
ຂ້ອຍຜູ້ມາພົບພໍ້    ຂໍຍໍຍ້ອງວ່າງາມ    ທ່ານເອີຍ

ອັນໜຶ່ງງາມລື່ນລົ້ນ    ພູຕົ້ນແປກຂຽວຂະຈີ
ມີທັງສາຍວາລີ    ຫຼັ່ງລິນເລີງເລື້ອຍ
ລົງສູ່ໜອງເປັດກວ້າງ    ກາຍໄປເປັນສາຍງື່ມ
ສັບພະຄຸນມາກລົ້ນ    ໂລມລ້ຽງແຜ່ນພູມ

ງາມເດ້ສາຍງື່ມນີ້    ມີຕົ້ນກຳເນີດຢູ່ຄັງຄາຍ
ໄຫຼເລາະລົງຕາມພູ    ສູ່ເວີນວັງຂອງກວ້າງ
ໄຫຼຜ່ານຊຸມຊົນບ້ານ    ທັງເມືອງນ້ອຍໃຫຍ່
ຊຽງຂວາງ ບໍລິຄຳໄຊ    ວຽງຈັນໄຫຼຜ່ານເຂົ້າ
    ເຖິງເຫົ້າທ່ານະຄອນ    ທ່ານເອີຍ

ສາຍນ້ຳງື່ມ ເປັນແຫຼ່ງເທວີ້າ    ຕົ້ນກຳເນີດພະລັງງານ
ຈ່າຍກະແສໄຟໄປ    ສູ່ແດນນະຄອນກວ້າງ
ມີສີສັນໃສແຈ້ງ    ປະດັບເມືອງໃຫ້ເຮືອງຮຸ່ງ
ເຫຼືອນັ້ນຂາຍສົ່ງໃຫ້    ໄປຍັງກຳແກ່ວໄທ    ທ່ານເອີຍ

ຍອດງື່ມລືເລື່ອງໄວ້    ມູນເຊື້ອຊາດຄົນດີ
ລຸງ ພູມີ ວົງວິຈິດ    ຜູ້ແຕ່ງໄວຍະກອນເຄົ້າ
ລຸງເຮົາ ເປັນພວນແທ້    ວີລະຊົນ ກ້າແກ່ນ
ເຮົາລູກຫຼານໃຫຍ່ນ້ອຍ    ຄວນຮູ້ ແລະເທີດທູນ

ຂ້ອຍສຸດແສນສະອອນຍົກຍ້ອງ    ນ້ອງພີ່ຊາວພວນ
ຍ້ອນມີບຸນບາລະມີສູງ    ຈຶ່ງໄດ້ວຽນມາເຫັນຮູ້
ຂໍໃຫ້ສຸກຂີໝັ້ນ    ສະເໜີເດີມສົດຊື່ນ
ເໝືອນດັ່ງຍອດງື່ມນັ້ນ    ມີນ້ຳຕະຫຼອດການ    ທ່ານເອີຍ.



# ການນຳໃຊ້ຫ້ອງສະໝຸດ

ໂດຍ: ແສງຜາເມືອງ

ການທີ່ຈະປູກຝັງ ໃຫ້ເຍົາວະຊົນ ແລະບຸກຄົນທົ່ວໄປໃຫ້ເປັນຜູ້ນຳໃຊ້ຫ້ອງສະໝຸດທີ່ດີ ແລະເຂົ້າໃຈເຖິງຄວາມສຳຄັນແລະຄວາມຈຳເປັນຂອງຫ້ອງສະໝຸດໃນການສຶກສາຄົ້ນຄວ້າວິໄຈ ແລະການພັດທະນາປະເທດຊາດນັ້ນ ຈຳຕ້ອງອາໄສການອົບຮົມຝຶກຝົນໃຫ້ເດັກໄດ້ມີໂອກາດຮຽນຮູ້ ແລະລຶ້ງເຄີຍກັບການໃຊ້ຫ້ອງສະໝຸດຕັ້ງແຕ່ເຍົາໄວ. ເມື່ອເດັກໄດ້ຮູ້ເລື່ອງ ລຶ້ງເຄີຍກັບຫ້ອງສະໝຸດ ແລະມີການອ່ານປຶ້ມຢ່າງສະໝ່ຳສະເໝີແລ້ວ ລັກສະນະນິດໄສເຊັ່ນນີ້ ຕິດໂຕໄປຕະຫຼອດຊີວິດການສຶກສາ ແລະການເຮັດວຽກຂອງເຂົາເຈົ້າ.

ດັ່ງນັ້ນ ການໃຊ້ຫ້ອງສະໝຸດໃນໂຮງຮຽນປະຖົມ ແລະມັດທະຍົມສຶກສາ ຈຶ່ງສຳຄັນຫຼາຍ ຄູຄວນເອົາໃຈໃສ່ຕິດຕາມ ແລະແນະນຳໃຫ້ນັກຮຽນເຂົ້າຫ້ອງສະໝຸດ.

## *ຫ້ອງສະໝຸດແມ່ນຫຍັງ ?*

*ນ້ອງນັກຮຽນທັງຫຼາຍ*
*ທຸກເຊົ້າເຮົາຮີບມາ*
*ເພື່ອຈະເອົາເວລາ*
*ທຸກຄົນຈົ່ງຕັ້ງໃຈ*
*ເພື່ອອ່ານຂຽນ*
*ເມື່ອໃດວ່າງເຮົາທັງຜອງ*
*ປຶ້ມຕຳລາຄືເພື່ອນຮຽນ*
*ນ້ອງນັກຮຽນຢາກຮູ້ເລື່ອງອັນໃດ*
*ປຶ້ມຄືສະເຫຼີຍ*
*ອະທິບາຍໄດ້ເໝືອນຄູ*
*ໜັງສືຄືເພື່ອນແທ້*
*ຈົ່ງຝຶກອ່ານທຸກວັນໄປ*

*ຈົ່ງຊວນກັນຮີບຮ່ຳຮຽນ*
*ກ່ອນເວລາເຂົ້າໂຮງຮຽນ*
*ນັ້ນມາເຂົ້າຫ້ອງສະໝຸດ*
*ເຂົ້າຫ້ອງສະໝຸດ ຫຼື ຫ້ອງຮັກອ່ານ*
*ເປັນນິດໄສປະຈຳວັນ*
*ຄວນທົດລອງຄິດອ່ານຂຽນ*
*ຈົ່ງພາກພຽນອ່ານທຸກວັນ*
*ຄຳຕອບມີໄວ້ໃຫ້ແລ້ວ*
*ທີ່ເປີດເຜີຍເລື່ອງຂ້ອງໃຈ*
*ເຊີນນ້ອງໆຮີບອ່ານດູ*
*ຊ່ວຍແກ້ໄຂບັນຫາຕາມຕ້ອງການ*
*ນ້ອງນັກຮຽນຈະໄດ້ປະໂຫຍດດີ .*

# ມາດຕາບູຮານລາວ
## ຮຽບຮຽງໂດຍ: ກົງເດືອນ ເນດຕະວົງ

.....................................

ອະນຸສອນປະຫວັດຫຍໍ້ຂອງໂຮງຮຽນ ກໍປຽບທຽບທຽມເທົ່າເປັນຕຳລາ ທີ່ຄູອາຈານທຸກຊັ້ນຮຽນພ້ອມພໍ່າກັນຮຽນ ແລະສິດສອນນ້ອງນຸ່ງນັກຮຽນ ໃຫ້ຮູ້ຊຶ້ງເຖິງຄຸນຄ່າຂອງພູມປັນຍານັກປາດອາຈານແຕ່ສະໄໝບູຮານທີ່ສືບ ທອດສອນກັນມາໃຫ້ຈົດຈຳ ແລະເປັນຄວາມຮູ້ໄວ້ຕິດຕົວເມື່ອເຖິງຄາວຈຳເປັນທີ່ຈະໄດ້ນຳໃຊ້.

ເທົ່າທີ່ເຄີຍປະຈັກເຖິງການນຳໃຊ້ມາດຕາຫຼາວັດແທກ ຂອງຄົນລາວເຮົາໂດຍສະເພາະຄົນພື້ນຖານລາວເຮົາໃນປັດຈຸບັນນີ້ກໍຍັງສືບໃຊ້ມາໂດຍຕະຫຼອດ ແຕ່ເຮົາ ຮຸ່ນໜຸ່ມນ້ອຍບໍ່ຄ່ອຍສົນໃຈຫຼືໄດ້ຍິນ ກໍເຮັດຫູກາຍ ຄວາມຈິງຕັ້ງບໍ່ຮູ້ອີ່ຫຼືວ່າຄົນເຖົ້າຄົນແກ່ເພິ່ນໃຊ້ຢູ່ ສຳຄັນອີກດ້ານໜຶ່ງກໍແມ່ນລະດັບການຮຽນ ຂັ້ນສູງທີ່ຫຼາຍຄົນກໍໄດ້ວິ້ງເຕັ້ນຊອກຫາຄວາມໝາຍຂອງການຄິດໄລ່ດັ່ງກ່າວ ນຳຜູ້ເຖົ້າຜູ້ແກ່ ແລະຄູບາອາຈານໃນເມື່ອອ່ານພັບສາໜັງສືໃບລານ ເມື່ອພົບພໍ້ກໍບໍ່ຮູ້ເຖິງຄວາມໝາຍບໍ່ເຂົ້າໃຈ.

ຂ້າພະເຈົ້າເຫັນວ່າ ຄວນຈະຈັດພິມເຜີຍແຜ່ໃຫ້ບັນດາຄູໄດ້ຮຽນຮູ້ໄວ້ ເພື່ອພາຍຂ້າງໜ້າ ອາດເປັນປະໂຫຍດໄດ້ນຳມາໃຊ້ກັນ ແລະກໍເປັນການອະນຸລັກພູມປັນຍາດັ່ງກ່າວໃຫ້ຍືນຍົງຄູ່ກັບຄົນລາວເຮົາຕະຫຼອດໄປ. ຈຶ່ງຢາກຂໍເພິ່ງປຶ້ມອະນຸສອນຫົວນີ້ເປັນບ່ອນເຜີຍແຜ່ໃຫ້ທຸກຄົນໄດ້ຮູ້ນຳກັນ ເຊິ່ງບໍ່ມີໃນປຶ້ມຕຳລາອື່ນທີ່ໄດ້ບັນທຶກໄວ້.

### ມາດຕາປີ

| | | |
|---|---|---|
| ປີໜຶ່ງ | ໑໒ | ເດືອນ |
| ເດືອນໜຶ່ງ | ໓໐ | ວັນ |
| ວັນໜຶ່ງ | ໘ | ຍາມ |
| ຍາມໜຶ່ງ | ໗໐ | ນາທີ ຫຼື ຊົ່ວໂມງເຄິ່ງ |
| ປີໜຶ່ງ | ໓ | ລະດູ |
| ລະດູໜຶ່ງ | ໔ | ເດືອນ ລວມເປັນປີໜຶ່ງ ໑໒ ເດືອນ ອັນດຽວກັນ |

### ມາດຕາໂຍດ

| | | |
|---|---|---|
| ໂຍດຊະນະໜຶ່ງ | ໔໐໐ | ເສັ້ນ |
| ເສັ້ນໜຶ່ງ | ໒໐ | ວາ |
| ວາໜຶ່ງ | ໔ | ສອກ |
| ສອກໜຶ່ງ | ໒ | ຄືບ |

| | | |
|---|---|---|
| ຄືບໜຶ່ງ | ໑໔ | ນິ້ວ |
| ນິ້ວໜຶ່ງ | ໘ | ເມັດເຂົ້າ |
| ເມັດເຂົ້າໜຶ່ງ | ໘ | ເມັດງາ |
| ເມັດງາໜຶ່ງ | ໘ | ໄຂ່ເຫົາ |
| ໄຂ່ເຫົາໜຶ່ງ | ໘ | ເມັດພັນຜັກກາດ |
| ເມັດພັນຜັກກາດໜຶ່ງ | ໘ | ເສັ້ນຜົມ |
| ເສັ້ນຜົມໜຶ່ງ | ໘ | ທຸລີ |
| ທຸລີໜຶ່ງ | ໘ | ອະນຸ |
| ອະນຸໜຶ່ງ | ໘ | ປະຣະມານຸແລ . |

## ມາດຕາຫາບ

| | | |
|---|---|---|
| ຫາບໜຶ່ງ | ໑໐໐ | ນານ |
| ນານໜຶ່ງ | ໑໖ | ຕຳລຶງ |
| ຕຳລຶງໜຶ່ງ | ໔ | ບາດ |
| ບາດໜຶ່ງ | ໔ | ສະຫຼຶງ |
| ສະຫຼຶງໜຶ່ງ | ໑໐ | ຫຸນ |
| ຫຸນໜຶ່ງ | ໑໐ | ຫຼີ້ |

## ມາດຕາຫຼາວັດແທກ (ລາວ)

| | | |
|---|---|---|
| ຫຼາໜຶ່ງ | ໑໐ | ຕືກ |
| ຕືກໜຶ່ງ | ໑໐ | ຫຸນ |
| ຫຸນໜຶ່ງ ໑໐ | ຫຼີ້ | |

## ທຽບເທົ່າຝຣັ່ງ

| | | |
|---|---|---|
| ແມັດໜຶ່ງ | ໑໐ | ເດຊີແມັດ |
| ເດຊີແມັດໜຶ່ງ | ໑໐ | ຊັງຕີແມັດ |
| ຊັງຕີແມັດໜຶ່ງ | ໑໐ | ມິນລີແມັດ |

ໄມ້ຫຼາກັບໄມ້ແມັດສັ້ນຍາວເທົ່າກັນ

| | | |
|---|---|---|
| ຫຼາໜຶ່ງ | ໑໐໐ | ຫຸນ |
| ແມັດໜຶ່ງ | ໑໐໐ | ຊັງຕີແມັດ |

## ສະເພາະນ້ຳໜັກ

| | | |
|---|---|---|
| ຫາບໜຶ່ງ | ໑໐໐ ນານ ນັບເປັນໝື່ນ | |
| ຫາບໜຶ່ງ | ໕ | ໝື່ນ |
| ໝື່ນໜຶ່ງ | ໔໐ | ນານ |
| ຫ້າໝື່ນກໍ | ໑໐໐ | ນານ |
| | ເປັນຫາບ ໜຶ່ງເທົ່າກັນ | |
| ສະຫຼຶງໜຶ່ງ | ໔ | ເຟື້ອງກໍວ່າ |
| ເພາະເຟື້ອງໜຶ່ງ | ໕ | ຫຸນ |
| ສອງເຟື້ອງກໍ | ໑໐ | ຫຸນ |

ລາວເຮົາກໍມີ ເຄື່ອງໃຊ້ປະຈຳຊາດຄົບຖ້ວນຄືກັນຊາດອື່ນໃນໂລກ ຈຶ່ງຄວນອະນຸລັກ ຮັກສາໄວ້ບໍ່ໃຫ້ສູນເສຍ ເພາະ ເປັນເອກກະລັກຂອງຊາດ.

ຂໍຂອບໃຈອາຈານທອງເຊີຍ ອຸທຸມພອນ ຊອກຄັດມາຈາກ ພໍ່ຕູ້ນວນ ທີລະກຸນ ອະດີດພະນັກງານຫໍພິພິທະພັນ ແລະວັດຖຸບູຮານ.



# ປ່າແປກ ພູພຽງ
# ດອກຄາຍ ແລະສາຍນ້ຳ

ໂດຍ: ຫົງເຫີນ ຊຸນພິທັກ

.....................................

ໂອນໍ    ຍາມເມື່ອ ແສງສູນຂຶ້ນ    ພູພຽງພົ້ນພຸ່ງ    ພວນນັ້ນ
ປ່າແປກຂຽວອ່ອນອ້ວນ    ຊູຊ້ອງສະຫວ່າງໄພ
ບາດວ່າລົມລູບໄລ້    ໂອນອ່ອນເອນໄກວ
ຊວ່າ ຊວ່າ ແຊວສານສຽງ    ຄ່ອງຄືເພືອຍຟ້ອນ

ອອນຊອນຄາຍຄົມແຍ້ມ    ສີອອນເນື້ອອ່ອນ
ນວນລະມຸນຄືດັ່ງແກ້ມ    ຂອງນວນນ້ອງໜໍ່ພວນ
ຫອມຮຸ່ຍຮຽງຮ່ວມໃກ້    ໄດ້ໄຂກີບບາງເບົາ    ເຈົ້ານັ້ນ
ເອົ້າອັ່ງໃນມະໂນຫາຍ    ສວ່າງຊຶມເຫງົາງ້ວງ

ພູມພາບຄັ່ງຊຽງກວ້າງ    ສະດຸດຕາເມີນມຸ່ງ    ແລນາ
ໄຫຫີນເອີຍ ..ເຈົ້ານັ້ນຕັ້ງຕະຫງ່ານຟ້າ    ນານລ້ຳໂລກລື
ຄືຄູ່ພົມປູພື້ນ    ຜືນດິນຂຽວຂ້ຳ
ນ້ຳງື່ມລົ້ນຫຼັ່ລ້ຽງ    ຊຽງເຊື້ອໄດ້ຊຸ່ມເຢັນ    ແທ້ນາ

ຍອດງື່ມຍອດແມ່ນ້ຳ    ງາມດັ່ງໃຈນາງ    ແທ້ເດ
ຍອດຍິ່ງຍິງສາວພວນ    ຜູ້ເກັ່ງການສະກັນສູ້
ຜູ້ຖະໜອມແພງເຊື້ອ    ເຄືອພວນພົ້ນເດັ່ນ
ເປັນໜໍ່ແນວຊາດຊັ້ນ    ວີຣະຊົນ ເກັ່ງກ້າ
ຫຼານຫຼ້າສືບສະກຸນ    ນັ້ນນາ

ວັດທະນະທຳນິ່ງເຫງົ້າ    ຮີດເກົ່າປາງປະຖົມ
ນາງບໍ່ເຄີຍລືມໄລ    ພໍ່ແມ່ສອນສານໄວ້
ຍາມເມື່ອມານສູນສິ້ນ    ລາຍສິນນ້ອງຕໍ່ແຕ່ງ
ໃຜໄດ້ແຍງລຳນ້ອງ    ຜືນສະໄບບ່ຽງບ້າຍ
ລາຍສິ້ນຂອງໝ່ອມນ້ອງ    ໃຜກໍຍ້ອງວ່າງາມ

ບ້ານຄາຍຍອດງື່ມນີ້ ຄືຖານຖິ່ນລຸງພູມີ ເຮົານາ
ຍອດແຫ່ງຄົນຄວາມດີ ທ່ານຜູ້ນຳແນວກ້າ
ເຮົາໝູ່ຊຸມຫຼານຫຼ້າ ຈຶ່ງເດີນຕາມຮອຍທ່ານ
ບູຊາການກຽດກ້ອງ ປະນົມນ້ອມເທີດທູນ ທ່ານນາ

ການສຶກສາຄືບ່ອນບັ້ນ ປັ້ນແຕ່ງຄົນດີ
ສາມັກຄີຄືພະລັງ ດັ່ງຄືສາຍນ້ຳ
ວັດທະນະທຳຄືສິນສ້າງ ຜືນດິນຄືພໍ່ແມ່
ຄຸນຄວາມດີຄືໜ່ວຍແກ້ວ ປະດັບຊັ້ນຊາດຄົນ ແທ້ນາ.

..............................

ຍອດງື່ມ ຄັງວຽງເອີຍ !
ຊາດນີ້ ບໍ່ໄດ້ເກີດຮ່ວມທ້ອງ ໄດ້ກິນດື່ມແຕ່ສາຍສິນ (ງື່ມ)
ໄດ້ກິ່ນດົມຫອມຄາຍ ແຕ່ບໍ່ເຄີຍຫອມແກ້ມ
ພໍແຕ່ເຄີຍເຊົາຊົ້ນ ຟັງສຽງສົບໃຕ້ຕົ້ນແປກ
ສຽງຂັບພວນດັງອິ່ນອ້ອຍ ໃຈຂ້ອຍກໍຫວັ່ນໄຫວ

ໄດ້ມາຮຽງຮ່ວມໃກ້ ກໍສິບສ່ວນບຸນສວນ ຂ້ອຍແລ້ວ
ໄດ້ຍິນສຽງຊາວພວນ ກໍແມ່ນບຸນປ່າງກີ້
ໄດ້ມາເຫັນເມືອງບ້ານ ຄັງວຽງ ຍອດງື່ມ
ກໍດ້ວຍບຸນແມ່ປ້າ ປົກປ້ອງເລື່ອມງວຳ ນັ້ນນາ.






ຄວາມຫຼັງຝັງໃຈ ຝາກໄວ້ທີ່

ໂຮງຮຽນມັດທະຍົມ ສຶກສາສົມບູນ ໜອງເປັດ ( ຍອດງື້ມ)

